
ໂຮມເລື່ອງສັ້ນ
ຂອງ ຄຳແພງ ເພັດສະດາວ

ພ.ຈ. ບມ ຕຸ່ປະເທດ.

ໂຮມເລື່ອງສັ້ນ ...

# ອະລຸນ ມື້ໃໝ່

ຄຳແພງ ເພັດສະຫວັງ

ສຳນັກພິມຈຳໜ່າຍສປປ. ລາວ
1978

# ສາລະບານ


| ເລື່ອງ | ໜ້າ |
|---|---|
| 1. ອາລຸນມື້ໃໝ່ | 1 |
| 2. ລາກ່ອນຄວາມຫຼັງ | 15 |
| 3. ຂອງຕ້ອນຈາກໃຈ | 30 |
| 4. ທີ່ເພິ່ງຂອງເຂົາຄາວນັ້ນ | 45 |
| 5. ທຸອ້າຍຜູ້ແທນ | 71 |
| 6. ອ້າຍເຍັນ | 91 |
| 7. ປາບ | 102 |
| 8. ປ້າຍສີແດງ | 125 |

# ອາລຸນມື້ໃໝ່

* ຄຳເຕັມພາຮ່າງອັນລ້າສັນລຸກຂຶ້ນມາປືດເສັ້ນປືດເອັນແຕ່ເດິກ. ເຂົາຫນຶ່ງເຂົ້າປັດກວາດເຮືອນຕາງພໍ່ແມ່ໄດ້ເປັນລະບະສອງສາມເດືອນຜ່ານມາແລ້ວ, ສຳຫລັບມື້ນີ້ ເຂົາລຸກເຊົ້າກວ່າທຸກໆມື້ທີ່ຜ່ານມາ ສິ່ງທີ່ພາໃຫ້ເຂົາລຸກເຊົ້າກວ່າທຸກມື້ນັ້ນ ແມ່ນວຽກງານຫນ້າທີ່ໄດ້ປຸກລະດົມຈິດໃຈຕະຫລອດຄືນ; ເຂົາໄດ້ຮັບຄຳບອກເລົ່າຂອງຫົວຫນ້າຊາວຫນຸ່ມປະຈຳບ້ານ ໃຫ້ເດີນທາງໄປເຮັດວຽກທີ່ຫ້ວຍບ້ານນຸບສົມທົບກັບຊາວຫນຸ່ມທົ່ວເມືອງ, ຄຳເຕັມ ຕຽມເຄື່ອງນຸ່ງຫົ່ມໃສ່ບາໄລພ້ອມດ້ວຍອາຫານ ຊຶ່ງເປັນຂອງແຕ້ງສ່າຫລັບໄປກິນທາງ.

ບັນຍາກາດເຊົ້າມື້ນັ້ນເປັນສົມຄວນ ເຂົານັ່ງອີງບາໄລ

ປູ່ງອກເຊຍ ອ່ວາຍຫນ້າອອກມາສູ່ຖະຫນົນໃຫຍ່ບ່ອນເສັ້ນທາງພວກເພື່ອນຊາວຫນຸ່ມແຕ່ລະບ້ານ ຈະເດີນທາງໄປສູ່ຈຸດນັດຫມາຍ. ສຽງໄກ່ຂັນຍາມເຊົ້າ ດັງບັນເນືອງຫວ່າງຫນຶ່ງນັ້ນຄ່ອຍຈາງຫາຍໄປ, ລິດລາເລີ່ມຫຽວຫາງ ຄວາມມືດພວມຈະຈາກໄປຄວາມແຈ້ງເຄື່ອນເຂົ້າມາແທນທີ່ທຸກວິນາທີ, ທາງເບື້ອງຕາເວັນອອກນະຄອນວຽງຈັນພວມມີແສງສີທອງອ່ອນເບີກຟ້າຂຶ້ນເລື້ອຍ ໆ. ຄຳເຕັມນັ່ງກອດເອິກທັງຈິດໃຈຊ້ຳພັດຮ້ອນຮົນ ຢາກໃຫ້ເວລາເດີນທາງມາຮອດໄວໆ, ເຂົາງວາກຊ້າຍຫລຽວຂວາຊອກຫາຫມູ່ເພື່ອນໃນບ້ານໂຕເອງ ແລະ ບ້ານອື່ນກໍບໍ່ມີຈັກຄົນ. ເຮັດໃຫ້ເຂົາມີທ່າທີຫົນຫວາຍຂຶ້ນແດ່ເລັກນ້ອຍ.

– ຄຳເຕັມໂຕຫນຶ່ງເຂົ້າແລ້ວບໍ ?

– ຮຽບຮ້ອຍແຕ່ດົນ ໂຕເດ ?

– ຫມໍ້ເຂົ້າເຮົາຫາກໍມີອາຍກຸ້ມຫວດ.

– ປະໂຫ້ ! ເຮັດແນວໃດຊິທັນຫມູ່ຣຶບຸນທັນ ?

– ເຮົາວ່າທັນຢູ່ດອກ ຫມູ່ກໍຍັງບໍ່ທັນມາຈັກຄົນປານນີ້.

ບຸນທັນ ເປັນຊາວຫນຸ່ມລາວຣັກຊາດ ຢູ່ເຮືອນໃກ້ກັນລອງຖາມເບິ່ງ. ເຂົາຮູ້ສຶກພາກພູມໃຈຕໍ່ຄວາມກ້າວຫນ້າຂອງຄຳເຕັມ, ຜ່ານມາລະຍະສາມເດືອນເຂົາມີນ້ຳໃຈຫ້າວ

ຫັນ ອົດທົນຕໍ່ຄວາມຍາກລຳບາກ ການອອກເຮັດວຽກຢູ່ທຸກໆບ່ອນໃນຂອບເຂດວຽກງານຂອງຊາວຫນຸ່ມ ກໍຄືວຽກງານທົ່ວໄປກັບປະຊາຊົນ, ເປັນຕົ້ນຂະບວນເຮັດນາແຊງລວມຫມູ່, ສ້າງຝາຍນ້ຳຫມາກຮຽວ, ກ່ອນຫນ້ານີ້ເກືອບສາມປີຜ່ານມາຄຳເຕັມບໍ່ເອົາຫົວຊານຳຂະບວນການອັນໃດທັງຫມົດ, ບໍ່ກ່ຽວກັບການຈັດຕັ້ງໄປປະຊຸມກໍໄປເລື້ອຍ ໆ ແຕ່ໄປພໍໃຫ້ຫມູ່ຈົດຊື່ ແລ້ວ ລັກ ຫນີ ໄປຫາມ່ວນຊື່ນທາງອື່ນ, ບາງເທື່ອກໍອວດຕົນອວດໂຕຢູ່ບ້ານອື່ນຫາວ່າຕົນເອງເປັນຄົນກ້າວຫນ້າ.

ຄຳເຕັມ ພະຍາຍາມຫລົບຫລີກການຈັດຕັ້ງ ຫລົບຫລີກທຸກວຽກງານ, ຕັ້ງຕົນເປັນຄົນເສລີບີຣົວ ຕະຫລອດມານອນຢ່າງຫນ້ອຍ ໔ ໂມງເຊົ້າຈຶ່ງຕື່ນ, ລຸກຂຶ້ນມາກິນເຂົ້າແລ້ວກໍອອກທ່ຽວ, ບັດນີ້ຄຳເຕັມເຂົາກາຍມາເປັນຄົນມີຊີວິດຫັນປ່ຽນກ້າວຫນ້າ ເຫມືອນດັ່ງດວງອາທິດພວມພຸ່ງພົ້ນຈາກຂອບຟ້າ, ວຽກງານຕໍ່ຫນ້ານີ້ເປັນວຽກງານໃຫຍ່ ການເດີນທາງໄປເຮັດວຽກບໍ່ມີລົດຂົນສົ່ງພວກຊາວຫນຸ່ມທັງຫມົດຈະຕ້ອງບາງລະຍະທາງ ໑໗ ກິໂລແມັດ.

ຂະບວນຊາວຫນຸ່ມທົ່ວເມືອງທ້ອນໂຮມກັບປູ່ ນີ ແບກຖນົນຫລວງພະບາງ ແລະ ຖນົນເກົ້າລ້ຽວຕໍ່ໃສ່ກັນ, ທຸກຄົນ

ທີ່ມາປົບປຸ່ຈຸດໝາຍແຫ່ງນີ້ບໍ່ຈຳເປັນຈະຖາມ ກັບ ວ່າ ຈະ ໄປໃສ? ຂະເຈົ້າທຸກຄົນຕ່າງກໍຮູ້ດີວ່າ, ຂະບວນຊາວໜຸ່ມ ທັງຍິງ ແລະ ຊາຍເກືອບສາມຮ້ອຍຄົນທີ່ເຫັນ ໜ້າ ກັນ ຢູ່ ບ່ອນຫນີ້ແມ່ນລ້ວນແຕ່ທ້າວຫານ ອາສາເຮັດວຽກທຸກຢ່າງ ເພື່ອພັກ ແລະ ລັດຮຽກຮ້ອງ.

ຕາເວັນຍາມເຊົ້າ ສ່ອງແສງສີທອງ ອາບໄປທົ່ວທຸກ ບ່ອນ ພໍເປັນພູມພູ່, ສາຍລົມຍາມເຊົ້າພັດເປັນຮູດ ອົ້ມເອົາ ຄວາມໜາວ ເຂົ້າສູ່ຮ່າງກາຍຂອງຊາວໜຸ່ມ ທີ່ຢືນລຽນ ແຖວກັນ ປິ່ນໜ້າໄປຕາມທາງ ເບື້ອງຕາເວັນຕົກ, ແຕ່ລະ ຄົນ ມີບາໂລ, ພົກເຄື່ອງ ແລະ ອຸປະກອນຈຳເປັນ ໃນການໄປ ເຮັດວຽກ, ຂະບວນເຄື່ອນອອກຈາກຈຸດນັດພົບຕາມເວລາ ພໍດີ ເບິ່ງແລ້ວເປັນຫນ້າສະຂອນ ແລະ ກໍຄືທະຫານພວມ ຈະອອກສູ້ຮົບ; ແມ່ນແທ້ໄດ ພວກຂະເຈົ້າບໍ່ແມ່ນທະຫານ, ເຂົາແມ່ນຊາວໜຸ່ມຜູ້ເຂັ້ມແຂງ ພວມກ້າວເຂົ້າສູ່ສະໜາມ ຮົບໃໝ່ ໃນທຸກຂົງເຂດວຽກງານ, ຕາມພັກ ແລະ ລັດຊີ້ນຳ ທຸກຢ່າງ.

ຄຳເຕັນຍ່າງຢູ່ໃນຂະບວນ ຕໍ່ຂະບວນຍິງໜຸ່ມ ພວມ ຖືກບາດກ້າວອອກໄປກ່ອນຢ່າງຫ້າວຫັນ, ບາດກ້າວຂອງ ຂະເຈົ້າ ລົງຖືກພື້ນຖະໜົນປູຢາງ ເປັນບາດ ເປັນຈັງຫວະ

ພ້ອມກັບ. ຄຳເຕັນເປັນພຽງຊາວໜຸ່ມມະຫາຊົນ, ຫາກໍ່ຮູ້ຈັກຊີວິດແທ້ຂອງຊາວໜຸ່ມມາໄດ້ ປີ - ៤ ເດືອນນີ້. ເມື່ອເຫັນຂະບວນເປັນໜ້າອອນຊອນ, ລາວເກີດຄຶກຄັກໃນໃຈຂຶ້ນມາແນວໃດບໍ່ຮູ້, ເຂົາຫລິງຮ້ອງເພງ ຈັງຫວະເດີນ ຖືກບາດຍ່າງ ນ້ຳສຽງຫ້າວຫັນກ້ອງກັງວານ, ຊາວໜຸ່ມທຸກຄົນປະຫລາດໃຈ ເພາະປົກກະຕິເຂົາເປັນຄົນງຽບຂຶມບໍ່ມັກປາກເວົ້າເຮຮາແນວໃດ, ສະເພາະສະຫາຍບຸນທັນຍ່າງປູ່ທາງຫລັງ.

– ຄຳເຕັນ ໂຕມາຊ່າງເປັນຄົນມັກມ່ວນ ຂຶ້ນມາກັບບາດ.

– ບໍ່ໃຫ້ມ່ວນແນວໃດຊີໄດ້, ໂຕເບິ່ງແມ້...ປານວ່າຄືຊີອອກສະໜາມຮົບນີ້ແຫລະ.

– ອ້າຍຄຳເຕັນ ນ້ອງຂໍສະເໜີໃຫ້ອ້າຍຮ້ອງຕໍ່.

– ເພງຫັງງ ?.

– ເພງຫັງງກໍ່ໄດ້.

ສຽງບົງໜຸ່ມຄົນໜຶ່ງ ພວມຍ່າງປູ່ເບື້ອງໜ້າ ຖັດຈາກອີກຄົນໜຶ່ງ ທີ່ຍ່າງປູ່ຕໍ່ໜ້າເຂົາ, ບາງຄົນນົງວາກໜ້າມາເບິ່ງແລ້ວກໍ່ຍິ້ມ ສະແດງຄວາມພໍໃຈຕໍ່ນ້ຳສຽງກັງວານຂອງເຂົາ ຄຳເຕັນເປັນຄົນມັກອາຍປູ່ແລ້ວ ເມື່ອຖືກໜູ່

ເພື່ອນບ່ວະເບົາ ຊ້າພັດຫນ້າແດງ, ຄຶດອາຍຂຶ້ນມາ.

– ເອົາບາ... ຄຳເຕັນມັນຕ້ອງຈັ່ງຊີ້ແຫລະຈຶ່ງສົມວ່າ ຊາວຫນຸ່ມ.

– ອຸ້ບເນາະສ່ຽວ.

– ໂດປູ່ນຳຊາວຫນຸ່ມໄປເລື້ອຍ ຈິເຫັນ ຄວາມ ຄຶກຄັກ ຫົວໃຈໄປ ກ່ອນ ນີ້, ສ່ວນີ້ຍັງວ່າຫນ້ອຍໃດ.

– ແຕ່ວ່າ...

– ບໍ່ແຕ່ວອກແຕ່ວ່າຫຍັງແຫລະ, ຮ້ອງປຸກລະດົມ ເລີຍ, ມັນຈິຮອດບ້ານເກົ້າລ້ຽວແລ້ວເດ.

– ດີກລີງ ໂດເລີ້ມຕົບມືຊ່ວຍເຮົາແດ່ໄດ.

– ເອີບ່າ...

ບຸນທັນສະຫນັບສະຫນູນ ຄຳເຕັນໃຫ້ຮ້ອງເພງຕໍ່ໄປ ເພື່ອປຸກລະດົມຂະບວນຊຶ່ງພວມກ້າວໄປບໍ່ຢຸດຢັ້ງ. ຈາກ ນັ້ນສຽງເພງ "ເດືອນຫັບລີງສູ່ທົ່ງພຽງ" ດັງກ້ອງກັງວານ ຂຶ້ນດ້ວຍນ້ຳສຽງເສາະໃສຈັບອົກຈັບໃຈຂອງທຸກໆຄົນ, ບັນດາສະຫາຍ ທັງຍິງ ແລະ ຊາຍ ຕ່າງກໍອອກສຽງ ຮ້ອງໄປ ຕາມຄຳເຕັນ, ເຮັດໃຫ້ຖະຫນົນສາຍເກົ້າລ້ຽວມີບັນຍາກາດ ຟົດຟື້ນມ່ວນຊື່ນຈົນເຖິງບ່ອນເຮັດວຽກອ່າງນ້ຳມູນ, ບັນດາ ປະຊາຊົນທີ່ໄປຕັ້ງທັບຢູ່ກ່ອນແລ້ວ ເມື່ອເຫັນຂະບວນຊາວ

ໜຸ່ມໄປຮອດໄດ້ໃຫ້ການຕ້ອນຮັບ, ບາງຄົນເຖິງກັບນ້ຳຕາຫລໍ່ເບົ້າດ້ວຍຄວາມດີໃຈ ທີ່ເຫັນລູກຫລານຂອງຕົນມີນ້ຳໃຈບຸກບືນຮັບຜິດຊອບວຽກງານ ປາກສ້າງສາພັດທະນາ-ປະເທດໃຫ້ມີຄວາມສົມບູນພູນສຸກ.

ຮຸ່ງເຊົ້າມື້ຕໍ່ມາ ຄຳເຕັນຖືກຈັດຢູ່ໃນໜ່ວຍ ຂອງຊາວໜຸ່ມໜ່ວຍທີ ໑ ຊຶ່ງມີຄະນະຮັບຜິດຊອບຊາວໜຸ່ມ ເມືອງ ໖ ສະຫາຍເປັນຜູ້ນຳພາ. ມີຊາວໜຸ່ມ ໖ ໝູ່ບ້ານຢູ່ໃນໜ່ວຍດຽວກັນ, ວຽກງານທີ່ຈະເຮັດຕໍ່ໜ້າ ແມ່ນຖາກຖາງປ່າໄມ້ທັງນ້ອຍ ແລະ ໃຫຍ່. ຄຳເຕັນມີຮ່າງກາຍລ້ຳສັນແຂງແຮງສູງໃຫຍ່ຖືກຄັດເລືອກຢືນຢູ່ແຖວໜ້າເພື່ອນທຸກຄົນ, ຂະບວນເຄື່ອນອອກຈາກທີ່ພັກ ຍ່າງລົງສັນພູສູ່ທົ່ງພຽງ ປ່າດົງຍາມເຊົ້າເປັນຕາອອນຊອນ ຈັບຈິດຈັບໃຈ, ປະກອບກັບທິວທັດ ພູມີພາບ ອ່າງນ້ຳມູນ ກໍ່ສວນສົດງົດງາມ, ທັງຂະບວນຊາວໜຸ່ມແລະຂະບວນມະຫາຊົນຍ່າງເຂົ້າສູ່ໜ້າວຽກຢ່າງຍາວຢຽດ, ເຮັດແນວໃດຊິບໍ່ໃຫ້ວຽກງານສຳເລັດລຸລ່ວງໄດ້; ກົກໄມ້ໃຫຍ່ສູງເຈັ້ນເຫັ້ນ, ໜ້າກ້ວາງອາດແຫກໄດ້ສອງແມັດເຖິງທັງເປັນໄມ້ເນື້ອແຂງ, ທຸກຄົນເມື່ອພົບຕົ້ນໄມ້ໃຫຍ່ໂດຈິງຈັ່ງຊີ້ແລ້ວຕ່າງກໍ່ປຸດປືນຊຶງ ຄຳເຕັນຍ່າງອ້ອມໄປວຽນມາຮອບກົກໄມ້ແລ້ວ ເອົາຜ້າຢູ່ໃນມື

ປັກຫມາຍທາງເບື້ອງຫນ້າ, ຈາກນັ້ນ ກໍມາປັກຫມາຍທາງເບື້ອງຫລັງ.

– ຄຳເຕັມໂຕເຮັດຫຍັງຫັ້ນບ່າ...?

– ປັກຫມາຍບ່ອນເລື່ອຍຕັດລະບໍ.

– ເຮັດແນວໃດໂຕຣູ້? ຖ້າລຸງຜູ້ເພິ່ນແນະນຳມາບອກວິທີກ່ອນ.

– ບໍ່ຈຳເປັນນາ... ບຸນທັນຕັດໂລດ ຕົ້ນໄມ້ຕ້ອງຫັກປະມານ ໑໐ ໂມງຢ່າງໄວ ໑໑ ໂມງຢ່າງຊ້າ

– ຢ່ານ້າ.. ເຮົາໄດ້ຫງີນພວກພໍ່ແມ່ ເພິ່ນມາຕັດກ່ອນນັ້ນ, ເພິ່ນບອກວ່າຕົ້ນໄມ້ຕົ້ນນີ້ຕັດຫມົດມື້ ຈັກຊິຫັກບໍ່ຫັກວ່າຊັ້ນໄດ.

ຄຳເຕັມບໍ່ຕອບສະຫາຍບຸນທັນແນວໃດ ເຂົາຫັນໄປປຶກສາກັບຫົວຫນ້າຊາວຫນຸ່ມເມືອງປູ່ຄິນເຕີບ, ຈາກນັ້ນຊາວຫນຸ່ມເມືອງຄິນນັ້ນກໍອອກປາກວ່າ:

– ພວກເຮົາເປັນຊາວຫນຸ່ມ, ທີ່ສະຫາຍຄຳເຕັມແນະນຳນັ້ນເຫັນວ່າຖືກຕ້ອງ ພວກເຮົາຊິມາລໍຖ້າຄະນະຊີ້ນຳບໍນີ້ເກືອບຊິຮອດແປດໂມງເຄິ່ງແລ້ວ.

– ຕົກລົງ!

ສຽງສ່ວນຫລາຍເຫັນພ້ອມກັນ, ຂະບວນຊາວຫນຸ່ມ

ທຸກຄົນຈັດແບ່ງກຳລັງອອກເປັນສອງຈຸ ໆ ທີ່ຫນຶ່ງເລື່ອຍ ແລະ ເອົາຂວານບັກຫນ້າ, ຈຸທີ່ສອງເລື່ອຍຕັດດ້ານຫລັງ, ຄຳເຕັນບອກໃຫ້ບິງຫນຸ່ມທີ່ຢືນຢູ່ຮອບນັ້ນ ໃຫ້ອອກຫ່າງໄກຕົ້ນໄມ້ ເພາະຕົ້ນໄມ້ຕົ້ນນີ້ຕັ້ງຢູ່ແຄມຫ້ວຍ ບໍ່ມີໃບເຫລືອຄ້າງຈັກໃບ, ຈາກຫນ້າດິນຂຶ້ນໄປພຽງສອງແມັດປາຍກົກໄມ້ແບ່ງເປັນສອງຊອງ, ແຕ່ລະຊອງແຫກໄດ້ ມີ ອູ້ມ ສຽງເລື່ອຍ, ສຽງຂວານ, ສຽງຮ້ອງເພງດັງຟົດສະຫນັ່ນຢູ່ກາງປ່າທ່າມກາງແສງແດດເຜົາອົບຮ້ອນເອົ້າ, ທຸກຄົນປຽກຊຸ່ມໄປດ້ວຍເຫື່ອ, ສັບປ່ຽນກັນເຂົ້າອອກບໍ່ມີຜູ້ໃດຫນຶ່ງເມື່ອຍເອື່ອຍອື່ງ, ໃນຂະນະລະດົມເຮັດວຽກຢູ່ນັ້ນ ມີແມ່ເຖົ້າຄົນຫນຶ່ງ ຍ່າງມາປຸດຢືນຢູ່ແຄມຫ້ວຍ ໃກ້ກັບ ພວກຊາວຫນຸ່ມພວມເຮັດວຽກຢູ່ນັ້ນ ລາວໄດ້ຮ້ອງມາໃສ່ວ່າ:

– ປຸດໃດພວກລູກຫລານ

ຂະບວນເລື່ອຍຕົ້ນໄມ້ປຸດສະຫງັກລົງກັບບາດ. ສາຍຕາແຕ່ລະຄົນສຸມໃສ່ແມ່ເຖົ້າຄົນນັ້ນ, ທຸກຄົນບໍ່ຮູ້ວ່າຈະເຮັດແນວໃດ, ແມ່ເຖົ້າດຶງຜ້າແພຂາວອອກຈາກຫົວແລ້ວເວົ້າວ່າ:

– ຕົ້ນໄມ້ຕົ້ນນີ້, ມັນຢູ່ແຄມນາແມ່ງ ປ້ານມັນຫັກທັບນາຊິເຮັດບໍ່ໄດ້ປີຫນ້າ ແມ່ໄດ້ຂໍນຳເພິ່ນແລ້ວ!.

– ຊິໃຫ້ພວກລູກເຮັດແນວໃດແມ່ ?

– ຕັດກໍດີແລ້ວ ແຕ່ວ່າຢ່າໃຫ້ມັນຫັກທັບນາແມ່ກໍ່ເປັນໜໍ.

ແມ່ເຖົ້າຄົນນັ້ນເວົ້າແລ້ວກໍຍ່າງໜີໄປແບບບໍ່ຫ່ວງຟ້າຫ່ວງໄຟ, ປ່ອຍໃຫ້ກຳເຕັນປືນເຊື້, ເຂົາແລ່ນນຳຫລັງແມ່ເຖົ້າຄົນນັ້ນໄປໄກເຕີບຈຶ່ງທັນ, ເຂົາພະຍາຍາມໃອ້ລົມໃຫ້ຄວາມເຂົ້າໃຈແມ່ເຖົ້າຄົນນັ້ນດົນເຕີບ ແລ້ວ ຈຶ່ງກັບ ມາ ຫາເພື່ອນສະຫາຍພວມນັ່ງກອດຫົວເຂົ່າແບບຄົນຜິດຫວັງຢູ່ນັ້ນ.

– ຈັ່ງໃດກຳເຕັນ ?

– ລົງມືໄດ້ພວກເຮົາ ?

– ແມ່ເຖົ້າຄົນນັ້ນວ່າແນວໃດ ?

– ລາວວ່າ ພວກເຮົາມາປ້ຳກົກໄມ້ກໍດີແລ້ວ ແຕ່ຂໍທານນຳ ຢ່າໃຫ້ມັນຫັກທັບນາລາວ.

– ແລ້ວສະຫາຍຊິເຮັດແນວໃດ ? ເຮົາວ່າກົກໄມ້ມັນຊິລົ້ມໄປທາງນັ້ນໄດ.

– ຮັບປະກັນບ່າ... ພວກເຮົາລົງມືໄດ້.

ຂະບວນອອກແຮງງານຕັດໄມ້ຂອງບັນດາ ຊາວ ຫນຸ່ມພາກັນລະດົມເຂົ້າ ເປັນເທື່ອທີສອງ, ບໍ່ດົນ ສຽງລັ່ນ ຂອງ

ກົກໄມ້ໃຫຍ່ດັ່ງ " ໂກະ " ບາດຫນຶ່ງຈາກນັ້ນກໍມີສຽງໂຮ່ຮ້ອງດັງກ້ອງສະຫນັ່ນເນືອງ, ແລ້ວກົກໄມ້ໃຫຍ່ຕົ້ນນັ້ນກໍ່ຄ່ອຍໆເນີ້ງ ແລ້ວໂຫງ້ນລົງລຽບຮ່ອງນ້ຳ ຕົກລົງໃສ່ ພື້ນດິນຈົນສັ່ນສະເທືອນ, ທຸກຄົນມີຄວາມດີໃຈຢ່າງອັດສະຈັນ ທີ່ສຸດ ເພາະບໍ່ຄິດວ່າ, ຕົ້ນໄມ້ໃຫຍ່ຕົ້ນນັ້ນຈະຫັກລຽບ ຕາມແຄມຫ້ວຍໄດ້, ແຕ່ກໍ່ເປັນໄປ ແລ້ວທຸກຄົນ ມີຄວາມເບີກບານມ່ວນຊື່ນ ກັບຜົນສຳເຫລັດອັນນີ້.

ຂະບວນງານດຳເນີນໄປຢ່າງບໍ່ຢຸດຢັ້ງ ໃນມື້ນັ້ນຕົ້ນໄມ້ຫລາຍສິບຕົ້ນຖືກຕັດລົງເຮັດໃຫ້ບ່ອນທີ່ຈະເປັນບໍລິເວນອ່າງນ້ຳຮາບກ້ຽງໄປທົ່ວທຸກບ່ອນ, ມື້ນັ້ນກາຍເປັນມື້ສຸດທ້າຍ ຂອງຂະບວນງານ ຕາມແຜນ ຂອງ ຄະ ນະຊີ້ນຳວາງໄວ້ນັ້ນວ່າວຽກນີ້ຕ້ອງໃຊ້ເວລາ ໓ ມື້ຈຶ່ງຈະສຳເຫລັດແຕ່ເອົາແທ້ໆແລ້ວກໍ່ເປັນພຽງມື້ດຽວເທົ່ານັ້ນ, ນັບວ່າເປັນນິມິດອັນດີໃນການສ້າງອ່າງເກັບນ້ຳມູນ ທີ່ຈະເປັນບໍ່ເກີດແຫ່ງຄວາມອຸດົມສົມບູນໃນເຂດທົ່ງພຽງວຽງຈັນ.

ບໍລິເວນທີ່ພັກຕອນແລງມື້ນັ້ນ, ຄຶກຄື້ນໄປດ້ວຍ ສຽງກອງສຽງຮ້ອງເພງຕັ້ງແຕ່ກິນເຂົ້າແລ້ວ ພວກ ຂະ ເຈົ້າເຫມືອນກັບບໍ່ມີແນວໃດຈະມີຄວາມສຸກລື່ນໄປຈາກຫລາຍຄົນມາປຸ່ຮ່ວມກັນ, ມີຈຸດຫມາຍປາຍທາງ ອັນດຽວກັນ ມີ

ແນວຄິດເປັນເອກະພາບກັນພ້ອມກັນໄດ່ເຕົ້າບິນເສັ້ນທາງທີ່ແສນຫຸ້ງຍາກ, ແຕ່ມັນກໍ່ມີຄວາມໝາຍປະຫວັດສາດສຳຫລັບຊາດ ແລະ ປະຊາຊົນ. ກອງໄຟໃຫຍ່ທີ່ພວມລຸກວຸ່ງສົງແສງຮຸ່ງເຮືອງປູ່ໃນເວລານີ້ກໍ່ສະແດງເຖິງສັນຍາລັກຄວາມສາມັກຄີ, ຟືນແຕ່ລະໂດ້ນ, ທຸກ ຄົນ ຊອກ ຫາ ມາ ລວມກັນ ແລ້ວ ຈູດ ເຜົາ ໃຫ້ ເປັນ ແສງ ທອນ ໄຟ ແຈ້ງ ສະຫວ່າງຂຶ້ນມາ, ມັນພວມລຸກຊ່ວງຂຶ້ນເລື້ອຍໆບໍ່ມອດ ເປັນຈັກເທື່ອ; ພິທີສະຫລຸບວຽກງານເປີດຂຶ້ນ, ໂດຍຄະນະຊີ້ນຳວຽກງານເຊີນຫມົດທຸກຄົນມາຮ່ວມ ຟັງ ສະ ຫລຸບ ຜົນງານຢ່າງຕັ້ງໃຈ.

ການຄັດເລືອກຕົວບຸກຄົນທີ່ເຮັດວຽກດີເດັ່ນໃນຂະ ບວນມະຫາຊົນ, ຜ່ານພົ້ນໄປທ່າມກາງສຽງຕົບມືຊົມເຊີຍຢ່າງສຸດອົກສຸດໃຈ, ຕໍ່ມາຄະນະຊີ້ນຳ ໄດ້ຊີ້ແຈງເຖິງວຽກງານຊາວຫນຸ່ມວ່າ:

" ຊາວຫນຸ່ມໄດ້ເລືອກເອົາ ບຸກຄົນຕົວຢ່າງ ກັ່ນກອງອອກມາຈາກ ວຽກງານຕົວຈິງ ຢ່າງທໍລະຫົດ ອົດທົນ ສົມເປັນບຸກຄົນຕົວຢ່າງຂອງຊາວຫນຸ່ມແທ້, ໃນຈຳນວນຄົນເກືອບ ມີ ຮ້ອຍກວ່າຄົນນີ້ແມ່ນສະຫາຍ ຄຳເຕັມເປັນບຸກຄົນຕົວຢ່າງ ເຂົາເປັນຊາວຫນຸ່ມມະຫາຊົນ ພວມ

ສ້າງທາງກ້າວຂຶ້ນເປັນຊາວຫນຸ່ມລາວຮັກຊາດຜູ້ຫມັ້ນຄົງ ໃນການສະຫລຸບຜົນງານທ້າຍປີນີ້ ".

- ຄຳເຕັມອອກໄປໄວ. ໄປຢືນ...

- ເຊີນສະຫາຍຄຳເຕັມອອກມາປາກົດຕົວ.

ຄຳເຕັມພາຮ່າງອັນລ້າສັນ, ຍ່າງອອກຈາກບ່ອນຊຸມນຸມໄປໃຈກາງບ່ອນ ກອງໄຟ ທີ່ພວມ ລຸກເປັນແປວທ່ວນໆ. ສຽງຕົບມືດັງກຶກກ້ອງ ໄປທົ່ວຂົງເຂດນັ້ນ, ເດືອນຫງາຍສ່ອງແສງຂາວນວນອາບໄປທົ່ວທຸກແຫ່ງ, ຫົວຫນ້າຮັບພິດຊອບຊາວຫນຸ່ມເມືອງກ້າວອອກມາຈັບມືສະແດງຄວາມດີໃຈ. ຄຳເຕັມຮູ້ສຶກຕື່ນເຕັ້ນ ແລະ ຊາບຊຶ້ງທີ່ສຸດ. ໃນເວລານີ້ ທົ່ວຕົນຕົວເຂົາປະກົດວ່າສັ່ນດ້ວຍຄວາມດີໃຈ, ມັນເປັນຄັ້ງຫນຶ່ງໃນຊີວິດ ທີ່ເຂົາຢືນຄົນດຽວ ຢ່າງມີກຽດສະຫງ່າງາມ, ໃຫ້ຄົນເກືອບພັນຊົມເຊີຍ; ຫົວຫນ້າຊາວຫນຸ່ມເມືອງຈັບໄມໂກລໂຟນແລ້ວໄປຢືນຢູ່ຄຽງຂ້າງຂອງເຂົາເວົ້າຂຶ້ນວ່າ:

" ບໍ່ມີເງິນຄຳເປັນໂກດເປັນຕື້ ຊື້ເອົານ້ຳໃຈຫ້າວຫັນເສຽສະຫລະເພື່ອປະໂຫຍດສ່ວນໂຮມໄດ້, ການ ກະ ທຳ ວຽກງານຕົວຈິງຜ່ານມາ ຂອງ ແຕ່ ລະ ຄົນ, ເປັນຄັນຊັ່ງອັນຖືກຕ້ອງ, ເຮັດໃຫ້ທຸກຄົນມີຄວາມກ້າວຫນ້າໄປເລື້ອຍໆ".

ສຽງຕົບມືຊົມເຊີຍຂອງຂະບວນມະຫາຊົນ ແລະ ຊາວຫນຸ່ມດັງຂຶ້ນອີກ, ນັບວ່າເປັນສຽງອັດສະຈັນອັນຫນຶ່ງໄດ້ປະກາດວ່າ "ອ່າງບ້ານູນຈະເປັນມໍລະດົກ ເປັນອະນຸສອນ ແກ່ຄົນຮຸ່ນຫລັງ, ສິ່ງເຫລົ່ານີ້ຈະບໍ່ສູນຫາຍເປັນຈັກເທື່ອ. ຈະຫນຸ່ມແຫນ້ນຫນັ້ນຄົງໄປຕະຫລອດ ກາລະນານ , ເຫມືອນອາລຸນນີ້ໃຫມ່ບໍ່ມີມື້ສິ້ນສຸດເປັນຈັກເທື່ອ.

# ລາກ່ອນຄວາມຫຼັງ

*"ເຂົາເປັນຕົ້ນສະບັບສອນໃຫ້ຂ້ອຍຮູ້ຄ່າວ່າຮັກ! ແລະເຮັດໃຫ້ຂ້ອຍສູນເສຍທຸກສິ່ງທຸກຢ່າງ" " ນາງຄຳພວງມັກຈະຄິດແນວນີ້ອອກມາສະເຫມີ, ຄວາມອຸກອັ່ງທັ່ງເທອອກມາຢູ່ບໍ່ເຊົາ, ສາຍຕາເລື່ອນລອຍໄປກັບພາບອະດີດທີ່ສຸດແສນລະທົມຂົມຂື່ນ. ນາງຄິດເຫັນໜ້າຊາຍຄົນນັ້ນເທື່ອໃດ ຕາມຫົວໃຈຂອງນາງ ພໍ່ປາກຈັບເອົາມີດປາຍແຫລມແທງເອົາຫນາກຫົວໃຈຂອງເຂົາ ອອກມາຟັກເປັນຕ່ອນ, ເພື່ອໃຫ້ສົມໃຈແຄ້ນ ທີ່ເຂົາໄດ້ກະທຳ ຄວາມເຈັບແຄ້ນແຫນ້ນອັ້ງໄວ້ກັບຕົວນາງ.

ນາງຄຳພວງເກີດຢູ່ສະຫວັນນະເຂດ ເປັນລູກຂ້າລາຊະການຊັ້ນຕ່ຳສຸດ ຢູ່ໃນກຳແພງນະຄອນ ເມືອງສະຫວັນ

ນະເຂດ, ແມ່ຕາຍແຕ່ອາຍຸໄດ້ ໗ ປີ. ນາງຮຽນຫນັງສືເສັງແຊກໄດ້ແຕ່ບໍ່ມີໂອກາດຮຽນຕໍ່ຊັ້ນ ມັດທະຍົມ ນຳເຂົາ. ພໍ່ແຕກເນື້ອສາວວິຖີ ຊີວິດຂອງນາງໄດ້ປ່ຽນຫມູນວຽນໄປຕາມບຸກສະໄຫມ, ພະຍາຍາມພືປີກອ່ອນບິນໄປ. ພະຍາຍາມຫລົບຫລີກກະແສລົມພະຍຸໃຫ້ພົ້ນ, ແຕ່ກໍ່ສຸດວິໄສທີ່ນາງຈະພືປີກບິນຜ່ານຜ່າໄປໄດ້. ໃນທີ່ສຸດຊີວິດຂອງນາງກໍຈົມລົງສູ່ເຫວເລິກທີ່ມືດຮອບດ້ານ. ຄຳພວງ ແຕ່ງງານ ກັບຊາຍຄົນຫນຶ່ງ ເຮັດການຢູ່ ປູເສດອັບເປັນອົງການຂອງອາເມລິກາປະຈຳລາວ ສາຂາສະຫວັນນະເຂດ, ການຄອງຮັກຊີວິດໃນຄອບຄົວຫວານຊື່ນໄດ້ພຽງ ໓ ເດືອນ. ຜົວຂອງນາງກໍ່ຖືກຍ້າຍໄປປະຈຳຢູ່ວຽງຈັນ. ແຕ່ນັ້ນເປັນຕົ້ນມາຄວາມຮັກກໍ່ຄ່ອຍຈືດຈາງລົງເທື່ອລະເລັກ ເທື່ອລະຫນ້ອຍຈົນເຖິງຂັ້ນແຕກຫັກ, ຍ້ອນຜົວມາເຫັນຄວາມສີວິໄລແສງສີຫລາຍສີຢູ່ໃນນະຄອນຫລວງ. ເຂົາແຕ່ງງານ ໃຫມ່ ມີຄອບຄົວກັບສາວຊາວວຽງຈັນ, ຄຳພວງຕັດສິນໃຈແຍກທາງເດີນຄົນລະເສັ້ນກັບຜົວຢ່າງລະທົມຂົມຂື່ນ; ນາງຝືນຢູ່ຮ່ວມໂລກກັບເພີນຕະຫລອດມາ. ຕໍ່ມາພໍ່ຂອງນາງຖືກຍ້າຍ ມາເຮັດວຽກຢູ່ວຽງຈັນ, ຄຳພວງຕິດຕາມ ມາຢູ່ນຳພໍ່ເຖິງວ່າແສງສີ ແລະ ກິນອາຍຂອງສັງຄົມນະຄອນຫລວງ

ບຸກໂດລາ ຈະບົວະບອນຫົວໃຈ ໃຫ້ເຕັມຜັນລອຍໄປຕາມ; ແຕ່ນາງພະຍາຍາມຣັກສາເນື້ອຣັກສາຕົວ ຢູ່ໃນຄຳໂອວາດ ສັ່ງສອນ ຂອງພໍ່ຢ່າງເຄັ່ງຄັດ, ຫາກິນດ້ວຍການເກັບຜັກ ນາຂາຍ ພໍຈຸນເຈືອເງິນເດືອນພໍ່ໃຫ້ຄ່າເຊົ່າຕູບຢູ່, ຄ່ານ້ຳ ຄ່າໄຟ ແລະ ຄ່າຣຽນພິມດີດຊຶ່ງນາງຈ້າງຣຽນໃນຕອນແລງ, ນາງ ແລະ ພໍ່ໄດ້ອົດສາດົ້ນຣົນ ເພື່ອເອົາຊີວິດລອດໄປແຕ່ລະ ມື້,ດ້ວຍຄວາມຫວັງວ່າ ມື້ຫນຶ່ງ ຊີວິດຂອງທັງສອງ ຈະ ພົ້ນຈາກຄວາມອົດຢາກ.

ຄືນມື້ຫນຶ່ງ, ເປັນຄືນເດືອນຫງາຍສ່ອງແສງຂາວນວນ ອາບໄປທົ່ວທຸກມູມ ໃນນະຄອນຫລວງວຽງຈັນ, ບໍລິເວນ ບ້ານຂອງນາງ ດວງເດືອນສ່ອງແສງຈົນສາ ມາດຫລຽວ ເຫັນສິ່ງເຄື່ອນໄຫວເຫນັງຕີງຕ່າງໆໄດ້ໃນມູມມືດລະຍະນັ້ນ ປະເທດຊາດໄດ້ຣັບການປົດປ່ອຍມາໄດ້ເກືອບປີ, ສະພາບ ຊີວິດຂອງພະນັກງານ, ກຳມະກອນ ແລະ ປະຊາຊົນພວມ ໄດ້ຣັບການເອົາໃຈໃສ່ ເບິ່ງແຍງຈາກພັກ ແລະ ລັດ, ພໍ່ ຂອງນາງຄຳພວງ ກໍໄດ້ເຣືອນຢູ່ຫລັງໃຫມ່ ຊຶ່ງທາງຂັ້ນ ເທິງມອບຫມາຍໃຫ້ຢູ່ຕາມຫນ້າທີ່ວຽກງານ, ນັບວ່າເປັນ ໂຊກວາດສະຫນາທັງສອງຄົນ ມີຊີວິດຢູ່ຢ່າງມີຄວາມສຸກ, ພົ້ນຈາກຄວາມມືດມົນ ມາເຫັນແສງສະຫວ່າງ ຣ່ວມກັບ

ທຸກໆຄືນ. ແສງໄຟດອກນີອອນຮຸ່ງໄປທົ່ວບອກເຊບເຮືອນ, ສາຍລົມພັດວູ່ມາແຕ່ທາງທິດເໜືອ ຮູດບ່າວໆ ເຮັດໃຫ້ຄວາມຮ້ອນຕອນຫົວຄ່ຳ ຄ່ອຍຈາງຫາຍໄປກັບສາຍລົມ. ນາງຄຳພວງນັ່ງທົບທວນຂໍ້ສອບເສັງ ເມື່ອສອງມື້ຜ່ານມາດ້ວຍໃບໜ້າຕື່ນເຕັ້ນດີໃຈ. ຕອນບ່າຍຜ່ານມານາງໄປຖາມຜົນສອບເສັງແລ້ວປະກົດວ່າ, ນາງໄດ້ຖືກບັນຈຸເຮັດວຽກເປັນພະນັກງານຂອງລັດ, ໃນຂະແໜງພິມດີດແຕ່ຍັງບໍ່ທັນແຈ້ງໃຫ້ພໍ່ຮູ້ເທື່ອ.

– ລູກສອບເສັງເຂົ້າເຮັດການໄດ້ບໍ ?

– ໄດ້ພໍ່ ! ເຮົາວ່າຊິເວົ້າໃຫ້ຟັງແຕ່ຫົວຄ່ຳພຸ້ນ ເລີຍລືມໄປ.

ຄຳພວງຕອບພໍ່ດ້ວຍທ່າທາງຕື່ນເຕັ້ນຕໍ່ຜົນການສອບເສັງທັງຈະມີໂອກາດເຂົ້າເຮັດວຽກງານນຳລັດ, ແຕ່ເວລານັ້ນຖ້າຫາກເປັນຕອນກາງເວັນ, ຈະຫລຽວເຫັນພາບແຫ່ງຄວາມສົດຊື່ນຂອງນາງຄືນມາອີກ. ຜູ້ເປັນພໍ່ກໍແສນດີໃຈຫາອັນປຽບບໍ່ໄດ້, ຄືວ່າທຸກສິ່ງທຸກຢ່າງເບື້ອງຫລັງໄດ້ສູນສິ້ນໄປແລ້ວບໍ່ມີມື້ຊິກັບຄືນມາອີກ.

– ເລີ່ມແຕ່ມື້ໃດໄປເຮັດວຽກ ?.

– ມື້ອື່ນນີ້ແຫລ້ວ ! ຕົ້ນເດືອນພໍດີ.

ຄວາມດີໃຈເຮັດໃຫ້ສອງພໍ່ລູກມີຄວາມຊາບຊຶນຕໍ່ການນຳພາຂອງພັກ ແລະ ລັດ, ຍາມໃດກໍເອົາໃຈໃສ່ເບິ່ງແຍງທຸກຊີວິດໃຫ້ມີຄວາມອຸ່ນອຽນ. ຄຳພວງເຂົ້າປະກອບສ່ວນເຮັດວຽກນຳລັດ, ນາງຕັ້ງຫນ້າຝຶກຝົນຫລໍ່ຫລອມຕົນເອງຮ່ຳຮຽນການເມືອງນຳຜູ້ທີ່ໄດ້ຜ່ານມາກ່ອນ. ຄວາມສົດຊື່ນໃນຊີວິດຂອງນາງເລີ່ມມີທ່າກ້າວຂຶ້ນໄປເລື້ອຍໆ. ນາງທັງຮຽນທັງເຮັດວຽກງານຕົວຈິງໄປພ້ອມຜ່ານ ລະ ບະ ຫນຶ່ງປີມານີ້ ເຮັດໃຫ້ນາງມີທັດສະນະຫລັກຫມັ້ນ, ເປັນຕົວຢ່າງໃນການເຮັດວຽກງານ, ຄວາມເປັນສາວເທື່ອທີສອງໄດ້ຜຸດຜ່ອງເສາະໃສຂຶ້ນເຫມືອນສາວບໍລິສຸດ, ມໍລະສຸມຄ້ງອະດີດໄດ້ລັບຫາຍໄປຈາກຄວາມຊົງຈຳເຫມືອນສາຍນ້ຳໄຫລລົງໄຕ້, ເພື່ອນພະນັກງານທຸກຄົນກໍເຂົ້າໃຈວ່ານາງ ເປັນສາວບໍລິສຸດ, ທີ່ແທ້ເບື້ອງຫລັງທີ່ເສນລະທົມຂົມຂື່ນນັ້ນລະອຽດນາງໄດ້ຂຽນລົງໃນປະຫວັດຫມົດແລ້ວ,ນາງຄົນກໍຮູ້ພໍແຕ່ສົງໃສ, ທີ່ຮູ້ແນ່ນອນແມ່ນຫ້ອງການຈັດຕັ້ງ, ຄວາມເຂົ້າໃຈ ຂອງເພື່ອນຮ່ວມງານ ຂອງນາງ ກໍມີສ່ວນຖືກເຫມືອນກັນ ນາງຄືສາວບໍລິສຸດ ໃນລະບອບໃຫມ່, ປຽບເຫມືອນດອກໄມ້ພວມເບັ່ງບານ, ຮັບເອົາຄວາມອົບອຸ່ນຈາກແສງອາລຸນໃນຍາມເຊົ້າ, ໃນເມື່ອກ່ອນນາງເຫມືອນ

ດອກໄມ້ຢູ່ໃນກະໂຖຕັ້ງຢູ່ໜ້າໂຕະ, ເມື່ອຫ່ຽວແຫ້ງລົງແລ້ວກໍ່ຖືກນຳໄປຖິ້ມ ຢ່າງບໍ່ມີອາໄລອາວອນ.

ຜ່ານການເຮັດວຽກງານມາດ້ວຍຄວາມບໍລິສຸດໃຈຂອງນາງມັນເໝືອນເງົາຕາມຕົວທຸກ ບາດ ຍ່າງ, ສາຍ ຕາຫລາຍຄົນຂອງຊາວໜຸ່ມໄດ້ສຸມຊ່ອນ ຄວາມພໍໃຈໃນ ຕົວນາງທຸກບາດກ້າວ, ຈົນເຖິງຂັ້ນຜູ້ທີ່ຝັງໃຈຮັກນາງຢ່າງແທ້ຈິງອົດກັ້ນໄວ້ບໍ່ໄດ້, ຈຶ່ງເຮັດໃຫ້ເຂົາສາລະພາບຄວາມຮັກທີ່ແສນອົບອຸ່ນກັບນາງ.

ມື້ໜຶ່ງ, ທີ່ນີ້ກົມກະເສດກະຊວງທີ່ນາງສັງກັດຢູ່. ຄຳພວງໄປເຮັດວຽກດ້ວຍຄວາມເບີກບານມ່ວນຊື່ນ, ຫລັງຈາກພັກກິນເຂົ້າທ່ຽງແລ້ວ ນາງໃຊ້ເວລາຫວ່າງລໍຄອຍລົງເຮັດວຽກຕອນບ່າຍ, ອ່ານປຶ້ມ ຄົ້ນຄ້ວາບົດຮຽນ. ບຳລຸງວັດທະນະທຳຢູ່ ກ້ອງຕົ້ນ ໝາກ ຄ້ສົ້ມໃບ ດົກ ໜາໃຫ້ຄວາມຊຸ່ມເຢັນ ສາຍລົມພັດວູ່ມາເປັນຮຸດໆ ພັດເອົາກິ່ນອາຍດິນ ອາຍຄວັນໄຟ ແລະ ດອກໄມ້ປ່າຫອມເຈືອຈານກັບໄປທົ່ວບໍລິເວນນາງເທື່ອນາງຕ້ອງຫລຽວໄປທາງ ຫົວລົມຊອກຫາທີ່ມາຂອງກິ່ນນັ້ນ ຂະນະນັ້ນສາຍຕາຂອງໃຜຜູ້ໜຶ່ງ ພວມຈອບ ເບິ່ງ ການເຄື່ອນໄຫວ ຂອງ ນາງ ຢ່າງງຽບໆ ນາງເທື່ອເຂົາພັດຍິ້ມປອບໃຈຕົວເອງ, ຈາກນັ້ນກໍ

ຄ່ອຍເຄື່ອນຕົວມານັ່ງຢູ່ເບື້ອງຫລັງໂດຍນາງບໍ່ທັນຮູ້ ເຂົາຍິ້ມແລ້ວເວົ້າອອກມາດ້ວຍສຽງແຜ່ວເບົາ ແຕ່ ຝັງ ໄປ ດ້ວຍ**ຄວາມ**ຫມາຍເລິກໃນຈິດໃຈຂອງຊາຍຄົນນັ້ນ.

– ຄຳພວງ... ພັກຜ່ອນແດ່ດິ.

ນາງອ່ວຍຫນ້າມາຫາເຈົ້າຂອງສຽງ ສາຍຕາຂອງຊາຍຄົນນັ້ນດັກຫ້າງໄວ້ຖືກທາງພໍດີ ນາງຍິ້ມຕອບເຂົາຫນ້ອຍຫນຶ່ງ.

– ນ້ອງພວມພັກຜ່ອນນິເດ.

– ພັກຜ່ອນແນວໃດນັ່ງອ່ານຫນັງສືເສີຍ, ເບິງຫມູ່ດີ, ນອນຢູ່ເທິງເຮືອນກໍມີນອນຢູ່ນຳປ່າຫຍ້າກໍມີ.

– ນ້ອງບໍ່ເຄີຍນອນເວັນ.

– ຄັນຊັ້ນຊິບໍ່ລົບກວນນ້ອງບໍ?

– ບໍ່ເປັນຫຍັງ, ນ້ອງແຮງຢາກໃຫ້ອ້າຍມານັ່ງນຳຊິໄດ້ຄົ້ນຄ້ວາເລກວິທະຍາ ວັດຖຸແດ່. ອ້າຍ ທອງ ສະຫວັນສອນໃຫ້ມື້ນັ້ນນ້ອງບໍ່ເຂົ້າໃຈຈັກຫນ້ອຍ.

– ເປັນຫຍັງບໍ່ຖາມ?

– ຫມົດເວລາກ່ອນຫັ້ນເດ.

ທອງສະຫວັນຍິ້ມຫວານຢູ່ໃນໃຈ; ເພາະຕົນເອງຢາກຫາໂອກາດເວົ້າກັບນາງພວງມາແຕ່ດົນແລ້ວ ແຕ່ບໍ່ມີໂອ

ກາດໄດ້ເວົ້າລົມກັບຈັກເທື່ອ. ເຂົາພຽງແຕ່ໃຊ້ແສງຕາຄອຍຈອບເບິ່ງນາງດ້ວຍຄວາມມິດງຽບ. ເຂົາຢາກເວົ້າບາງສິ່ງບາງຢ່າງໃນສ່ວນເລິກຂອງຫົວໃຈທີ່ເຂົາເຝົ້າຄອຍມາໄດ້ ໑ ປີໃຫ້ນາງຮູ້, ແຕ່ວ່ານາງຈະສົນໃຈກັບເຂົາຫລືບໍ່? ທີ່ຜ່ານມາຄຳພອງເປັນຄົນຂ້ອນຂ້າງງຽບຂຶມ, ສາຍຕາລອຍບໍ່ມີຈຸດໝາຍ, ເບິ່ງຄືວ່ານາງມີເລື່ອງທຸກໃຈ ຂັງມາແຕ່ກ່ອນ. ຢ່າງໃດກໍຕາມ ເຂົາຕັດສິນໃຈຕົວເອງແບບງຽບໆແລ້ວວ່າຈະສາລະພາບຫົວໃຈກັບນາງຈົນໄດ້.

– ຄຳພອງ! ອ້າຍຖາມນ້ອງແດ່ວ່າປານໃດ... ຊິແຕ່ງງານ?

– ຮື້ຍ! ແມ່ນເຈົ້າເອົາຄວາມຫຍັງມາເວົ້າ?

-- ຄວາມໃນໃຈນີ້ແຫລະ.

– ຊິຢູ່ເປັນໂສດຕະຫລອດຊີວິດ.

– ບໍ່ເຊື່ອດອກ! ຄົນຄືນ້ອງ

ສີໜ້າຂອງຄຳພອງປ່ຽນແປງແດ່ເລັກນ້ອຍ, ນາງເຂົ້າໃຈວ່າການທີ່ອ້າຍທອງສະຫວັນ ສັງກັດຢູ່ໃນກົມດຽວເວົ້າ ມາ ນີ້, ເປັນການເວົ້າແບບສຽດສີນາງຫລາຍກວ່າຊິເວົ້າດ້ວຍຄວາມຈິງໃຈ, ນາງວາງປື້ມບົດຮຽນໄວ້ທີ່ຕັກບໍ່ກ້າສູ້ໜ້າເຂົາໄດ້ຄວາມຄິດໃນເວລານີ້ ກໍຄືຄວາມເປັນຮ້າງ

ເປັນຫນ້າຍຂອງນາງ ເຮັດໃຫ້ຄິດໄປຫລາຍແງ່ຫລາຍມູມ, ທັງນ້ອຍໃຈຕົວເອງ ແລະ ບໍ່ຢາກໄດ້ຫງິນເລື່ອງນີ້ອີກຕໍ່ໄປ.

– ເປັນຫຍັງຄືນາມິດດິບແທ້ຄຳພວງ?

– ຊິໃຫ້ນ້ອງເວົ້າຫຍັງຕໍ່ ?

– ບໍ່ມີເລື່ອງຫຍັງດອກ ແຕ່ວ່າມັນມີເລື່ອງຫນັກອົກ.

– ເລື່ອງອັນໃດ?

– ຫົວໃຈ...

ພໍດີຂະນະທີ່ທອງສະຫວັນຕອບ ສຽງເກາະສັນຍານ ແລະສຽງຮ້ອງຂອງຫມູ່ພວກດັງຂຶ້ນ, ໝາຍຄວາມວ່າເວລາເຮັດວຽກໄດ້ມາເຖິງພໍດີ, ທັງສອງແຍກທາງກັນໄປເຮັດວຽກຕາມຫນ້າທີ່ຮັບຜິດຊອບໃຜມັນ, ສຳຫລັບທອງສະຫວັນເສຍດາຍບໍ່ເລີກບໍ່ແລ້ວ, ເຂົາພອມຈະເວົ້າຄວາມໃນໃຈຂອງຕົນຜ່ານມາຫນຶ່ງປີໃຫ້ນາງຟັງ,ແຕ່ກໍຜິດໂອກາດຈົນໄດ້; ສຳຫລັບຄຳພວງພັດແຕ່ເຂົ້າເຮັດການມາບໍ່ມີຜູ້ໃດຈະສົນໃຈມານັ່ງເວົ້າລົມຈັ່ງຊີ້ຈັກເທື່ອ, ເທື່ອນີ້ເປັນເທື່ອທຳອິດທີ່ນາງໄດ້ມີໂອກາດເວົ້າລົມເລັກນ້ອຍ, ນອກນັ້ນກໍເປັນເວລາເຮັດວຽກຂອງໃຜມັນ, ຄຳເວົ້າຄຳສຸດທ້າຍຂອງທອງສະຫວັນ, ກ່ອນຊິຕີແປງສັນຍານລົງເຮັດວຽກນັ້ນເຮັດໃຫ້ນາງຄດເປຫລາຍອັນຫລາຍແນວ; ແຕ່ວ່າມັນອາດເປັນ

ໄປບໍ່ໄດ້ທີ່ທອງສະຫວັນຈະເວົ້າແນວນີ້ກັບ ນາງ ເພາະ ລະພາບນັ້ນແຕກຕ່າງກັນຫລາຍ ນາງເປັນແມ່ຮ້າງ, ທອງສະຫວັນເປັນບ່າວບໍ່ເຄີຍໄດ້ເມຍຈັກເທື່ອ, ອາຍຸລື່ນນາງ ໕ ປີ, ຂະນະນີ້ນາງໄດ້ ໓໐ ປີແລ້ວ ເບື້ອງຫລັງທີ່ແສນຂົມຂື່ນຂອງນາງຫລາຍຄົນກໍ່ຮູ້, ເຂົາອາດຈະຮັກກັບຄົນອື່ນແລ້ວຈະມາປຶກສາກັບນາງກໍ່ເປັນໄດ້, ນາງທັງຄຶດທັງເຮັດວຽກໄປນຳ ໃນຕອນທ້າຍກໍ່ປົງອະນິຈາຕົນເອງ.

ຈາກມື້ນັ້ນມາຫລາຍມື້, ຄຳພວງໄດ້ຮັບ ຈົດ ໝາຍຊອງສີຟ້າໃນເຈ້ຍຈົດໝາຍແຜ່ນນ້ອຍ, ຂຽນລົງດ້ວຍຕົວຫນັງສືບັນຈົງ, ມີຄົນເອົາມາວາງໄວ້ໃນລິ້ນຊັກໂຕະເຮັດວຽກຂອງນາງບໍ່ຮູ້ວ່າຄົນປານໃດ ? ຄຳພວງຍັງບໍ່ເຊື່ອວ່າຈະມີຄົນຂຽນຈົດຫມາຍມາຫານາງ, ແຕ່ນາງກໍ່ທົນຕໍ່ຄວາມຕື່ນເຕັ້ນໄວ້ໄດ້, ພາຍຫລັງເລີກການກັບເຮືອນແລ້ວຕອນຄ່ຳມື້ນັ້ນ, ນາງເອົາຈົດໝາຍນ້ອຍສະບັບນັ້ນອອກມາອ່ານ ດ້ວຍຄວາມພິນິດພິຈາລະນາ, ແຕ່ລະຄຳເວົ້າຢູ່ໃນຈົດໝາຍສາມາດທ່ອງໄດ້ກັບປາກ.

ຈົດໝາຍນ້ອຍສະບັບນັ້ນ, ເຮັດໃຫ້ຄຳພວງ ແລະທອງສະຫວັນບໍ່ກ້າພົບໜ້າກັນ, ຕ່າງຄົນກໍ່ຫລົກຍ້ອນຄວາມອາຍ ເຮັດໃຫ້ເຂົາທັງສອງບົ່ມຄວາມຮັກມາເປັນ

ເວລາຫລາຍເດືອນຢ່າງງຽບສະຫງົບ, ບໍ່ມີໃຜຈະສາມາດຮູ້ຄວາມເລິກຕື້ນໜາບາງໃນຈິດໃຈໃຜໄດ້, ຄຳພວງ ຍັງຄິດຢູ່ບໍ່ແລ້ວຕໍ່ຄວາມຮັກຂອງ ທອງສະຫວັນ ທີ່ມອບໃຫ້ນາງເພາະຢ່າງໃດນາງກໍ່ຮູ້ຢູ່ແກ່ໃຈຕົນເອງແລ້ວວ່າ; ຕົນໄດ້ໝົດສິ້ນຄວາມບໍລິສຸດໃຫ້ຊາຍຜູ້ຊົ່ວຊ້າສາມານ ຈົນ ກາຍເປັນແມ່ຮ້າງ, ດີແຕ່ບໍ່ມີລູກຕິດນຳເຂົາ, ຖ້າທອງສະຫວັນຮູ້ເບື້ອງຫລັງ, ແນ່ນອນເຂົາຕ້ອງມີຄວາມເຊື່ອມຄາຍຕໍ່ນາງຢ່າງບໍ່ຕ້ອງສົງໃສ.

ມື້ໜຶ່ງ, ຄຳພວງໄດ້ຮ່ວມຂະບວນອອກໄປຕ້ານ ໄພແຫ້ງແລ້ງລົງດຳນາຊ່ວຍປະຊາຊົນ, ທອງສະຫວັນກໍ່ໄປຄືກັນເຮັດໃຫ້ຄວາມຮັກຂອງທັງສອງຄົນຄືກັບວ່າມີສິ່ງໃດສິ່ງໜຶ່ງເຮັດໃຫ້ພວກເຂົາຕ້ອງມີໂອກາດໄປບົນເສັ້ນ ທາງອັນດຽວກັນ, ຕອນໃກ້ທ່ຽງມື້ນັ້ນທຸກຄົນເອົາໃຈໃສ່ດຳນາເພື່ອໃຫ້ແລ້ວຕາມກຳນົດ, ແຕ່ແລ້ວຫົວໜ້ານຳພາໄປຊ້ຳພັດແຕ່ງໃຫ້ທອງສະຫວັນ ແລະ ຄຳພວງໄປແຕ່ງກິນຖ້ວ, ຈາກຄວາມຮັກມິດງຽບຢ່າງບໍ່ມີຮູ ຜົ່ວ ຂອກ ນອກ, ທັງສອງຕ່າງຮູ້ສຶກວ່າມັນພວມຈະກ້າວເຂົ້າສູ່ ຄວາມ ຈິງໄປທຸກມື້.

– ເປັນຫຍັງບໍ່ຕອບ ?

ທອງສະຫວັນໄດ້ໂອກາດປູ່ລຳພັງສອງຕໍ່ສອງຖາມຄຳພວງຄືກັບວ່າເຈົ້າຂອງຫນີ້ສິນໄປຖາມ ເງິນ ກັບ ລູກ ຫນີ້, ຄຳພວງຕົກສະເງີ້ ຕໍ່ຄຳຖາມຂອງຊາຍຫນຸ່ມ ບໍ່ຄຶດວ່າ ຈະເອົາຈິງເອົາຈັງປານນີ້, ນາງຍິ້ມນ້ອຍໆພໍໄດ້ຮູບງາມ.

- ອ້າຍຄຶດຄັກແລ້ວບໍ ?
- ຖ້າບໍ່ຄຶດຄັກ ຈະສາລະພາບຈາກຫົວໃຈໄດ້ບໍ ?
- ປ້ານບໍ່ເປັນແນວນັ້ນດີ.
- ຍັງບໍ່ເຊື່ອອ້າຍຊັ້ນບໍ່ ?

ທັງສອງຫນຸ່ມສາວພວມແຕ່ງກິນ ທັງໄຕ່ຖາມ ກັນກ່ຽວກັບຊີວິດສ່ວນຕົວໃນອະນາຄົດ, ສາຍລົມພັດມາເປັນບາດແຮງບາດຄ່ອຍ, ບາງ ເທື່ອ ເຮັດໃຫ້ຖຽງນາກາງທົ່ງໄຫວເລັກນ້ອຍ. ນ້ຳຕາມໄຮ່ນາເປັນຟອງນ້ອຍໆ ເຂົ້າສ່ວນທີ່ດຳແລ້ວພວມຂຽວງາມຖືກກະແສລົມພັດກິ້ງເປັນຄື້ນ ຄືນ້ຳຂອງພວມຟອງ, ກິ່ນອາຍໃບເຂົ້າຫອມພູ່ໄປເປັນຮູດໆ. ຄຳພວງປາດຫນາກຖົ່ວໃສ່ດິກ ສ່ວນທອງສະຫວັນເບິ່ງສາກຄ້າງໄວ້ບໍ່ດຳຈັກເທື່ອ, ສາຍຕາຍັງຄົງສຸມໃສ່ໃບຫນ້າຂອງຄຳພວງ, ສອງ ກີບ ບົວ ພວມ ບານ ແດງ ເຮື່ອ ປານຫມາກຫລອດສຸກ, ເຂົາຄອຍຄຳຕອບຈາກນາງດ້ວຍຈິດໃຈຮີບຮ້ອນ.

– ນ້ອງວ່າອ້າຍບໍ່ທັນຮູ້ຫຍັງເທື່ອ ສຳລັບຊີວິດຜ່ານມາ ຂອງນ້ອງ.

– ຊິຮູ້ແນວໃດອີກ?

– ໃຫ້ອ້າຍສືບເບິ່ງຄັກໆກ່ອນ...

ສຽງລົມກັນອຸ່ນອື່ນຢູ່ເທິງຖຽງນາບໍ່ທັນສຸດ, ເພື່ອນສະຫາຍທີ່ຮ່ວມຂະບວນວຽກງານນຳກັນ, ຂຶ້ນຈາກຫນ້າວຽກມາ ເຮັດໃຫ້ທ່າທີແລະຄວາມເວົ້າຂອງທັງສອງປ່ຽນແປງໄປທັນທີ, ບາງຄົນເຫັນເຂົາທັງສອງເຮັດວຽກນຳກັນກໍເວົ້າເປັນທຳນອງປອກລໍ້ກັນເປັນຂອງທຳມະດາ, ແຕ່ລະຄົນກໍຊິນເຄີຍຕໍ່ຄວາມປອກລໍ້ຂອງຫມູ່ເພື່ອນ, ຈຶ່ງບໍ່ມີອາການໃດໆສະແດງອອກມາໃຫ້ຫມູ່ເພື່ອນເຫັນໄດ້.

ນັບແຕ່ມື້ໄດ້ຮັບຈົດຫມາຍຂອງທ້າວທອງສະຫວັນ, ແລະ ຄວາມເອົາຈິງເອົາຈັງຂອງເຂົາ, ເຮັດໃຫ້ຄຳພວງຄິດຢູ່ບໍ່ເລີກບໍ່ແລ້ວ, ຮັກເທື່ອທີ່ສອງຂອງນາງ ຈະເປັນສີຟ້າຫລືສີເຫລືອງໃນອະນາຄົດກໍຄາດຄະເນໃຈບໍ່ໄດ້, ການຕັດສິນໃຈຂອງນາງ ຂຶ້ນຢູ່ກັບການຈັດຕັ້ງຂັ້ນເທິງ. ສຳຫລັບນາງເອງກໍພໍຈະຄິດວ່າ ຖ້າມັນເປັນຄວາມຈິງກໍຖືວ່າເປັນບຸນຄຸນລົ້ນເຫລືອ, ທີ່ຍັງມີຜູ້ຮັກນາງຫລາຍເຫລືອຢູ່ໃນໂລກ, ຈາກນັ້ນມາ ທອງສະຫວັນກໍຮູ້ສະພາບຊີວິດເບື້ອງ

ຫລັງຄັ້ງອະດີດຂອງນາງຄຳພວງຢ່າງຫມົດກ້ຽງ, ເມື່ອເຂົາຮູ້ແທນທີ່ຈະມີຄວາມເບື່ອຫນ່າຍ ຫລືກັບໃຈບໍ່ໄປພົວພັນກັບນາງ, ກົງກັນຂ້າມທອງສະຫວັນໄດ້ທຳລາຍຄວາມຄິດຂອງຄຳພວງຍິງສາວທີ່ເຂົາຮັກສຸດຫົວໃຈມາໄດ້ເກືອບ ໒ ປີໃຫ້ພັງທະລາຍລົງ, ເຂົາສົງສານ ແລະ ທັງຮັກນາງດ້ວຍໃຈບໍລິສຸດ, ເຂົາຕັດສິນໃຈຂໍຮ່ວມຊີວິດກັບນາງດ້ວຍຄວາມບໍລິສຸດໃຈ.

ມື້ນັ້ນເປັນມື້ບຸນປີໃຫມ່ລາວ, ທອງສະຫວັນໄປທີ່ບ້ານຂອງຄຳພວງ, ນັບເປັນເທື່ອທຳອິດທີ່ເຂົາໄດ້ຢຽບພື້ນທໍລະນີບ້ານຂອງຍິງສາວ. ນັບແຕ່ມື້ຮູ້ຈັກກັນທຳອິດມາ, ເຂົາຕັ້ງ ໃຈ ຈະ ໄປ ສາ ລະ ພາບ ທຸກ ສິ່ງ ທຸກຢ່າງກັບນາງໃຫ້ຮູ້ຄວາມຈິງຂອງຕົນ. ກວ່າຊິໄປຮອດເຮືອນກໍປຽກມອດບອດ, ສຽງໂຮແຊວຂອງຊາວບ້ານຕາມຄຸ້ມຂວາງຕ່າງໆ ຟົດສະຫນັ່ນໃນການເຮັດບຸນສະຫລອງປີໃຫມ່, ແຕ່ເຮືອນຂອງຄຳພວງມິດສະຫງັດ ທ່າມກາງແສງແດດອັນອົບເອົ້າ, ຄຳພວງ ຫາກໍກັບມາແຕ່ເອົານ້ຳໄປສົງພະພຸດທະຮູບທີ່ວັດ, ຫາກໍປ່ຽນເຄື່ອງນຸ່ງທີ່ປຽກ. ທອງສະຫວັນຂຶ້ນເຮືອນພໍດີ, ສ່ວນພໍ່ຂອງນາງໄປຊຸມແຊວຢູ່ເຮືອນອື່ນ, ບັນຍາກາດທີ່ແສນສົດຊື່ນ ລະຫວ່າງຫົວໃຈຂອງທັງສອງນັບຊ່າງດຸດ

ດົນທີ່ສຸດສາຍຕາຈ້ອງແບມເບິ່ງກັນບໍ່ພັບ.

– ຄຳພວງ ເບື້ອງຫລັງທຸກຢ່າງຂອງນ້ອງນັ້ນອ້າຍຮູ້ລະອຽດຫມົດແລ້ວ.

– ເປັນແນວໃດຈິດໃຈຂອງອ້າຍ?

– ເຮັດໃຫ້ຄວາມຮັກເພີ້ມທະວີຂຶ້ນກວ່າເກົ່າ.

– ນອກນັ້ນ...?

– ບໍ່ມີຫຍັງ.

ນາງບໍ່ກ້າປະສົບສາຍຕາຂອງຊາຍຫນຸ່ມ ໄດ້ແຕ່ກົ້ມຫນ້າລົງພື້ນເຮືອນ, ຄວາມເວົ້າຂອງທອງສະຫວັນເໝືອນກັບຫມໍປາວິເສດ ວາງຢາໃຫ້ຄົນຕາຍແລ້ວ ກັບຄືນມາມີຊີວິດໃຫມ່, ຊີວິດທີ່ສົດຊື່ນຂອງນາງ ທີ່ອຸທິດເພື່ອສ້າງສາປະເທດຊາດລາວໃຫມ່. ໄດ້ເພີ້ມທະວີຄູນເປັນກຳລັງແຮງ "ລາກ່ອນຄວາມຫລັງ ຊອກຊ້ຳຫົວໃຈປ່ຳຫວນຄືນມາອີກ" ນາງຄິດພື້ມພຳຢູ່ໃນລຳຄໍແລ້ວເງີຍຫນ້າຂຶ້ນ, ຮັບຕ້ອນເອົາຊີວິດໃຫມ່ບົນເສັ້ນທາງອັນສົດໃສ.

– ມີຫຍັງໃຫ້ອ້າຍຂັດຂ້ອງອີກບໍ່?

– ບໍ່ມີ, ຊາຍ ຫນຸ່ມ ຕອບ ດ້ວຍ ຄວາມ ຫນັກແຫນ້ນ ແລະ ເຊື່ອຫມັ້ນປ່າງຕາຍໃຈ.

# ຂອງຕ້ອນຈາກໃຈ

* ວຽງສາຄອນກັບຈາກສອນຫນັງສືປະຊາສຶກສາ ລ ໃນງານຄືນດ້ວຍທ່າທາງສົດຊື່ນແຈ່ມໃສ, ເພາະບັນດາພໍ່ແມ່, ອ້າຍເອື້ອຍນ້ອງທຸກຄົນຢູ່ໃນຫ້ອງຂອງນາງສອນເອົາໃຈໃສ່ໄປໂຮງຮຽນບໍ່ຂາດທັງຮຽນເກັ່ງ. ໂດຍສະເພາະລຸງຄົນຫນຶ່ງແຂນກຸດເສຍອົງຄະເບື້ອງຂວາ, ຮຽນໄດ້ເກັ່ງກວ່າທຸກໆຄົນ. ລາວໃຊ້ມືຊ້າຍຂຽນ, ໂຕຫນັງສືງາມຫລາຍ, ບ້ອນແນວນັ້ນ, ຈຶ່ງເຮັດໃຫ້ວຽງສາຄອນຍິງຫນຸ່ມຜູ້ສອນມີຄວາມຕື່ນເຕັ້ນດີໃຈທີ່ສຸດ, ເພາະຖືວ່າເປັນຜົນງານສຳຄັນປະກອບສ່ວນ ກຳຈັດປັດເປົ່າພະຍາດກືກຫນັງສືທີ່ພັກ ແລະ ລັດຖະບານວາງລົງມາໃຫ້ປະຊາຊົນອ່ານຫນັງສືໄດ້ຂຽນໄດ້ ເພື່ອປະກອບສ່ວນໃນການສ້າງສາພັດ

ທະນາປະເທດຊາດໃຫ້ກ້າວໜ້າ. ການ ສຶກ ສາ ເປັນ ກຸນແຈສຳຄັນທີ່ສຸດ ກ່ອນທີ່ປະເທດຊາດຂອງເຮົາ ຈະກ້າວເຂົ້າສູ່ສັງຄົມນິຍົມທັນສະໄໝ.

ນາງວາງປຶ້ມໄວ້ທີ່ໂຕະຕັ້ງຢູ່ແຈເຮືອນ. ພ້ອມທັງໂຍບນັ້ງລົງກ້າວອີ້, ເພື່ອຄົ້ນຄວ້າບົດຮຽນ ທີ່ຈະສອນໃນມື້ຕໍ່ໄປ. ສາຍຕາຫລຽວແນມໄປທີ່ ຝາເຮືອນ ດ້ວຍ ຄວາມ ສົງ ໄສ. ເພາະບ່ອນໄວ້ສໍ ປາກກາ ທີ່ຫ້ອຍໄວ້ຝາປາກົດວ່າມີຈົດໝາຍຊອງສີຟ້າ, ສອດປົນໄວ້ກັບສໍ ປາກກາ ນາງແນມເບິ່ງແລ້ວກໍ່ແນມເບິ່ງອີກ ໃນທີ່ສຸດກໍ່ຕັດສິນໃຈໂຢ້ລຸກໄປຈັບເອົາທັງຄຶດຖາມຕົວເອງໃນໃຈວ່າ "ແມ່ນໃຜເອົາຈົດໝາຍມາໄວ້ນີ້" ເພາະແຕ່ໃດມາ ວຽງສາຄອນບໍ່ເຄີຍໄດ້ຮັບຈົດໝາຍຈາກຜູ້ໃດ.. ບໍ່ວ່າໝູ່ເພື່ອນ ແລະ ຊູ້ສາວແມ່ນບໍ່ເຄີຍຕິດຕໍ່ກັບທາງນີ້ຈັກເທື່ອ "ຈົດໝາຍອ້າຍທອງເລື່ອນ" ນາງພື້ນພຳຢູ່ໃນໃຈ. ທັງທີ່ນາງ ແລະ ຊາຍໜຸ່ມມີບັນຫາຂັດແຍ່ງດ້ວຍເຫດຜົນບໍ່ລົງລອຍກັນ.

ວຽງສາຄອນບໍ່ຢາກໃຫ້ທອງເລື່ອນ, ກັບຄືນໄປເຮັດໄຮ່ເຮັດນາ, ພາຍຫລັງຮຽນຈົບຫລັກສູດການກະເສດ. ໃຫ້ເຮັດການຢູ່ນະຄອນວຽງຈັນ, ແຕ່ທອງເລື່ອນຢາກໄປປະກອບສ່ວນເຮັດໄຮ່ນາ. ເພາະຢາກໃຊ້ວິຊາສະເພາະທີ່ຮຽນ

ຈົບແລ້ວໄປປະຕິບັດຕົວຈິງໃຫ້ໄດ້ຜົນ. ດ້ວຍເຫດຜົນຂັດແບ່ງກັນນາງ ແລະທອງເລື່ອນຕ້ອງແຍກທາງກັນ. ຄວາມສຳພັນທັງສອງກໍຂາດຈາກກັນ. ນາງທັງຄິດທັງບີບສະໝອງຕົວເອງ" ມັນເປັນໄປບໍ່ໄດ້ທີ່ອ້າຍທອງເລື່ອນຈະຂຽນຈົດໝາຍມາຫາ?" ນາງຄິດຖາມຕົວເອງທັງຄິດລະອາຍໃຈທີ່ປະພຶດຕົນຮຸນແຮງ ຈົນເຖິງຂະໜາດຢ່າຄວາມສຳພັນ.

ວຽງສາຄອນ...

ຈົດໝາຍທີ່ນ້ອງພວມອ່ານປູ່ດຽວນີ້, ຫວັງວ່າຄົງຈື່ລາຍມືໄດ້ດີ ເຮົາທັງສອງຈາກກັນ ເປັນເວລາເກືອບໜຶ່ງປີບໍ່ມີໃຜສົ່ງຂ່າວຫາກັນ. ຄົງຈະເປັນເພາະເຮົາມີຄວາມຂັດແບ່ງ. ແຕ່ອ້າຍຖືວ່າຄວາມຂັດແບ່ງນັ້ນບໍ່ເປັນບັນຫາຫຍັງສຳລັບອ້າຍ ແລະ ກໍຮູ້ດີວ່າຕົວເອງເປັນແນວໃດ? ຄວາມສຳພັນຂອງອ້າຍ ບໍ່ງບໍ່ຂາດຈາກນ້ອງເທື່ອ ... ເນື້ອໃນທີ່ຂຽນລົງໃນນີ້ ລ້ວນແລ້ວແຕ່ກັ່ນກອງອອກຈາກຫົວໃຈທຸກຂໍ້ຄວາມ ເຖິງຈະກຽດຈະຊັງແນວໃດຂໍໃຫ້ນ້ອງອົດສາອ່ານໃຫ້ສຸດ.

ປູ່ວຽງຈັນພີ້, ເປັນແນວໃດ? ພາກສ່ວນຍິງໜຸ່ມວັນນະຄະດີບ້ານນ້ອງຄືຊິຟົດຟື້ນມ່ວນຊື່ນຫລາຍກວ່າເກົ່າ ແລະ

ກ້າວໜ້າໄປໄດ້ໄກສົມຄວນ. ສ່ວນອ້າຍຢູ່ພຸ້ນການຈັດຕັ້ງ ວັນນະຄະດີ ຮຽນການເມືອງຟົດຟື້ນມ່ວນຊື່ນທີ່ສຸດ ທ່າມກາງປ່າເຂົ້າອັນຂຽວງາມ ສົ່ງກິ່ນຫອມໄປທົ່ວທ້ອງທົ່ງນາ ອັນກວ້າງໄກ ຫລຽວສຸດສາຍຕາ. ຊາວໜຸ່ມສາມັກຄີກັນ ເຮັດທຸກສິ່ງທຸກຢ່າງ. ທັງດ້ານແນວຄິດການເມືອງ, ປ້ອງກັນເພີ້ມພູນຜະລິດຜົນ. ດຽວນີ້ຢູ່ທົ່ງນາວັງວຽງບ້ານຂອງອ້າຍ ທຸງຊາດ ແລະ ທຸງສີແດງປິວສະບັດພັດແກວ່ງຢູ່ທຸກຍາມ. ໃຕ້ຮົ່ມທຸງ, ມີປ່າເຂົ້າຂຽວງາມພຸຜາທຳມະຊາດດົກໜາ ອາກາດເຢັນດີໃນເວລານີ້ບ້ານຂອງອ້າຍ, ບໍ່ມີ "ນາເຮື້ອ" ເຫລືອຫລົງຢູ່ເລີຍ ຍ້ອນຊາວບ້ານຊາວເມືອງຮ່ວມກັນອອກແຮງງານ, ສາມັກຄີຮວມໝູ່.

ວຽງສາຄອນສິ່ງທີ່ອ້າຍດີໃຈທີ່ສຸດ ກວ່າ ທຸກ ແນວ ນັ້ນແມ່ນ ຊາວພູດຽຜາກັນລົງມາເຮັດນາຖອດຖອນບົດຮຽນນຳກັນ, ດຽວນີ້ເຂົາເຈົ້າເຮັດເກັ່ງບໍ່ຢ້ານບໍ່ກົວຫຍັງ. ສ່ວນຫລາຍມີແຕ່ຈົ່ມຮູ້ບຸນຄຸນຂອງພັກ ແລະ ລັດຖະບານ ຊີ້ແນວທາງໃຫ້ພົ້ນຈາກຄວາມ ມືດ ມາ ສູ່ ແສງ ສະ ຫວ່າງ. ຫາກນ້ອງໄປເຫັນຮັບຮອງວ່າໜ້າອາຍເຂົາເຈົ້າ ບັນດາອ້າຍເອື້ອຍນ້ອງລາວສູງ, ວຽງສາຄອນຂະນະທີ່ອ້າຍພວມຂຽນ ຈ.ມ ສະບັບນີ້ເຂົ້າໃນນາຖອກຮວງແລ້ວ ຫລຽວໄປ

ກາງທົ່ງຄືກັນກັບນ້ຳທະເລກປົກຄຸມຢູ່ເລື້ອຍໆ ເວລາລົມ
ພັດແຮງຕົ້ນເຂົ້າເອນໄປຕາມກະແສລົມ ຄືກັນກັບຟອງ
ນ້ຳຂອງ ບານລົມພັດແຮງນັ້ນແຫລະ.

ປີນີ້ຫລັງຈາກການເກັບກ່ຽວເອົາໝາກຜົນແລ້ວ ບັນ
ດາອ້າຍເອື້ອຍນ້ອງທົ່ວເຂດເມືອງວັງວຽງຈະໄດ້ ຈັດ ພິ ທີ
ສະຫລຸບຜົນງານການເກັບກ່ຽວສົກປີ ໑໙໗໖ ຢ່າງມ່ວນ
ຊື່ນ.ທັງເປັນການສະຫລອງໝາກຜົນແຫ່ງໄຊຊະນະທາງ
ດ້ານເສດຖະກິດ ທີ່ປະຊາຊົນລາວພອມຈະກ້າວຂຶ້ນ ເປັນ
ເຈົ້າທາງດ້ານເສດຖະກິດປົນຢູ່ຂາດົນເອງ. ຫາກວຽງສາ
ຄອນຈະໄປຮ່ວມສະຫລອງ ອ້າຍບົນກໍຕ້ອນຮັບ ຈະເຮັດເຂົ້າ
ຫລາມບັງໃຫຍ່ໃສ່ເຜືອກມັນ ແລະ ໝາກພ້າວຫລາຍໆ
ພ້ອມນີ້ອ້າຍໄດ້ຝາກກະເປົາ ເຮັດ ດ້ວຍ ໄມ້ ພາງ ເປັນ ສິ ມື
ຂອງບັນດາຊາວໜຸ່ມເພື່ອໄວ້ເປັນຂອງຂັວນຈາກໃຈ.

ວັນທີ ໖/໑໐/໑໙໗໖.

ທອງເລື່ອນ.

ວຽງສາຄອນງວາກໜ້າຫລຽວຫລັງ, ຊອກຫາກະ
ເປົາດົນເດີນ. ເຫັນຕັ້ງຢູ່ໃກ້ຂາໂຕະເບື້ອງຝາບາງຟ້າວ
ຈັບເອົາກະຕ່າລັກສະນະເປັນກະເປົາ, ມີຝາອັດລວດລາຍ
ງາມ ຮູບງົວຈຳປາ ແລະ ດອກໂດໜັງສືປູກ້ອງຂຽນວ່າ

"ຂອງຂັວນຈາກໃຈ" ນາງປິ້ນຫາງເບື້ອງຫນ້ານີ ໂຕຫນັງສືຊຽນລວດລາຍງາມ "ປະເທດລາວ" ປູ່ກ້ອງໂຕຫນັງສືມີນົກສັນຕິພາບ ຝີ ໂຕ ພວມບິນສູ່ເວຫາ, ດ້ວຍທ່າທາງເບີກບານມ່ວນຊື່ນ. ນາງໃຊ້ສາຍຕາຫລຽວແນມເບິ່ງກະເປົ່າປ່າງພິຈາລະນາ ຄວາມຄຶດອີກສ່ວນຫນຶ່ງລອຍວົນວຽນເຖິງຮູບພາບຂອງທອງເລື່ອນເພື່ອນຊາຍ ຮັກກັນມາເປັນເວລາຫລາຍປີແຕ່ດຽວນີ້ຫ່າງໄກກັນ ຍ້ອນ ວຽກ ງານ. ນາງຄຶດເຖິງທອງເລື່ອນໃນຄືນ ທີ່ຊາຍ ຫນຸ່ມ ມາ ສັ່ງ ລາ ທີ່ເຮືອນ, ທັງເສຍໃຈຕໍ່ຕົນເອງທີ່ໄດ້ສະແດງທ່າທີບໍ່ ເຫມາະສົມແກ່ເຂົາ ຈົນເຖິງຂະຫນາດຕັດ ຮັກ ຂາດ ສຳ ພັນ. ຄວາມເວົ້າທຸກຄວາມກ່ອນເຂົາຊິລົງເຮືອນຈາກໄປ ມັນຍັງດັງກ້ອງປູ່ຫູບໍ່ມີມື້ລືມຈັກເທື່ອ.

- ວຽງສາຄອນ ນ້ອງເຫັນດີບໍ່ທີ່ອ້າຍຕັດສິນໃຈ ກັບໄປເຮັດນາ ?
- ບໍ່ເຫັນດີ. ປາກໃຫ້ອ້າຍເຮັດວຽກຢູ່ພີ້ ຊິໄປເຮັດຫຍັງໄຮ່ນາພໍ່ແມ່ເພິ່ນເຮັດກໍພໍແລ້ວ.

ຄວາມເວົ້າຂອງວຽງສາຄອນສ້າງຄວາມສະເທືອນຫົວໃຈແກ່ເຂົາທີ່ສຸດ ຕອນນັ້ນນາງແນມເບິ່ງຫນ້າຊາຍ ຫນຸ່ມປ່ຽນທ່າທີຈາກຍິ້ມສົດຊື່ນມາເປັນເຫງົາເຄັ່ງຂຶມ ທັງຫຼຽວ

ແນມເບິງຫນ້ານາງຈິນບໍ່ຫລິບແສງຕາ.

– ເຮັດນາກໍ່ຄືກັນກັບເຮັດການ, ວຽກນີ້ເພິ່ນຍິ່ງສົ່ງເສີມໃຫ້ທຸກຄົນເຮັດນາຖືວ່າເປັນວຽກສຳຄັນ ລະ ດັບ ຊາດ. ການອອກແຮງງານເພີ່ມພູນເປັນສິ່ງປະເສີດ. ຊິໃຫ້ອ້າຍຮຽນຈົບມາແລ້ວນັ່ງຢູ່ໂຕະເພີ່ມພູນມັນບໍ່ ຖືກ ກັບ ວິ ຊາ ທີ່ຮຽນມາ.

– ອ້າຍທອງເລື່ອນ ອ້າຍຊິເວົ້າຫຍັງ ນ້ອງບໍ່ເຂົ້າໃຈຫາກວ່າມີຄວາມສຳພັນຮັກແພງກັນ ບໍ່ປາກຈາກັນໄປຊິຈຳເປັນໄປເຮັດນາຫຍັງ!

ເວລານັ້ນເຂົາຫນ້າແດງຂຶ້ນກັບບາດ, ເບິງຊົງອາດຊິຕີຄວາມຫມາຍຂອງນາງໄປທຳນອງທີ່ວ່າ "ຖ້າບໍ່ຢູ່ກໍ່ຕັດຂາດກັນ" ມັນກໍ່ເປັນດັ່ງທີ່ນາງຄຶດ ແລະ ທອງເລື່ອນຄິດເຊັ່ນກັນ. ເຂົາຍ່າງໄປເທຍັ້ນນ້ຳໃສ່ຈອກຂຶ້ນດື່ມ ດ້ວຍທ່າທາງຫມົດຄວາມຫວັງ. ນາງແນມເບິງຫນ້າເຂົາ ເວລານັ້ນຄວາມຮູ້ສຶກບໍ່ຈັກວ່າເປັນແນວໃດ, ບອກບໍ່ຖືກ ເຂົາກັບຄືນໄປນັ່ງຢູ່ບ່ອນເກົ່າ ສາຍຕາແນມອອກໄປນອກເຮືອນຢ່າງເລື່ອນລອຍ.

– ນ້ອງບໍ່ມັກຊັ້ນບໍ ?

– ມັກ ແຕ່...

- ບໍ່ແຕ່ກໍໄດ້ ອ້າຍເຂົ້າໃຈດີ ຕໍ່ເຈດຕະນາຂອງນ້ອງ ທຸກຢ່າງ. ເຖິງນ້ອງຈະຕັດຂາດກໍຕາມ. ອ້າຍກໍບໍ່ຖືສາຫຍັງ ຈະຖືຄວາມສຳພັນໄວ້ຄືເກົ່າບໍ່ປ່ຽນແປງ ແລະ ຂໍບອກໃຫ້ ນ້ອງຮູ້ວ່າ ຫາກເມື່ອໃດ ນ້ອງເຂົ້າໃຈໃນເຈດຕະນາດີຂອງ ອ້າຍແລ້ວ ເມື່ອນັ້ນຈະກັບມາຫານ້ອງ.

ທອງເລື່ອນຍ່າງລິ່ງເຮືອນໄປ ແບບບໍ່ຫລຽວແນມນຳ ຫລັງດ້ວຍຄວາມຄຶດຕື້ນຕັນ ບໍ່ຮູ້ວ່າຈະໄປໃຈ້ແຍກຊີ້ແຈງ ແນວໃດທັນ. ນາງລຸກອອກຈາກຕັ່ງໂດຍບໍ່ຮູ້ສຶກຕົວຫລຽວ ແນມໄປຕາມເສັ້ນທາງ ບ່ອນທີ່ເຂົາຍ່າງໄປ ບຶດຫນຶ່ງຮູບ ຮ່າງ ແລະ ເງົາຫາຍວັບອອກຈາກສາຍຕາປ່ອຍໃຫ້ຈິດ ໃຈ ແລະ ສະຫມອງຄິດໄປຕ່າງໆນາງ.

x

x x

ຕອນເຊົ້າວັນທີ ໑໐ ທັນວາ ຫລັງຈາກສິ້ນສຸດບຸນ ສະຫລອງວັນຊາດທີ ໒ ຜ່ານໄປດ້ວຍຄວາມເບີກບານ ມ່ວນຊື່ນ ໂດຍສະເພາະວຽງສາ ຄອນນາງເຮັດວຽກງານ ຫນັກສົມຄວນໃນດ້ານປ້ອງກັນ ເພາະໄດ້ປະກອບສ່ວນເປັນ ທະຫານລາດກອງຫລອນ ປ້ອງກັນຄວາມສະຫງົບພາຍ ໃນບ້ານ, ແຕ່ສິ່ງທີ່ນາງດີໃຈ ແລະ ຕື້ນຕັນໃຈທີ່ສຸດນັ້ນ

ແມ່ນພາຍໃນບ້ານແລະ ພິທີງານບໍ່ມີເຫດການຫຍັງເກີດຂຶ້ນ, ເປັນສິ່ງສະແດງໃຫ້ຮູ້ວ່າ ປະຊາຊົນທຸກຄົນເປັນເຈົ້າຕົນເອງໃນທຸກດ້ານ ຫາກຄືລະບອບເກົ່າແລ້ວ ພິທີງານໃຫຍ່ໆ ຢູ່ໃສກໍຕາມ ຊັບສິນເງິນຄຳຫລືວ່າຊີວິດຂອງປະຊາຊົນຕ້ອງມູດມ້ວຍໄປບໍ່ຫລາຍກໍຫນ້ອຍ ນາງນັ່ງຢູ່ຕັ່ງອ່ານໜັງສືພິມສຽງປະຊາຊົນ ສາຍຕາຫລຽວແນມເບິ່ງທຸກໆຂ່າວດ້ວຍຄວາມສົນໃຈ. ຂ່າວທີ່ສຳຄັນ ນາງພວມອ່ານຢູ່ນັ້ນ ເປັນຂ່າວກ່ຽວກັບລາຍຊື່ບຸກຄົນ, ຜູ້ທີ່ສ້າງຄຸນງາມຄວາມດີ ໄດ້ຕົວເດັ່ນໃນຮອບປີ ໑໙໗໙ ນັບແຕ່ສ້າງຕັ້ງລະບອບໃຫມ່ເປັນຕົ້ນມາ.

ນາງອ່ານລາຍຊື່ບຸກຄົນ ຊຶ່ງທາງບັນນາທິການ ໜັງສືພິມ ຈັດທຳໄຈ້ແຍກ ເປັນແຂວງຕ່າງໆ ນອກຈາກແຂວງແລ້ວກໍມີເມືອງຕ່າງໆອີກດ້ວຍ. ນາງເປີດອ່ານໄປຮອດໜ້າກາງ ແຕ່ເປັນໃນສຸດທ້າຍ ຂອງໜັງສືພິມ ຊຶ່ງຕີພິມວ່າ "ເຂດເມືອງວັງວຽງ ມີບຸກຄົນເຣັດປະຫວັດດີເດັ່ນ ແກ່ປະເທດຊາດຮອບປີນີ້ ៥ ຄົນ" ສາຍຕາແນມເບິ່ງຕົວໜັງສືທຸກຕົວບໍ່ລົດລະ ໑ ສະຫາຍທອງເລື່ອນພົມທອງ.

ວຽງສາຄອນ ປຸດຈົ້ງສາຍຕາ ຢູ່ກັບຊື່ຂອງທອງເລື່ອນຢ່າງລືມຕົວນາງອ່ານຕໍ່ໄປບໍ່ໄດ້ອີກ... ຮູບພາບໃນໜ້າຊຶ່ງ

ບອກເຖິງຄວາມບືກບືນຂອງຊາຍໜຸ່ມ ລອຍວົນວຽນຢູ່ກັບສາຍຕາ ພ້ອມທັງເມັ້ນສົບ ກັດແຂ້ວຕົວເອງໄວ້ ຄວາມຄຶດເລື່ອນລອຍ ໄປຢ່າງບໍ່ມີຈຸດໝາຍ ປາຍທາງ, ລາງເທື່ອກໍຄືດະຫັນຮູບພາບຊາຍໜຸ່ມ ພວມກົ້ມໜ້າກ່ຽວເຂົ້າກັບບັນດາອ້າຍເອື້ອຍນ້ອງຫລາຍຄົນ. ທັງທີ່ຕົວເອງບໍ່ຮູ້ວ່າ ທົ່ງນາວັງວຽງເປັນແນວໃດ ນາງດຶງລິ້ນຊັກອອກມາເພື່ອຊອກຄົ້ນຫາຈົດໝາຍສະບັບເກົ່າ, ທີ່ທອງເລື່ອນສົ່ງມາພ້ອມດ້ວຍກະເປົາ ແຕ່ກໍບໍ່ເຫັນ ທັງຄຶດໃຈຮ້າຍຕົນເອງທີ່ບໍ່ໄດ້ຮັກສາຈົດໝາຍໄວ້... ທັນໃດນັ້ນກໍປະກົດໄດ້ຍິນສຽງອັດປະຕູລົດແຮງສົມຄວນ ສຽງບາດຕີນ ຍ່າງເປັນບາດສະເໜີເຂົ້າມາເຖິງບ້ານ. ນາງຕັດສິນໃຈ ລຸກຈາກຕັ່ງຫລຽວສ່ອງອອກປ່ອງປ້ອມ "ບໍ່ເຫັນມີຜູ້ໃດມາ".

– ວຽງສາຄອນ ?

– ອຸ້ຍ...

ນາງງວາກໜ້າໄປທາງຂັ້ນໄດເຮືອນຢ່າງໄວວາ, ເວລານັ້ນເອງຄວາມຮູ້ສຶກຕື້ນຕັນໃຈ ຈົນ ງົງ ບໍ່ ສາ ມາດ ເວົ້າຫັງງອອກມາໄດ້, ສາຍຕາຫລຽວແນມປະສານກັບພໍດີທອງເລື່ອນຍິ້ມໃສ່ນາງຢ່າງສົດຊື່ນເບີກບານ, ທ່າທາງໜ້າຕາບໍ່ໄດ້ປ່ຽນໄປຈາກຮູບເດີມ. ຈຸດພິເສດສຳຄັນກໍຄື

ທອງເລື່ອນພີດູບຂຶ້ນແດ່ ຄົງຈະເປັນເພາະອອກແຮງງານຫລາຍ ຈຶ່ງເຮັດໃຫ້ຮ່າງກາຍສົມບູນກວ່າເກົ່າ ຊາຍໜຸ່ມຄ່ອຍຍ້າຍບາດຕີນເຂົ້າຫາ ທັງສາຍຕາຫລຽວແນມບໍ່ລົດລະ ເຂົາປົດໝວກກຳມະກອບສີໝາກຄ້ອອກຈາກຫົວວາງໄວ້ເທິງໂຕະ, ນັ່ງລົງຕັ່ງຄົບລະສັນໂຕະ.

– ສະບາຍດີວຽງ.

– ຈ້າວ...

ທອງເລື່ອນຖາມສະບາຍ ບາງສັ້ນໆ ແລະ ກໍຕອບສັ້ນໆຄືກັນໃນເວລານັ້ນ ວຽງສາຄອນບໍ່ຮູ້ຈະເວົ້າຫຍັງອອກມາເພາະໜ້າອາຍທີ່ຕົນເອງເຄີຍສະແດງທ່າທີບໍ່ພໍໃຈແກ່ຊາຍໜຸ່ມ, ກ່ອນຈາກກັນເມື່ອ ໑–໒ ເດືອນຫລັງ. ເສັ້ນທາງທີ່ເຂົາເດີນກໍ່ຫາຊິມາຮູ້ຕອນນີ້ເອງ ມັນເປັນເສັ້ນທາງທີ່ກ້າວໜ້າມີຄຸນປະໂຫຍດ ແກ່ ປະເທດ ຊາດ ບ້ານເມືອງ. ຈົນຂະໜາດວ່າສູນກາງ ມອບ ໃນ ຍ້ອງ ຍໍ ໃຫ້, ຄວາມຄິດໃນເວລານັ້ນມັນເປັນຄວາມຄິດທີ່ຜິດພາດ ເຮັດໃຫ້ນາງບໍ່ກ້າສູ້ຫນ້າຊາຍຫນຸ່ມປານໃດ, ຍິ່ງເຫັນກັນໜ້າຕໍ່ໜ້າຕາຕໍ່ຕາໃນເວລານີ້ໃຜຊິບໍ່ໜ້າອາຍ, ນາງພໍປາກຮ້ອງຂຶ້ນຫນັດແຮງເພື່ອສາລະພາບ ຄວາມ ຜິດ ໂຕ ເອງ ຕໍ່ຫນ້າຊາຍຫນຸ່ມໃຫ້ມັນຮູ້ແຈ້ງກັນໄປ, ແຕ່ຍາກທີ່ຈະເຮັດ

ທຳນອງນັ້ນໄດ້. ເບິ່ງທ່າທີຂອງເຂົາກໍບໍ່ເຫັນວ່າມີຫຍັງ ຊິພໍໃຫ້ນາງເຮັດບໍ່ໄດ້ ເພາະການມາ ຂອງ ທອງ ເລື່ອນ ຄາວນີ້ກໍຄືກັນກັບສະໄໝ ໗-໘ ເດືອນຫລັງ. ທຸກຢ່າງ ຄືເປັນກັນເອງ.

– ນ້ອງຄິດຫຍັງຢູ່ຄືສິເຫງົາງວາດໃດວາດໜຶ່ງ ?

– ບໍ່ຄິດຫຍັງພຽງແຕ່.

– ອື້ ອ້າຍເຂົ້າໃຈດີ.

– ເລື່ອງຫຍັງລະອ້າຍທອງເລື່ອນ ?

– ເລື່ອງບໍ່ພໍໃຈ.

– ເຊົາໄດ !

ນາງຫລິງເວົ້າແຮງຂຶ້ນກັບບາດ ເຮັດໃຫ້ນົກຈອກສອງ ໂຕ ພວມແລ່ນປອກກັນ ຢູ່ກາງ ເຮືອນ ບິນອອກທາງປາຍ ຊານດ້ວຍຄວາມປ້ານກົວ. ທັງແນມເບິ່ງໜ້າຊາຍໜຸ່ມ ຊຶ່ງມີທ່າ ທາງຍິ້ມ ຢູ່ຕະຫລອດ ຈະວ່າ ຍິ້ມ ເປາະເປີ້ຍ ກໍບໍ່ ແມ່ນຍິ້ມແບບເສຍໃຈກໍບໍ່ແມ່ນໜ້າແດງໄປທົ່ວ.

– ຊິໃຫ້ອ້າຍຕີລາຄາແບບໃດຊັ້ນບ່າ ?

– ບໍ່ຕີລາຄາຫຍັງດອກ ນ້ອງເອງຄວນຕີລາຄາຊົມ ເຊີຍອ້າຍຕ່າງຫາກບໍ່ແມ່ນຫວະ ?

ວຽງສາຄອນ ຈັບເອົາໜັງສືພິມຍື່ນໄປໃຫ້ທອງເລື່ອນ

ອ່ານທັງສາຍຕາຫລຽວສັກໃສ່ກັບຕະຫລອດ.

– ມີຂ່າວອ່ານຫລາຍເນາະ?

– ມີຫລາຍລະຕີ໊ ຂ່າວຫລາຍ ແລະ ສຳຄັນດ້ວຍ.

– ອັນໃດສຳຄັນ ວຽງ.

– ເປີດອ່ານໜ້າ ມີ ແຂວງວຽງຈັນ ເຂດເມືອງວັງວຽງເບິ່ງດີ.

ທອງເລື້ອນເປີດໄປໜ້າ ມີ ຕັ້ງໃຈອ່ານຕາມທີ່ບາງແບະ ບຳຢ່າງໃຈເປັນໆລາງເທື່ອກໍ່ເຫລືອດແສກຕາຂຶ້ນເບິ່ງວຽງ ສາຄອນ, ທີ່ຄອຍເບິ່ງຢູ່ໄວ້ກ່ອນຈົນລືມແຖວໜັງສືກໍ່ມີ.

– ເປັນແນວໃດລະອ້າຍທອງເລື້ອນ?

– ທຳອິດອ້າຍກໍ່ບໍ່ຄິດຄືກັບວ່າຊິໄດ້ຮັບການເບິ່ງແຍງ ຈາກຂັ້ນເທິງພຽງນີ້. ແຕ່ມັນກໍ່ເປັນໄປແລ້ວ. ຈຶ່ງເຮັດໃຫ້ ອ້າຍພາກພູມໃຈທີ່ສຸດ ແລະ ເຫັນວ່າ ສູນກາງພັກແລະລັດ ຖະບານມີສາຍຕາເຫັນກ້ວາງນອງໄກສາມາດເບິ່ງທົ່ວເຖິງ ປະຊາຊົນໄດ້ຢ່າງຖືກຕ້ອງ.

– ໄດ້ເຂົ້າຫລາຍປານໃດອ້າຍ, ທົ່ວເຂດເມືອງວັງວຽງ.

– ບັງເກັບກຳບໍ່ທັນໄດ້ຄັກ, ສະເພາະຕົວເມືອງເກັບ ກຳໄດ້ຫມົດແລ້ວ, ໄດ້ເຂົ້າທັງຫມົດ ໓00.000 ໂຕນ (ສາມຮ້ອຍພັນ ໂຕນ).

– ໂທ້...! ປີຫນ້າກໍຊິໄດ້ຫລາຍກ່ວານີ້ເນາະ?

ນາງຫລີງຮ້ອງອອກມາຈົນລືມຕົວ ເຮັດໃຫ້ຊາຍຫນຸ່ມຫລຽວ ແນມເບິ່ງຫນ້າ ດ້ວຍທ່າທາງ ຂ້ອນຂ້າງຕື່ນເຕັ້ນດີກັບ ບັນຍາກາດໃນເວລານັ້ນ ຖ້າຈະເວົ້າແລ້ວ ອາກາດບໍ່ຫນາວບໍ່ຮ້ອນພໍດີປູ່ ແຕ່ປານນັ້ນວຽງສາຄອນ ເຫື່ອຊຶມດັງຈັບເປັນເມັດ. ບາດແຜຫົວໃຈ ທີ່ເຄີຍແປ້ວພວມຖືກປະຄັບປະຄອງປິ່ນປົວຈາກອາຍອຸ່ນ ຈາກຄວາມຊາບຊຶ້ມເຂົ້າໃຈດີຕໍ່ກັນ. ໃບຫນ້າຂອງນາງເລີ້ມແຈ່ມໃສເມື່ອເຫັນທ່າທີຂອງທອງເລື່ອນ ສະແດງອອກມາ ບັງປູ່ໃນລະດັບເກົ່າ ບໍ່ປ່ຽນແປງ. ສົມກັບຄວາມສັນຍາກ່ອນຊິລີ້ງເຮືອນ, ແຕ່ນາງກໍ່ຫນັກໃຈຕົວເອງທັງຄຶດຄື ວ່າຊິເຮັດແນວໃດ ຈຶ່ງຈະໃຫ້ຊາຍຫນຸ່ມເຂົ້າໃຈສະຫນິດແຫນ້ນຄືນ.

– ວຽກ ອ້າຍເສບດາຍເຮັດນາອີກປີຕໍ່ໄປ ຕາມທີ່ວາງໂຄງການໄວ້ກັບຂັ້ນເທິງເມືອງວ່າຊິປຸກລະດົມເຮັດນາແຊງໃຫ້ໄດ້.

– ເປັນຫັຍງຈຶ່ງເສບດາຍກະດຽວວ່າເຮັດປູ່?

– ທາງຂັ້ນເທິງ ເພິ່ນເອີ້ນອ້າຍກັບຄືນ ມາເຮັດວຽກປູ່ກະຊວງ. ຫນ້າທີ່ວິຊາລະເພາະ ດັ່ງຄ້ວາ ການກະເສດຫລັງຈາກນັ້ນ ເພິ່ນຊິສົ່ງໄປຮຽນວິຊາລະເພາະ ເພີ່ມເຕີມ

ອີກ ໑ ປີ.

– ດີແລ້ວເດ້ອ້າຍ ນ້ອງຂໍຊົມເຊີຍຕໍ່ຜົນງານ.

– ນ້ອງເດ້ລະ?.

– ເຮົາດວງກນຳອຳນາດການປົກຄອງໄດ້ຍິນວ່າເພິ່ນຊິສົ່ງໄປຮຽນວິຊາຕຳຫລວດ ໖ ເດືອນ.

ຄວາມອົບອຸ່ນ ທີ່ໜຸ່ມສາວທັງສອງໄດ້ຮັບ ນັ້ນເປັນຄວາມອົບອຸ່ນ ມາຈາກວຽກງານ ທີ່ປະຕິບັດຕົວຈິງ ມາດ້ວຍຄວາມພະຍາຍາມ. ເພື່ອນຳພາປະເທດຊາດກ້າວສູ່ຍຸກສະໄໝອຸດົມຮັ່ງມີ. ມັນປຽບເຫມືອນລູກທີ່ໄດ້ຮັບການເອົາໃຈໃສ່ປິ່ນປົວບົວລະບັດຈາກພໍ່ແມ່ຢ່າງດີດແທດ. ເຮັດໃຫ້ລູກເຕີບໃຫຍ່ຂຶ້ນມາທ່າມກາງແສງສະຫວ່າງ ແຈ້ງໄປທົ່ວຜືນແຜ່ນດິນລາວ, ປະເທດຊາດທີ່ສຳຄັນ ເປັນໜ້າທີ່ຂອງຄົນລາວທຸກເພດໄວ ຮ່ວມໄມ້ຮ່ວມມືກັນ ກໍ່ສ້າງປົວແປງດັບສູນຄວາມອຶດຢາກລ້າຫລັງ, ພ້ອມກັນກ້າວເດີນໄປສູ່ຍຸກໃໝ່ທັນສະໄໝທອງເລື່ອນ ແລະ ວຽງສາຄອນພົບກັນໃນຄາວນີ້ ທັງສອງ ໄດ້ເລົ່າຜົນງານ ທີ່ໄດ້ປະຕິບັດມາຢ່າງເບີກບານມ່ວນຊື່ນ, ສະເພາະທອງເລື່ອນ ເລົ່າເລື່ອງເຮັດວຽກໃຫ້ເພື່ອນສາວຟັງມີແຕ່ເລື່ອງຕື່ນເຕັ້ນທັງໝົດ.

# ທີ່ເພິ່ງຂອງເຂົາຄາວນັ້ນ

* ບຸນທະວີ ຫອບປຶ້ມຮຽນ ກ້າວຍ່າງໄປນັ່ງອີງຢູ່ກ້ອງ ຕົ້ນຫ່ຳງິ້ວໜ້າອາຄານໂຮງຮຽນອຸດົມວຽງຈັນ ມື້ນີ້, ເຂົາ ອິດເມື່ອຍຫລາຍສົມຄວນ, ເນື່ອງຈາກລົດຖີບທີ່ໃຊ້ຫຽວໄປ ມາໂຮງຮຽນທຸກມື້ຕົບແຕກກາງທາງບໍ່ມີທາງໃດຈະແກ້ໄຂ ໄດ້ ເຂົາຈຳເປັນຕ້ອງຊູລົດຍ່າງແຕ່ບ້ານສີຖານກວ່າຈະເຖິງ ໂຮງຮຽນ ເຮັດໃຫ້ເຂົາເມື່ອຍລ້າ; ເພື່ອນນັກຮຽນນັກສຶກສາ ທຸກຄົນ ພາກັນຢືນສົນທະນາກັນເປັນຈຸ້ມ ເປັນໝູ່ ບາງ ຜ່ອງບົວລະບັ ເຫີດຜັກສວນ ບາງຜ່ອງເປີດປຶ້ມເບິ່ງບົດຮຽນ ນັ່ງຢູ່ດານເດີ່ນຫຍ້າ, ຄວາມເມື່ອຍຂອງເຂົາເຮັດໃຫ້ຈິດໃຈ ບໍ່ສູ້ ຈະ ດີ ປານ ໃດ. ພະຍາຍາມຈະເອົາປຶ້ມອອກມາເປີດ ອ່ານ ປາກົດວ່າສອງມືລ່ອຍລົງກັບບາດ, ເຂົາປ່ຽນທ່າທີ

ນັ່ງແບບຂັດຕະມາດມາເປັນນັ່ງແບບປຸກຫົວເຂົ່າໃຊ້ສອງມື ກອດໄວ້ແລ້ວ ອ່ວາຍຫນ້າໄປທາງທິດຕາເວັນອອກ.

ຊາຍຫນຸ່ມວາດສາຍຕາໄປມາ ເພື່ອຊອກຫາຈຸດອັນໃດ ອັນຫນຶ່ງ ພໍເປັນອາຫານຕາຍາມເຊົ້າ ຊຶ່ງ ຕາ ເວັນ ພວມ ສ່ອງແສງສີ ທອງ ອາບອາຄານບ້ານເຮືອນ ຕົ້ນໄມ້ທິວນະ ຄອນວຽງຈັນ, ລົດລາແລ່ນວິດວິດໄປມາບໍ່ຂາດແຕ່ລະນາ ທີ. ເຂົາປ່ຽນສາຍຕາຫລຽວໄປກ້າວັດທາດຝຸ່ນ ກ່ອນຈະ ເຖິງວັດເປັນເດີ່ນຫຍ້ານ້ອຍພວມປົງຂຽວງາມ ທັດໄປກ້າ ນ້ຳຂອງແມ່ນອາຄານລັດຖະການພາສີອາກອນ, ພາບ ທີ່ເຂົາເຫັນຢູ່ຕໍ່ຫນ້າດຽວນີ້ ເປັນສິ່ງເຕືອນໃຈເຮັດໃຫ້ເຂົາ ຄິດທວນຄືນຫລັງເມື່ອຄັ້ງກ່ອນ, ຊຶ່ງເຂົາໄດ້ຮັບຄວາມເຈັບ ປວດຫົວໃຈ, ເຮັດໃຫ້ຊີວິດຂອງເຂົາຕ້ອງຈົມເລິກລົງ ມືດ ແປດດ້ານ. ບ່ອນບໍລິເວນເດີ່ນຫຍ້ານ້ອຍແຫ່ງນີ້ ສະໄຫມ ອຳນາດການປົກຄອງເກົ່າ, ພວກ ມັນ ປຸກ ຜາມ ຍາວຢຽດ ເລາະໄປຕາມທາງຖະຫນົນລ້ານຊ້າງ ຈູກັບທາງຮ່ອມເຂົ້າ ວັດທາດຝຸ່ນ ເປັນ ຕູບ ຜາມ ສຳ ຫລັບ ຈັດ ພິທີໃນມື້ສຳຄັນ ຂອງພວກມັນ ໃນທີ່ແຫ່ງນີ້ເອງເຈົ້າສັກດີນາໄດ້ມານັ່ງປະ ດັບຫລຽນໃຫ້ແກ່ລູກມືຜູ້ບອກໄດ້ໃຊ້ພັງຂອງມັນ ໃນຖານະ ຂ້າຄົນລາວ ປາບປາມປະຊາຊົນທີ່ຕໍ່ສູ້ຍາດເອົາຄວາມເປັນ

ທ່າ ແລະ ເອກະລາດ, ພ້ອມດຽວກັນໃນທີ່ແຫ່ງນີ້ເອງຈັກກະພັດສອງໂຕ ໄດ້ສັນລະເສີນເບີນບໍ່ໃຫ້ຄົນລາວຫລົງຜິດໄປນຳພວກມັນ ລົງມືລ້າງຜານທຳລາຍຊາດ, ໂຮງຮຽນທີ່ເຂົາມີໂອກາດໄດ້ກັບຄືນມາຮຽນໃຫມ່ນີ້ ແຕ່ກ່ອນລ້ວນແລ້ວແຕ່ແມ່ນໂຮງຮຽນສຳຫຼັບພວກສັກດີນາ ນາຍທຶນຄຸ້ມຄອງ, ຖ້າຄົນໃດເປັນລູກເຈົ້າຫລານນາຍ ຜູ້ຮັ່ງມີເງິນເຫລືອໃຊ້ຈ່າຍຈຶ່ງມີໂອກາດເຂົ້າມາຮຽນໄດ້ ສະໄຫມອຳນາດການປົກຄອງເກົ່າເຂົາໃຫ້ຊື່ວ່າ "ລີເຊວຽງຈັນ ຫລື ວິທະຍາໄລວຽງຈັນ" ແຕ່ບຸນທະວີເຂົາສາມາດຢ່າງຂາເຂົ້າໄປຢຽບທຳລະນີໂຮງຮຽນ ລີ້ເຊວຽງຈັນໄດ້ຢ່າງສະຫງ່າອົງອາດເປັນເວລາ ໔ ປີ, ບ້ອນການດຸຫມັ່ນຂອງເຂົາເສັງໄດ້ຄະແນນດີເດີ່ງປານນັ້ນກໍຍັງບໍ່ພົ້ນສາຍຕາຂອງພວກມັນໄດ້, ບ້ອນຄວາມທຸກຍາກປາກຫມອງ ອາໄສວັດວາສາສະຫນາເປັນທີ່ເພິ່ງຊຸກຫົວນອນ ເຂົາຈຶ່ງຖືກພະຍາຍາມປັດເຂັ່ຍອອກຈາກວິທະຍາໄລແຫ່ງນັ້ນຢ່າງເຈັບແຄ້ນແຫນ້ນອົ່ງ. ຕອນນັ້ນເຂົາຮຽນຢູ່ຕຣິວຊຸ່ມ (ປີທີ ໔) ໃນປີ ໑໙໗໑ ເຂົາສ້າງຄວາມຫວັງໃຫ້ກັບຕົນເອງໄວ້ວ່າ "ຖ້າເສັງດີປະໂລມໄດ້ແລ້ວ ຈະບໍ່ອອກໄປເຮັດການ ຈະຂໍຮຽນໃຫມ່ ແມ່ນຈະທຸກຍາກປານໃດກໍຕາມ. ທ້າຍປີມາການສອບເສັງຜົນອອກມາ

ເຂົາສາມາດສ້າງກຽດຊື່ສຽງໃຫ້ກັບຕົວເອງອີກຄັ້ງຫນຶ່ງໃນຫົວໂຮງຮຽນຊັ້ນປີທີ ໔ ສາມາດເສັງໄດ້ທີ່ຫນຶ່ງສ້າງຄວາມຕື່ນເຕັ້ນດີໃຈຈົນບອກບໍ່ຖືກ. ຕອນເຊົ້າມື້ນັ້ນເຂົາໄປເບິ່ງຜົນການສອບເສັງໄດ້ພໍ້ຫມູ່ພວກຫລາຍໆ ຄົນຢືນອັ່ງອໍ່ກັນຈົນເຕັມເດີ່ນຫນ້າໂຮງຮຽນ.

- ຈັ່ງໃດບຸນທະວີຊິລ້ຽງຫຍັງເຮົາ?
- ໂຫະອີບ! ເງິນຊື້ສໍຊື້ປື້ມຮຽນກໍຫາຍາກແລ້ວທອງຄຳ.
- ເອີນາ... ໂຕເສັງໄດ້ທີ່ຫນຶ່ງສະຫລະເງິນດ້ານຮ້ອຍກີບລ້ຽງແປບຊີຊີບໍ່ໄດ້ບໍ ?

ບຸນທະວີງຶກຫົວຕອບເພາະຂືນຕໍ່ຄວາມ ຂໍ ຮ້ອງ ຂອງຫມູ່ບໍ່ໄດ້ເຂົາພາ ທອງຄຳ ຍ່າງໄປທີ່ຮ້ານເຄື່ອງດື່ມປະຕູອອກເບື້ອງນ້ຳຂອງ, ເຂົາຮູ້ສຶກພາກພູມໃຈຕໍ່ຄວາມມານະອົດທົນຂອງຕົນໂດຍບໍ່ໄດ້ສິ້ນເປືອງຊັບສິນເງິນຄຳພໍ່ອັດໂດຍອາໄສເຊົ່າລົດສາມລໍ້ຖີບຫາເງິນມາຊື້ອຸປະກອນ ການຮຽນ ເຂົາທົນທຸກມາເປັນເວລາ ໔ ປີຈຶ່ງເຮັດໃຫ້ການຮຽນຂອງເຂົາກ້າວກະໂດດຢ່າງບໍ່ຢຸດຢັ້ງ; ສະໂມສອນຮ້ານເຄື່ອງດື່ມເຕັມໄປດ້ວຍບັນດານັກຮຽນ ນັກສຶກສາຈັດລ້ຽງສະຫລອງແປບຊີກັນຢ່າງອຶກກະທຶກຄຶກໂຄມ, ການສົນທະນາມີແຕ່ເລື່ອງຜົນການສອບເສັງ. ບາງຄົນຕິ ນາຍ ຄູ,

ບາງຄົນດີໜູ່ພວກບໍ່ປ່ອນເຈົ້ບຂາວໃຫ້ກັບ, ບາງຄົນຄຸຍໂມ້ກ່ຽວກັບວິຊາສອນເສັງງ່າຍເອົາແທ້ເອົາວ່າ, ຜູ້ເສັງບໍ່ໄດ້ນັ່ງຄໍຄິກແຕະແຊະບໍ່ປາກ.

– ໂຕຊິຮຽນຕໍ່ຫລືຊິອອກໄປເຮັດການ ບຸນທະວີ ?

– ເຮົາກືດວ່າຊິຮຽນຕໍ່ໂຕເດ ?

– ເຮົານີ້ມັນເວົ້າຍາກສຽວ, ພໍ່ແມ່ເຮົາຢູ່ສະຫວັນນະເຂດພຸ້ນບາຈັກຊິເອົາເງິນໃສເປັນທຶນເປັນຮອນ.

– ຫາລະບໍ ?

– ຊິໄປຫາທາງໃດ ?

– ສຳຫລັບເຮົາຊິກັບບ້ານປາກກະບຸງຫາປາຂາຍ ພໍໄດ້ເງິນຕັດເຄື່ອງນຸ່ງ ແລະ ປຶ້ມ.

– ໄດແດ່ດີໂຕ ບ້ານຢູ່ໃກ້ບໍ່ຮອດ ໑໐໐ ຫລັກຊ້ຳ.

– ຄັນຊັ້ນໂຕປາກຮຽນຕໍ່ເຊີກິງຄືກັນກັບເຮົາແມ່ນບໍ ?

– ໃຈກໍຄືດແນວນັ້ນບຸນທະວີ.

– ຄັນຊັ້ນໄປຢູ່ບ້ານນຳເຮົາຫາປາຂາຍເອົາເງິນເລື້ອງອື່ນບໍ່ຕ້ອງຄຶດຍາກວ່າແຕ່ໂຕບໍ່ຂີ້ຄ້ານເປັນ ພໍຕິກລົງບໍ ?

– ນີ້ໃດຊິເນື່ອ

– ຄັນເວົ້າກໍນີ້ອື່ນນີ້ໂລດແລ້ວ, ເງິນຄ່າລົດປີມຄູບາອາຈານກ່ອນ.

– ຕົກລົງເຮົາຊິໄປນຳໂຕ.

ທັງສອງຄົນສົນທະນາສ້າງ ຄວາມ ຫວັງ ໃຫ້ ກັບ ຕົນເອງຢ່າງເຫມາະສົມ ວາງແຜນເພື່ອໄປຫາປາຂາຍເອົາເງິນຊື້ອຸປະກອນການຮຽນ ແລະ ຕັດເຄື່ອງນຸ່ງໃນສົກຮຽນປີ ໑໙໗໑–໗໒ ບັນດານັກຮຽນ ນັກສຶກສາຍັງຫນາແຫນ້ນ ເບິ່ງຜົນການສອບເສັງ ບາງຄົນເຂົ້າບາງຄົນອອກ, ບຸນທະວີແລະທອງຄຳຮູ້ສຶກມີຄວາມຕື່ນເຕັ້ນຕໍ່ການທີ່ ຈະ ບຶກບືນເພື່ອສ້າງອານະຄົດຂອງຕົນໃຫ້ກ້າວຫນ້າຕໍ່ໄປ.

– ຮຸ່ງເຊົ້າມື້ຕໍ່ມາເຂົາທັງສອງລາຄູບາອາຈານ ແລະ ຫມູ່ພວກທຸກຄົນແລ້ວເອົາພົກເຄື່ອງຂອງຈຳເປັນຍ່າງກົງມາຄິວລົດຕະຫຼາດເຊົ້າ ເພື່ອ ຈະ ຂຶ້ນ ລົດ ໂດຍ ສານ ສາຍ "ວຽງຈັນ – ບ້ານເກີນ" ຄິວຕັ້ງຢູ່ຫາດຝຸ່ນ ທັງສອງທັງຍ່າງທັງສົນທະນາເຖິງບັນຫາການຮ່ຳຮຽນຕໍ່ໃນ ອານາຄົດ ຈຸດປະສົງແມ່ນຢາກໄປຮຽນຕໍ່ຕ່າງປະເທດ ຖ້າຫາກບຸນນາວາດສະຫນາມີ, ເຂົາເອົາເຄື່ອງຂອງໄປວາງໄວ້ຄິວລົດແລ້ວກໍພາກັນຍ່າງຜ່າວັດຫາດຝຸ່ນ ກັບມາຫາຫມູ່ພວກຊຶ່ງມື້ນີ້ກໍຄືວານນີ້, ບັນດານັກຮຽນ ນັກສຶກສາຍັງຫລັ່ງໄຫລກັນໄປເບິ່ງຜົນການສອບເສັງ, ເຂົາຍິ້ມຕໍ່ເພື່ອນນັກຮຽນທຸກຄົນແລ້ວຍ່າງກົງໄປຫາກະດານປະກາດ ຜົນ ການ

ສອບເສັງ, ເຂົາປີ້ນເບິ່ງໃບປະກາດທຳອິດທີ່ເປັນຕົວ ສີແດງໄດ້ຕິດປະກາດວ່າ:

ປະກາດ

ໃບປະກາດຜົນການສອບເສັງ ທີ່ ທາງ ໂຮງ ຮຽນ ຕິດ ມື້ວານນີ້, ເປັນການກີຊີ້ບິດ ແລະ ລຽບລຽງຄະແນນຜິດ ຄືກັນດັ່ງນັ້ນຜູ້ທີ່ສອບເສັງໄດ້ຂໍໃຫ້ຖືເອົາຕາມລາຍຊື່ນີ້, ຈຶ່ງປະກາດມາໃຫ້ຜູ້ປົກຄອງ, ບັນດານັກຮຽນ ແລະ ນັກສຶກສາຊາບທົ່ວເຖິງກັນ.

ບຸນທະວີອ່ານປະກາດຈົບລົງ ເຂົາ ຟ້າວ ເຊືອນ ຕົວໄປອ່ານລາຍຊື່ທີ່ຕິດທັດມາຂ້າງເບື້ອງເໜືອ, ເຂົາອ່ານລາຍຊື່ສອງສາມເທື່ອກໍບໍ່ປາກົດເຫັນຊື່ເຂົາ ແລະ ທອງຄຳປູ່ເລີຍ, ມັນເໝືອນຟ້າຜ່າລົງກາງຫົວໃຈ. ຊື່ຂອງເຂົາທີ່ຖືກປະກາດໄປເມື່ອວານນີ້ສອບເສັງໄດ້ ແຕ່ມື້ນີ້ພັດມີຊື່ຄົນອື່ນມາແທນ, ສຽງໂສເລ່ໃຈຄຂານກັນເລີ່ມດັງຮຸນແຮງຂຶ້ນ ພວກທີ່ ມີຊື່ວານນີ້ ມື້ນີ້ບໍ່ມີຊື່ ພາກັນຈຸ້ມຫົວສົນທະນາກັນເວົ້າດັງ ບັນດາເພື່ອນນັກຮຽນນັກສຶກສາ ກໍພາກັນອັ່ງອໍເວົ້າຕຳໜິຕິຕຽນ ການກະທຳ ຂອງຜູ້ອຳນວຍການ ແລະ ຄູອາຈານ, ບຸນທະວີໜ້າແດງຮືດໆຂຶ້ນ ເຂົາອ້າປາກເປັ່ງສຽງຮ້ອງດັງອອກມາວ່າ :

– ມັນບໍ່ຍຸຕິທຳ! ໆ...

ຈາກນັ້ນ ຂະບວນນັກຮຽນ ນັກສຶກສາເຮໂລກັນ ເຂົ້າມາຫາ ບຸນທະວີ ເປັນໝູ່ເປັນຝູງ, ພວກເຂົາພາກັນມາຄອບໃຫ້ ການສະໜັບສະໜູນຕໍ່ບຸນທະວີທີ່ພວມປີ້ນເວົ້າ, ເຫດການ ເລີ້ມລວມຕົວ, ແປວໄຟພວມລຸກພວດໆຄ້ອນກຸ້ມ.

– ບໍ່ຍຸຕິທຳ! ພວກເຮົາຊິເຮັດແນວໃດ! ?

– ຕໍ່ສູ້ເອົາຄວາມເປັນທຳ!.

ສຽງຮ້ອງຕອບ ຂອງບັນດາເພື່ອນຝູງໃນໂຮງຮຽນ ຊຶ່ງ ປຽບເໝືອນຄົນໃນຄອບຄົວດຽວກັນ ດັ່ງກ້ອງສະໜັ່ນໄປທົ່ວ ເດີ່ນ. ສະທ້ອນໃສ່ອາຄານເຮັດວຽກການ ຊຶ່ງຂ້າລາຊະການ ພວກໜຶ່ງ ພວມເຮັດວຽກຢ່າງຂ້ຽວຂາດຢູ່ເທິງນັ້ນ ຢູ່ບໍ່ໄດ້ ພາກັນອອກໜີ, ນັກສຶກສາຄົນໜຶ່ງທ່າທາງເອົາການເອົາ ງານ ຍ່າງເບັດໜ້າມາໃສ່ເຂົາ ພ້ອມກັບເດ່ມືຈັບຢ່າງແຂງ ແຮງ ເຂົາເວົ້າວ່າ:

– ຊົມເຊີຍສະຫາຍ ມີທາງດຽວຄືຕໍ່ສູ້ໃຫ້ເລື່ອງມັນ ແຈ້ງຂາວ.

– ໂຕກໍຢູ່ສະພາບດຽວຄືພວກເຮົາບໍ່?

– ຄືກັນ ແຕ່ວ່ານັກຮຽນ ນັກສຶກສາທັງໝົດ ໃນວິທະ ຍາໄລວຽງຈັນ ແມ່ນຖືວ່າ ພວກເຮົາຢູ່ໃນຊະຕາກຳອັນດຽວ

ກັນ ຖ້າປ່ອຍໃຫ້ເລື້ອງນັ້ນເກີດຂຶ້ນເລື້ອຍໆ ມັນຈະເປັນຜົນສະທ້ອນ ໃຫ້ເຂົາເໝືອນກັນ, ພວກເພື່ອນທຸກຄົນພ້ອມແລ້ວທີ່ຈະສະໜັບສະໜູນ

ບຸນທະວີ ຟັງຄຳເພື່ອນທຸກຄົນນັ້ນແລ້ວ ເຂົາອ່ວາຍໜ້າໄປເວົ້າກັບເພື່ອນທຸກຄົນ ຊຶ່ງຂະບະນີ້ພວມຫລັ່ງໄຫລກັນເຂົ້າສູ່ເດີ່ນໂຮງຮຽນເລື້ອຍໆ. ເກືອບຊີເຕັມ, ເຂົາຮ້ອງຖາມທຸກໆຄົນວ່າ:

– ພວກເຮົາທຸກຄົນຊິຕໍ່ສູ້ບໍ ?!.

-- ຕໍ່ສູ້ !

ບັດນີ້, ຂະບວນຂອງເຫລົ່ານັກຮຽນ ນັກສຶກສາ ໄດ້ຂະຫຍາຍວົງກວ້າງອອກເລື້ອຍໆ ຈາກຮູບການສົນທະນາກັນ ປ່ຽນມາເປັນ "ຂະບວນອັນໃຫຍ່ ຕໍ່ສູ້ເພື່ອຄວາມເປັນທຳ" ຕໍ່ການທີ່ຜູ້ປົກຄອງ ຄູອາຈານສ້າງຂຶ້ນ ແກ່ນິດສະຫາຍ ໃນຫ້ອງຮຽນດຽວກັນ, ສຽງໂຈດຂານຮ້ອງໂຮ ຂໍພົບຜູ້ອຳນວຍການ ວິທະຍາໄລວຽງຈັນ ໃຫ້ມາປາກົດຕົວ ຊີ້ແຈງສະພາບການທີ່ພວກເຂົາສ້າງຂຶ້ນ, ດ້ວຍຄວາມເຈັບແຄ້ນແໜ້ນໃຈ ໃຫ້ແກ່ພວກເຂົາ. ແຕ່ແລ້ວທັງຜູ້ອຳນວຍການແລະຄູກໍບໍ່ມີຜູ້ໃດກ້າມາປະກົດຕົວ, ຂະບວນການຕໍ່ສູ້ແຜ່ຂະຫຍາຍອອກກວມເຖິງຄະໜົນລ້ານຊ້າງ, ການສັນຈອນ

ໄປມາຖືກຕັດຂາດລົງທັນທີ ການເວົ້າປາກເປົ່າໄດ້ປ່ຽນມາໃຊ້ໂທລະໂຄ່ງ. ຊຶ່ງພວກນັກສຶກສາຂົນຂວາຍຊອກມາ. ບຸນທະວີປີນປູ່ແທ່ນເສົາທຸງ ຈັບໂທລະໂຄ່ງນ້ອຍ ປຸກລະດົມເພື່ອນນັກຮຽນ ນັກສຶກສາ, ໃຫ້ທຸກຄົນປຸ້ນລຸມສາມັກຄີຕໍ່ສູ້ເອົາຄວາມເປັນທຳ. ສະສາງສິ່ງເຫນົ່າເຫມັນໃຫ້ມັນແຈ້ງຂາວຂຶ້ນ, ທອງຄຳ ບ່າງເຂົ້າໄປຫາບຸນທະວີປູ່ແທ່ນເສົາທຸງ.

- ບຸນທະວີ ! ຕຳຫລວດມາແລ້ວໄດ.
- ນາກໍ່ປ່າ ໂຕປ້ານບໍ ?.
- ກະ... ບໍ່ປ້ານ ຫັ້ນແຫລ້ວ...
- ໂຕຊິຕື່ນຕົກໃຈແນວໃດ ເບິ່ງຕິ! ເພື່ອນໆຂອງພວກເຮົາເປັນພັນໆຊິຂ້າກໍ່ໃຫ້ມັນຂ້າຕີ.

ທອງຄຳບໍ່ຊ່າງຊິຕອບຄຳເວົ້າຂອງບຸນທະວີໄດ້ແຕ່ ປືນຊົງຫລຽວຫນ້າເບັດໄປໃສ່ຕຳຫລວດ ຊຶ່ງພວມເຄື່ອນເຂົ້າມາເປັນຮ້ອຍ, ບັນດານັກຮຽນ ນັກສຶກສາເຫັນຕຳຫລວດກໍ່ພາກັນໂຮ່ຮ້ອງທັບຖົມ, ພວກມັນນຸ່ງເຄື່ອງແບບ ເຂົ້າ ສະໜາມທັງປືນ, ທັງຄ້ອນຕະບອງໄມ້ດູ່, ລະເບີດແກດນ້ຳຕາ, ກະໂຫລກປ້ອງກັນອາຍພິດ, ຕຳຫລວດບັກຫນຶ່ງເຖົ້າແດ່ທ່າທາງຂຶງຂັງນຸ່ງເຄື່ອງເຕັມບົດ ຈັກດາວຈັກອັນໃດຕໍ່ອັນ

ໃດໃສ່ເອິກເສື້ອຈີນເດັນ, ມືຈັບໂຫລະໂຄ່ງແບບ ດຽວ ກັບຂອງບຸນທະວີເຂົ້າປະຕູຮົ້ວວິທະຍາໄລວຽງຈັນແລ້ວຍົກ ບັ້ງໂຫລະໂຄ່ງຂອງມັນຂຶ້ນເວົ້າວ່າ:

– ພວກສູເປັນລູກເປັນຫລານ, ພາກັນກັບເມືອບ້ານ ດຽວນີ້!, ບໍ່ດັ່ງນັ້ນຈະຖືກ ຈັບຫມົດທຸກຄົນໃນຂໍ້ຫາກໍ່ຄວາມວຸ້ນວາຍ.

ຕຳຫລວດເຖົ້າຫມໍ່ນັ້ນເວົ້າສຸດສຽງຮ້ອງໂຮຂອງບັນ ດາເຫລົ່ານັກຮຽນນັກສຶກສາ.ດັງກຶກກ້ອງຂຶ້ນ;ເຮັດໃຫ້ຕຳຫລວດຫມໍ່ນັ້ນເຮັດຫນ້າຮາກເຈ່ເລ່ສົບເຫບັງບົບໆ. ມັນເຫລືອດຕາໄປໃສ່ບຸນທະວີບາດຫນຶ່ງແລ້ວກໍ່ເຫລືອດໄປໃສ່ລູກ ນ້ອງຂອງມັນ, ຈາກນັ້ນລູກນ້ອງທຸກຄົນກໍ່ປາຍກຳລັງ ໂອບ ລ້ອມນັກສຶກສາໄວ້ທຸກຈຸດເພື່ອເປັນການຂູ່ ຂວັນ ໄປ ທາງ ອ້ອມ. ບຸນທະວີຈັບໂຫລະໂຄ່ງປະກາດຊ້ຳແລ້ວຊ້ຳຕື່ມວ່າ:

– ພວກເຮົາບໍ່ຕ້ອງຢ້ານການຂູ່ຂວັນໃດໆ ທັງຫມົດ. ພວກເຮົາບໍ່ມີຄວາມຜິດອັນໃດບໍ່ຕ້ອງຢ້ານ, ພວກເຮົາທຸກຄົນຢູ່ນີ້ແມ່ນເພື່ອປາກພົບກັບຜູ້ອຳນວຍການ ຫລື ຄູອາຈານຄົນໃດຄົນຫນຶ່ງມາໃຫ້ຄວາມແຈ້ງຂາວ, ຂໍໃຫ້ທຸກຄົນຈົ່ງສາມັກຄີເປັນຈິດຫນຶ່ງໃຈດຽວກັນ.

– ຊົມເຊີຍ ! ຖືກຕ້ອງ !

ຄວາມເວົ້າຂອງບຸນທະວີ ແລະ ສຽງຮ້ອງໂຮຊົມເຊີຍຂອງບັນດາເຫຼົ່ານັກຮຽນ ແລະ ນັກສຶກສາ, ເຮັດໃຫ້ນາຍຕຳຫລວດນັກນັ້ນພ້ອມດ້ວຍລູກນ້ອງຂອງມັນສຽງຕາຍ, ມັນເຮັດສູ່ລູ່ໝາຍຈະຜ່າວົງລ້ອມຂອງນັກຮຽນ ທີ່ຈັບມື ເກາະຕ່ອງກັນປານຫລັກຮົ້ວນັ້ນເຂົ້າໄປຈັບບຸນທະວີ. ແຕ່ແລ້ວກໍ່ຖືກບັນດານັກຮຽນ ນັກສຶກສາຕ້ານຄືນຕຳຫລວດບາງຄົນຖືກຊຸກກົ້ນທົ່ງໃສ່ດິນ. ໃນຂະນະດຽວກັນຜູ້ອຳນວຍການໂຮງຮຽນມາໃນຊຸດຣາວາຍ ຮູບຮ່າງເຕັ້ຍຈ່ອຍ ບ່າງກ່ອມເກາະກ່ອມກ້ອຍເຂົ້າໄປຫາບຸນທະວີ ເຮັດໜ້າເຄັ່ງມຶງຕຶງເຫລືອດສາຍຕາອາຍຸພາບໄປໃສ່ເຫົ່ານັກຮຽນ ນັກສຶກສາ, ພ້ອມດຽວກັນພວກນັກຮຽນ ນັກສຶກສາກໍ່ພາກັນຮ້ອງໂຮແຊວຂຶ້ນຢ່າງເປັນຂະບວນຟົດພື້ນ, ເຮັດໃຫ້ຜູ້ອຳນວຍການໜ້າຮາດເຈ່ເລ່ລົງ. ບຸນທະວີປະກາດໃຫ້ເພື່ອນຂອງເຂົາທຸກຄົນມິດເພື່ອຟັງຄຳຊີ້ແຈງ ຈາກນັ້ນກໍ່ລົງໄມໂຫລະໂຄ່ງໃຫ້ຜູ້ອຳນວຍການເວົ້າ:

– ໃນຖານະທີ່ຂ້າພະເຈົ້າເປັນຜູ້ປົກຄອງ ຜູ້ອຳນວຍການ, ຂ້າພະເຈົ້າປາດຂໍຮ້ອງນັກຮຽນ ນັກສຶກສາໝົດທຸກຄົນໃຫ້ພາກັນກັບຄືນບ້ານ, ມື້ອື່ນເຊົ້າຊິປະກາດຄວາມແຈ້ງຂາວທາງວິທະຍຸ ແລະ ໜັງສືພິມ ຂໍໃຫ້ທຸກຄົນລໍ

ຟັງຜົນການສອບເສັງຕາມທີ່ເວົ້າມານັ້ນ. ຂໍໃຫ້ພວກເຈົ້າແຕ່ງຜູ້ຕາງໜ້າ ໕ ຄົນໄປຮ່ວມໃນການສະສາງບັນຫາເລື່ອງນີ້.

## ຂໍຂອບໃຈ.

ຜູ້ອຳນວຍການເວົ້າຈົບລົງແລ້ວ, ຢ່າງມະລ້ອມມະກ້ອຍເຮັດຕາຂຽວຄືປີກແມງຜູ່ໃສ່ຜູ້ນັ້ນ ຜູ້ນີ້ ຂຶ້ນ ຕຶກ ອາ ຄານ ໂຮງການໄປ ປ່ອຍໃຫ້ນັກຮຽນ ນັກສຶກສາປຶກສາຫາລືຊອກຫາຕົວແທນ; ຄວາມອຶກກະທຶກຄຶກໂຄມມິດໄປຊົ່ວຄາວ ຈາກນັ້ນຕໍ່ມາ ພວກເຂົາສາມາດເລືອກເອົາຕົວແທນຂອງຕົນໄດ້ທັງ ໕ ຄົນ, ບຸນທະວີຈັບໂທລະໂຄ່ງປະກາດຕໍ່ເພື່ອນນັກຮຽນ ນັກສຶກສາ ໃຫ້ຮູ້ໜ້າຮູ້ຕາ ຕົວແທນຂອງເຂົາຊຶ່ງມີລາຍຊື່ດັ່ງນີ້, ທ້າວ ບຸນ ທະ ວີ ຫົວ ໜ້າ ຄະ ນະ, ທ້າວທອງຄຳ, ທ້າວມະນູນ ແລະ ນັກສຶກສາອີກ ໒ ຄົນ. ພາຍຫລັງການຄັດເລືອກ ແລະ ປະກາດໃຫ້ທຸກຄົນໄດ້ຮູ້ໜ້າຮູ້ຕາກັນແລ້ວບັນດານັກຮຽນ ນັກສຶກສາທັງຍິງ ແລະ ຊາຍກໍ່ຄ່ອຍສະລາຍຕົວກັບຄືນບ້ານເຮືອນ ເພື່ອລໍຟັງຜົນຂອງການເຈລະຈາໃນມື້ອື່ນເຊົ້າ, ສຳຫລັບພວກຕຳຫລວດຍັງປືນຄຸມເຊີງຢູ່ນອກຮົ້ວວິທະຍາໄລວຽງຈັນ.

ທ້ອງຟ້າມື້ນັ້ນອົບເອົ້າສົມຄວນ ແສງຕາເວັນໃກ້ຊິທ່ຽງ

ຫມາກຜົນ ອັນສໍ່ສະແດງເຖິງຄວາມບໍ່ເປັນທຳຂອງບັນດາອາຈານບາງຄົນ ແລະ ຜູ້ອຳນວຍການ, ກ້າວທີ່ສອງໄດ້ປຶກສາຫາລືກັນ ເອົາບັນຫາຕ່າງ ໆ ມາຖົກຖຽງດ້ວຍປາກເປົ່າຈົນເຖິງເວລາ ៥ ໂມງກໍບໍ່ມີການຕົກລົງກັນໄດ້, ຜູ້ອຳນວຍການໄດ້ຍື່ນຂໍ້ສະເຫນີໃຫ້ຕົວແທນນັກຮຽນ ນັກສຶກສາວ່າ:

- ນັກສຶກສາທັງຫມົດ ໒໐ ຄົນທີ່ຖືກລຶບຊື່ອອກນັ້ນ, ພວກເຮົາເຫັນດີໃຫ້ພວກເຈົ້າທັງ ៥ ຄົນມີການສອບເສັງໄດ້ ເພາະຄະແນນຢູ່ໃນຂັ້ນອະນຸໂລມ, ສຳຫລັບອີກ ໑៥ ຄົນແມ່ນບໍ່ໄດ້ເດັດຂາດ.

- ຈັ່ງຊີ້ກໍເປັນໄປບໍ່ໄດ້ແລ້ວ ພວກຂ້າພະເຈົ້າເຮັດເພື່ອຫມົດທຸກຄົນ ແລະ ຊອກຫາຄວາມຍຸຕິທຳ, ເລື່ອງນັ້ນກໍແຈ້ງຂາວຢູ່ແລ້ວເດ້!

- ຄວາມຍຸຕິທຳ! ຣະ...ໆ

ຜູ້ອຳນວຍການເວົ້າຄືນຄວາມບຸນທະວີແລ້ວ ຫົວ ຂຶ້ນແຮງຈົນສຽງດັງຄັບຫ້ອງ, ຈົນເຮັດໃຫ້ທຸກຄົນທີ່ຢູ່ໃນນັ້ນລຳຄານໃຈ.

- ພວກເຈົ້ານ້ອຍບໍ່ຮູ້ຄຽງສາຫຍັງພວກເຈົ້າຮູ້ບໍ່ຜູ້ທີ່ມີຊີເສັງໄດ້ຕາມຫລັງນັ້ນແມ່ນລູກຂອງຜູ້ໃດ ? ຈັກຫນ້ອຍ

ພວກເຈົ້າຊິລຳບາກໃດ.

ຜູ້ອຳນວຍການແບ່ຄຳປະກາສິດອອກມາ ເອື້ອຍອີງໃສ່ລູກຜູ້ມີອິດທິພົນທາງການເມືອງ, ທາງການທະຫານ, ຕຳຫລວດ, ຂ້າຣາຊະການຕະຫລອດເຖິງລູກຜູ້ຮັ່ງມີ, ເພື່ອເປັນການຂູ່ຂັວນປາບໃຫ້ຢູ່ຄາມື. ຄວາມເປັນຈິງແລ້ວກໍຄືຄວາມຜູ້ອຳນວຍການເວົ້າມານັ້ນ ບັນດານັກຣຽນທີ່ມີຊື່ສອບເສັງໄດ້ ລ້ວນແລ້ວແຕ່ແມ່ນລູກຜູ້ຮັ່ງມີ ລູກເຈົ້ານາຍລັດຖະມົນຕີ ນາຍພົນນາຍພັນຜູ້ມີອິດທິພົນ, ແຕ່ວ່າຕົວແທນນັກຣຽນ ນັກສຶກສາທັງໝົດກໍບໍ່ເອົາຫົວຊານຳເລື່ອງນີ້ ພວກເຂົາເຈົ້າໄດ້ຊີ້ເຫດຜົນຫລາຍອັນຫລາຍແນວອອກມາໃຫ້ຄູອາຈານ ແລະ ຜູ້ອຳນວຍການໂຮງຣຽນໄດ້ຊາບນຳ, ເຖິງຈະຊີ້ແຈງປານໃດກໍບໍ່ໄດ້ຜົນ ບຸນທະວີ ເວົ້າອອກມາດ້ວຍຄວາມເບືອກເປັນວ່າ :

– ຄົນຊິເວົ້າທຳນອງນັ້ນ ກໍບໍ່ຕ້ອງມາກວດ ແລະ ປຶກສາຫາລືກັນແລ້ວ.

– ມັນບໍ່ມີທາງອອກເດທ້ວ.

– ພວກຂ້າພະເຈົ້າຄຶດວ່າ ນີ້ບໍ່ແມ່ນເຣັດດ້ວຍຄວາມບຸຕິທຳ.

– ປ່ານາ... ນ້ອງນຸ່ງຈັກໜ້ອຍເລື່ອງເຖິງລັດຖະມົນ

ດີ ແລະ ສະເດັດມາບົກພວກເຈົ້າແຮ່ງຊິຍາກໄດ.

– ພວກເຮົາແຮງນັກ, ຊິໄດ້ຮູ້ກັນໄວໆແດ່.

ຜູ້ອໍານວຍການປຸດເວົ້າ ທັງເຮັດສີໜ້າບູດບຶ້ງລົງ ກັບ ບາດມັນເອົາມືຄໍ້າຂະໜມັບຫູສອງຂ້າງ ຄຶດ ດົນ ເຕີບ ແລ້ວ ເງີຍຫນ້າຂຶ້ນເວົ້າວ່າ:

– ຖ້າພວກເຈົ້າບໍ່ຕົກລົງເອົາຕາມເງື່ອນໄຂນັ້ນ,ໝາຍ ຄວາມວ່າເລື່ອງມັນບໍ່ແລ້ວແມ່ນບໍ່ ?

– ຕົກລົງບໍ່ໄດ້, ເລື່ອງກໍ່ຊິບໍ່ແລ້ວ.

– ດັ່ງຊັ້ນພວກເຈົ້າກໍລອງເບິ່ງ, ຖ້າບໍ່ເຊື່ອຄວາມ ຫຸ້ງຍາກຊິເຖິງແກ່ພວກເຈົ້າຫລາຍໄດ.

ການກອດຄໍ້ນ ແລະ ປະຊຸມກັນຂອງບັນດາຄູອາຈານ ຊຶ່ງມີຜູ້ຕາງຫນ້ານັກຮຽນ ນັກສຶກສາຮ່ວມນໍາເລີ່ມແຕ່ ໑໑ ໂມງເຊົ້າຈົນເຖິງ ໕ ໂມງແລງບໍ່ໄດ້ພົນຫຍັງ, ກອງປະຊຸມ ອັດລົງ, ບັນດາຕົວແທນນັກຮຽນກໍພຽງແຕ່ຮູ້ວ່າ "ເປັນ ການບໍ່ຍຸຕິທໍາແທ້" ແຕ່ກໍບໍ່ສາມາດແກ້ໄຂບັນຫາໄດ້.

ແສງແດດອ່ອນຍາມແລງແຜ່ລັດສະໜີ ສີແສງລອດ ກິ່ງງ່າສາຂາຕົ້ນ ທໍາ ງົວ ອານ ໄປ ທົ່ວ ເດີ່ນ ວິ ທະ ຍາ ໄລ ວຽງຈັນລົມຍາມແລງພັດມາເປັນຮູດໆ ຂະຈັດປັດເປົ່າອາ ກາດອົບເອົ້າຕອນສວາຍຫນີຫ່າງອອກໄປ.ບັນດາຕົວແທນ

ນັກຮຽນ ແລະ ຄູອາຈານຕ່າງກໍພາກັນແຍກທາງກັບຄືນບ້ານເຮືອນໃຜມັນ; ສຳຫລັບຕົວແທນນັກຮຽນ ນັກສຶກສາພາກັນແບກເອົາຄວາມຜິດຫວັງກັບຄືນ ຢ່າງຊອກຊ້ຳລະກຳໃຈ, ພວກເຂົາເຈົ້າຕ່າງຄົນກໍຮູ້ສຶກຕົນວ່າ ທີ່ເພິ່ງທັງຫມົດບໍ່ມີອີກແລ້ວ ບ້ານເມືອງເຕັມໄປດ້ວຍຄວາມຂີ້ໂຫດສາມານ ພວກມັນກິນທານເທົ່າໃດ ? ສ້າງວັດວາອາຮາມເທົ່າໃດ ? ແທນທີ່ມັນຊິມີຈິດໃຈເປັນທຳກັບຕື່ມຄວາມໂຫດຮ້າຍຢ່າງປ່າເຖື່ອນຂຶ້ນເລື້ອຍໄປ.

ຮຸ່ງເຊົ້ານີ້ໃຫມ່, ບັນດານັກຮຽນ ນັກສຶກສາທີ່ຖືກຜູ້ອຳນວຍການໃຫ້ຄຳຫມັ້ນສັນຍາ ຈະໃຫ້ຄຳຕອບທາງວິທະຍຸໂດຍປະກາດຜົນຂອງການປຶກສາຫາລືກັນ ລະຫວ່າງຕົວແທນນັກຮຽນ ນັກສຶກສາ, ກັບຄູອາຈານ. ຂ່າວເຈັດໂມງເຊົ້າຜ່ານໄປຕາມອາກາດບໍ່ມີປະກາດ ແລະ ຂ່າວຄາວອັນໃດກ່ຽວກັບຜົນຂອງການເຈລະຈາໃນເທື່ອນີ້, ສ້າງຄວາມຜິດຫວັງຄັ້ງໃຫຍ່ຫລວງໃຫ້ແກ່ພວກເຂົາ, ເທົ່າກັບນັດພວກເຂົາໄວ້ໄປສູ່ຈຸດໂຮມແຫ່ງດຽວກັນ, ລາຍການຂ່າວສິ້ນສຸດລົງບັນດານັກຮຽນ ນັກສຶກສາທົ່ວນະຄອນຫລວງວຽງຈັນ ພາກັນຫລັ່ງໄຫລໄປສູ່ຈຸດແຫ່ງດຽວຄື " ວິທະຍາໄລວຽງຈັນ " ຢ່າງບໍ່ໄດ້ນັດໝາຍ. ຄະນະຕົວແທນທັງ ໕ ຄົນ

ອັນມີບຸນທະວີເປັນຫົວໜ້າ ໄດ້ພາກັນໄປລໍຖ້າຢູ່ແຫ່ງດັ່ງ ກ່າວແຕ່ເຊົ້າ, ກ່ວາພວກນັກຮຽນ ນັກສຶກສາຈະທ້ອນໂຮມ ກັນໄດ້ກໍ່ເຖິງເວລາ ໙ ໂມງ. ທົ່ວເດີ່ນໂຮງຮຽນວິທະຍາໄລ ວຽງຈັນເຕັມໄປດ້ວຍເຄື່ອງນຸ່ງສີຕ່າງໆ, ບາງຈຸພວມຂຽນ ປ້າຍຄຳຂວັນ, ແລະ ປ້າຍປະທ້ວງ, ບາງຈຸພວມແຕ້ມຮູບ ກາຕູນຫລອກລໍ້; ຈົນເຖິງເວລາສົມຄວນບຸນທະວີໄດ້ແຈ້ງ ຜົນການເຈລະຈາເມື່ອວານນີ້ໃຫ້ທຸກໆ ຄົນໄດ້ຊາບໂດຍທົ່ວ ເຖິງກັນ, ພ້ອມນັ້ນເຂົາໄດ້ອ້າງຫລັກຖານຄວາມຈິງຊຶ່ງມີ ການສໍ້ໂກງຄະແນນໄປໃຫ້ລູກຜູ້ຮັ່ງມີເປັນເສດຖີ ແລະ ລູກ ເຈົ້ານາຍຜູ້ມີອຳນາດອິດທິພົນທັງຫລາຍ.

ຂະບວນການຂອງບັນດານັກຮຽນນັກສຶກສາເຄື່ອນອອກ ຈາກເດີ່ນວິທະຍາໄລວຽງຈັນ, ມຸ່ງໜ້າໄປສູ່ກະຊວງສຶກ ສາທິການຕາມທ້ອງຖະໜົນຫລວງລ້ານຊ້າງ, ການຈໍລະ ຈອນຖືກຕັດຂາດລົງ, ປ້າຍປະທ້ວງຂຽນໃສ່ແພຂາວຕົວ ໜັງສືແດງ, ບາງອັນຂຽນໃສ່ເຈ້ຍຂາວ ພ້ອມດ້ວຍຮູບກາ ຕູນຖືກຊູຂຶ້ນກາຍຫົວເບື້ອງໜ້າຂະເຈົ້າເຄື່ອນຂະບວນໄປ ຕາມຖະໜົນຊ້າງໆ, ທັງຮ້ອງໂຮປຸກລະດົມນ້ຳໃຈຟົດສະ ໜັ່ນ, ຂະບວນເຄື່ອນໄປເປັນລະບຽບຮຽບຮ້ອຍທ່າມກາງ ແສງແດດເດືອນ ໖ ແຜດເຜົາຈົນເຫື່ອໄຄໄຫລຍ້ອຍອາບ

ດີວ, ບົນທ້ອງຟ້າເປັນສີຄາມຫາເຝື້ອບັງຕາເວັນບໍ່ມີ ເຖິງຈະເປັນຍາມເຊົ້າກໍຕາມ ຄວາມອົບເອົ້າປົກຄຸມໄປທົ່ວທຸກບ່ອນ. ກຳລັງຂອງນັກຮຽນ ນັກສຶກສາໄກ້ຊີຮອດກະຊວງສຶກສາກໍພາກັນຮ້ອງຂຶ້ນດ້ວຍຄວາມສາມັກຄີ, ໃນປ້າຍຄຳຂວັນພວກຂະເຈົ້າໄດ້ຂຽນວ່າ :

" ມາຂໍຄວາມເປັນທຳຈາກລັດຖະມົນຕີສຶກສາ "

–" ຄູອາຈານບາງຄົນເຫັນແກ່ເງິນແສນໄຖ່ບໍ່ເຫັນແກ່ໄພ່ແສນເມືອງ" ແລະ ອື່ນໆ...

ສຳຫລັບກາຕູນຂະເຈົ້າໄດ້ແຕ້ມຮູບຜູ້ອຳນວຍການ ນັ່ງຢູ່ໂຕະເຮັດວຽກ ແລ້ວມີຄົນເອົາເງິນຍັດໃສ່ປາກຈົນແກ້ມເປົ້າປາກບໍ່ໄດ້, ຮູບຫນຶ່ງອີກແມ່ນຄູອາຈານພວມຮັບສ່ວນແບ່ງເງິນສິນຈ້າງຫົ້ວກະເປົາເງິນເຮັດເຮ່ຍຊະຊາຍ, ຮູບຫນຶ່ງອີກແມ່ນລູກຜູ້ຮັ່ງມີ ແລະ ຜູ້ມີອິດທິດພົນພວມນອນຂາຂຶ້ນຫ້າງຢູ່ເຮືອນຄອຍຜົນການສອບເສັງ ແລະ ອື່ນໆ...

ຂະບວນນັກຮຽນ ນັກສຶກສາ, ເຄື່ອນໄປເຖິງກະຊວງສຶກສາ ແລ້ວພາກັນປຶດເອົາຖະຫນົນລ້ານຊ້າງເປັນປ້ອມຕໍ່ສູ້ຊຶ່ງຢູ່ນອກຂອບເຂດຕຶກກະຊວງສຶກສາທິການ, ບຸນທະວີໄດ້ອອກແຮງປຸກລະດົມເພື່ອນທຸກຄົນ ຢ່າງຫນັກ ແຫນ້ນເປັນເວລາດົນສົມຄວນກໍບໍ່ມີລັດຖະມົນຕີອະທິບໍດີຄົນໃດ ທີ່

ກ່ຽວຂ້ອງປລໍ່ຫົວນາເວົ້າກັບພວກ ຂະເຈົ້າເລີຍ ຕໍ່ມາຂະບວນຕຳຫລວດໄດ້ແຫ່ກັນອອກມາເປັນແພຢືດໆ. ຕາມຖະຫນົນເສດຖາທິລາດ, ລ້ຽວສາມແຍກມາຫາຖະຫນົນລ້ານຊ້າງບ່ອນນັກຮຽນ ນັກສຶກສາພວມຢືນຊຸມນຸມ ຢ່າງ ຫນາແຫນ້ນຢູ່ນັ້ນ, ຕຳຫລວດໄດ້ພາກັນແຫ່ມາປະກົດວ່າຄືຊິລະດົມກັນມາຫມົດທັງ ໔ ຕົວເມືອງກຳແພງວຽງຈັນ ບັນຊາໂດຍຫມໍ່ຕຳຫລວດເຖົ້າຜູ້ເກົ່າ. ບຸນທະວີເພີ້ມການປຸກລະດົມຢ່າງເຄັ່ງຮ້ອນເພື່ອບໍ່ໃຫ້ກຳລັງໃຈຂອງນັກຮຽນ ນັກສຶກສາຖຽງ.

– ເພື່ອນນັກຮຽນ ນັກສຶກສາທັງຫລາຍ, ພວກເຮົາຈົ່ງສາມັກຄີກັນໃຫ້ຫນຽວແຫນ້ນ ຄົງອີກບໍ່ດົນພວກເຮົາ ຊິໄດ້ພົບພໍ້ກັບລັດຖະມົນຕີອັນເປັນທີ່ເພິ່ງຂອງພວກເຮົາ ຈົ່ງສາມັກຄີ !

ຫມໍ່ຕຳຫລວດເຖົ້າຄົນນັ້ນ ສັ່ງລູກນ້ອງຂອງມັນປາຍກຳລັງອ້ອມນັກຮຽນ ນັກສຶກສາແຕ່ ມີ ແຍກພະລາຊວັງເຖິງ ໔ ແຍກຕະຫລາດເຊົ້າ, ຈາກນັ້ນມັນກໍ່ບຸກເຂົ້າມາຜ່າວົງ ນັກ ຮຽນ ນັກສຶກສາ ຫມາຍຈະໄປຫາບຸນທະວີຊຶ່ງພວມຢືນເວົ້າຢູ່ບໍ່ເຊົາ. ແຕ່ກໍ່ຕ້ອງຖືກພວກເຂົາເຈົ້າຕ້ານທານຢ່າງຫນຽວແຫນ້ນ ໃນທີ່ສຸດມັນກໍ່ຕ້ອງຖອຍອອກໄປ

ປີ້ນປູ່ທາງກໍ່ແພງວັດສີສະເກດໃກ້ກັບຫໍໄຕ, ຕໍ່ມານັບບຶກ ໂທລະໂຄ່ງນ້ອຍໃບນີ້ຂອງມັນເວົ້າຂຶ້ນດ້ວຍສຽງແຜງໄປດ້ວຍອຳນາດວ່າ:

– ຂໍເຕືອນພວກລູກຫລານຫມົດທຸກຄົນ, ຂໍໃຫ້ທຸກຄົນກັບຄືນບ້ານດຽວນີ້, ພວກເຈົ້າຊິມາຖ້າລັດຖະມົນຕີຢູ່ຫມົດມື້ຫມົດເວັນບໍ່ມີທາງໄດ້ພົບດອກ ເລື່ອງຕ່າງໆຜູ້ໃຫຍ່ເພິ່ນເວົ້າກັບຫມົດແລ້ວ!

– ຂີ້ຕົວະ!

ສຽງຮ້ອງໂຮດັງອື້ງຂຶ້ນຈາກບັນດານັກຮຽນ ນັກສຶກສາ, ເຮັດໃຫ້ນາຍຕຳຫລວດເຖົ້າຫນໍ່ນັ້ນ ຫນ້າແດງຂຶ້ນກັບບາດ ປູ່ຂ້າງສອງເບື້ອງມີຕຳຫລວດສອງນັກຄຸມຮັກສາ

– ເລື່ອງທັງຫມົດກະຊວງສຶກສາໄດ້ມອບໃຫ້ເຈົ້າຫນ້າທີ່ຕຳຫລວດຈັດການທຸກຢ່າງ, ຫາກພວກເຈົ້າບໍ່ຍອມ ຂ້ອຍຊິໃຊ້ກຳລັງທັງຫມົດຈັບກຸມພວກເຈົ້າ...

ຕຳຫລວດເຖົ້າຫນໍ່ນັ້ນເວົ້າບໍ່ທັນສຸດຄວາມ, ອາບາສິດເຫນືອບ່າກໍ່ຄຳລາມອອກມາຈາກລຳກ້ອງ.

– ປັ້ງ! ປັ້ງ! ປັ້ງ...ໆ

ຄວາມອົນລະວົນ ໂອລາຫົນເກີດຂຶ້ນ, ບັນດານັກຮຽນ ນັກສຶກສາຜູ້ຮັກຕົວ ກົວຕາຍ ກໍ່ແລ່ນຫນີໄປຄົນລະທິດລະ

ທາງ. ພວກທີ່ບໍ່ປ້ານຕໍ່ອຳນາດໃດໆທັງຫມົດນັ້ນ, ເຂົາເຈົ້າໄດ້ພາກັນປັກຫລັກ ສູ້ກັບເຈົ້າຫນ້າທີ່ຕຳຫລວດ ດ້ວຍຝາມືເປົ່າແລະຄວາມເວົ້າຊຶ່ງດັງອອກຈາກໃຫລະໃດ່ງ; ຂະບວນນັກຮຽນນັກສຶກສາພວກບໍ່ປ້ານກໍ່ສູ້ປັນກັບເຫິງເຕີບກຳລັງເຈົ້າຫນ້າທີ່ເພີ່ມເຂົ້າມາອີກຫລາຍ ຄາວນີ້ບໍ່ແມ່ນຕຳຫລວດລ້າໆ ມັນແມ່ນສາລະວັດທະຫານຊຶ່ງເປັນກຳລັງພະເດັດການຂັ້ນສຸດຍອດຂອງພວກມັນ, ໃນທີ່ສຸດບັນດາຕົວແທນນັກຮຽນ ນັກສຶກສາທັງຫມົດ ກໍ່ຖືກຕຳຫລວດ ແລະສາລະວັດທະຫານຈັບໄດ້ພຽງຄົນດຽວຄື "ບຸນທະວີ" ນັກສຶກສາຜູ້ຍາກຈົນ ອາໄສວັດວາສາສະຫນາ ເປັນທີ່ຊຸກຫົວນອນຮ່ຳຮຽນ, ອາໄສເຊົ້າສາມລໍ້ ຖີບຫາກິນຊື້ອຸປະກອນການຮຽນ, ບຸນທະວີ ຖືກຈັບສອງແຂນລ້ຽວຄືນຫລັງ ໃສ່ກັບມືບ່າງໄປນອນຢູ່ຄຸກຕຳຫລວດຊົ່ວຄາວ ກ່ອນ ຊິ ສົ່ງ ໄປຫາຄຸກຊ່ຳເຄ້ ຊີວິດອານາຄົດຂອງເຂົາດັບມອດລົງຢ່າງໄຮ້ມະນຸດສະທຳ; ເຂົາຖືກຈ່ອງຈຳຢູ່ໃນຄຸກດົນແສນດົນເປັນເວລາສີ່ປີ. ພໍ່ແມ່ກໍ່ບໍ່ຮູ້ຊາຕາກຳຫຍັງ ? ພຽງແຕ່ປົງອານິຈາລົງດ້ວຍຄວາມໄວ້ອາໄລ, ເພາະວ່າຄັນເຖິງຂັ້ນຕຳຫລວດ ສາລະວັດທະຫານຈັບໄປແລ້ວມີທາງດຽວຄື "ຕາຍ", ບຸນທະວີຍັງບໍ່ຕາຍຈາກໂລກນີ້ເທື່ອ, ພຽງ

ແຕ່ເຂົາກາຍເປັນຄົນຖືກລືມບັນຊີຄົນໂທດຕົກຫລົ່ນ. ຢ່າງເຂົ້າປີທີ ໕ ເຂົາກ້າວຂາອອກປະຕູຄຸກຊຳເຄ້ຢ່າງຜູ້ມີໄຊ ແລະອົງອາດກ້າຫານຈາກອາຍຸ ໒໐ ປີ ຈົນເຖິງອາຍຸ ໒໔ ປີ ເຂົາຍັງຄິດຮອດໝູ່ພວກທັງໝົດໃນໂຮງຮຽນວິທະຍາໄລວຽງຈັນຄາວນັ້ນດຽວນີ້ໄປຢູ່ໃສ? ເຮັດຫັຍງ?

ດວງຕາເວັນຄ່ອຍແກ່ແສງຂຶ້ນ, ສຽງແປ່ງຕີສັນຍານ ນີ ບາດໝາຍເຖິງວ່າເວລາເຂົ້າຫ້ອງຮຽນມາຮອດແລ້ວ ບຸນທະວີລຸກພວດພາດຂຶ້ນຢ່າງວ່ອງໄວ ຕຽມຈະເຂົ້າຫ້ອງຮຽນ. ເຂົາພາຮ່າງລ້ຳສັນຂ້ອນຂ້າງແກ່ຕົວ, ຍ່າງໄປຕາມເພື່ອນນັກຮຽນ ຊຶ່ງຍັງໜຸ່ມນ້ອຍກວ່າເຂົາຕັ້ງຫລາຍປີ, ໃນການກັບຄືນມາຮຽນໂຮງຮຽນແຫ່ງນີ້ເປັນເທື່ອທີສອງເຮັດໃຫ້ບຸນທະວີມີຄວາມໂລ່ງໃຈ, ເຂົາເຫັນເພື່ອນນັກຮຽນລຸ້ນນ້ອງຊຶ່ງມາຈາກຫລາຍຊົນຊາດຊົນເຜົ່າ, ໄດ້ມີໂອກາດກ້າວຂາເຂົ້າມາຮຽນໃນໂຮງຮຽນແຫ່ງນີ້ ພາງໄດ້ແສງສະຫວ່າງແຫ່ງຄວາມເປັນທຳທຸກປະການ.

" ວິທະຍາໄລວຽງຈັນເອີຍ " ສິ່ງໃສໂຄກຄືດຂະຈັດປັດເປົ່າໄປໝົດກ້ຽງແລ້ວ, ບັດນີ້ເຈົ້າກາຍມາເປັນ ອຸດົມສຶກສາວຽງຈັນ " ປົນສະຫງ່າອົງອາດໂອບອ້ອມເອົາປວງຊົນລາວທຸກຊົນຊາດຊົນເຜົ່າໃຫ້ມີ ຊີວິດ ຊີ ວາ ຫູ ແຈ້ງ ຕາ ໃສ,

ເຈົ້າຄືທວນໄຟດວງໜຶ່ງທີ່ໜຸ່ມນ້ອຍແຂງແຮງສ່ອງ ແສງ
ແຈ້ງສະຫວ່າງບໍ່ຂາດສາຍ. "ລາກ່ອນ ລືເຊວຽງຈັນ".

# ທຸອ້າຍຜູ້ແທນ

* ຍາມພະອາທິດໃກ້ຫັດລະດິງລິງແລງ. ແສງຕາເວັນ ລະດູບານໃຫມ່ສົ່ງສີທອງອາບໄປທົ່ວອ່າງນ້ຳງື່ມ. ປົກຄຸມໄປທົ້ວເກາະດອນຢູ່ກາງນ້ຳ ທີ່ມີຕົ້ນໄມ້ປົ່ງໃບຂຽວດົກງາມຕາ, ສາຍລົມພັດມາແຕ່ທາງກ້ຳພູຜາດ່າງເປັນຮູດໆ, ກະແສນ້ຳເປັນຟອງນ້ອຍກະທົບກັບແສງຕາເວັນ ເຫລື້ອມຍິບຍັບໆ, ກົກໄມ້ແກ່ວງງ່າໄກວໂອນເອນນວຍນາຍຮັບກະແສລົມ ເຫມືອນຫມູ່ທ້າວຫມູ່ນາງທີ່ເດີນທາງມາສະລາງລ້າງສ່ວາຍ, ພວມຟ້ອນມ່ວນຊື່ນ ເມື່ອຄືນລາຕີເດືອນຫງາຍ; ຫມູ່ທ້າວ ແລະ ຫມູ່ນາງພວມອາບນ້ຳຢູ່ທ່າຄົບລະບ່ອນ ປົນໄຕ່ແພໄມ້ເຮັ້ຍອອກໄປສູ່ວັງນ້ຳໃສເປັນ ເພື່ອອາບໃຫ້ຊື່ນບານສຳລານ ຫົວ ໃຈ ພາຍ ຫລັງ ເສັດ ສິ້ນ ວຽກງານປະຈຳວັນ.

ວຽງນະບີ  ນັ່ງຢູ່ກ້ອງຕົ້ນບາກໃຫຍ່ແຄມທ່າ ເຮືອ ໃຊ້ ສາຍຕາຫລຽວຊົມຄວາມງາມຂອງເກາະດອນຍາມອາທິດລົງແລງ,  ລຽບຝັ່ງດອນທາງກ້ຳຕາເວັນຕົກເຕັມໄປດ້ວຍ ເຮືອ ແພນ້ອຍໃຫຍ່ຊຶ່ງສຳນະບາກອນເປັນຜູ້ສ້າງຂຶ້ນ, ຕໍ່ ຈາກດອນທ້າວແມ່ນດອນເສດຖະກິດ ຊຶ່ງບັ້ນດາອ້າຍນ້ອງ ພວມແຂ່ງຂັນກັນສ້າງຜົນງານ  ຢ່າງຂະຫຍັນຫ້າວຫັນ, ຫັດຈາກດອນທ້າວໄປທາງເບື້ອງຕາເວັນອອກ  ແມ່ນດອນ " ສັນຕິພາບ "  ອາຄານໃຫມ່ອ່ຽມຖືກສ້າງຂຶ້ນຢ່າງໄວວາ ຈາກນ້ຳເຫື່ອ ນ້ຳແຮງ ຂອງອ້າຍນ້ອງສຳນະບາກອນຮ່ວມ ດ້ວຍນາຍຊ່າງເຕັກນິກ,  ເຮືອແພນາວາ ພວມລ່ອງລອຍ ເຂົ້າສູ່ຝັ່ງເຫມືອນຝູງນົກກາບິນອ່ວາຍຫນ້າຄືນຮັງ  ໃນເວລາຍາມແລງ,  ວຽງນະບີຈັບເອົາແພເຊັດຫນ້າສີຟ້າພາດຢູ່ບ່າມາຄ້ອງຄໍ, ສາຍຕາຫລຽວແນມໄປທຸກຫົນທຸກແຫ່ງ ຕາມທິວທັດສວຍງາມບາດຕາບາດໃຈ.  ນາງສະມັກໃຈ ສ້າງສາຢູ່ດອນປະກອບວຽກງານເປັນພະນັກງານຂອງລັດຕໍ່ໄປ, ຫມາຍຄວາມວ່ານາງພວມມີຊີວິດໃຫມ່ຂຶ້ນມາຢ່າງ ສົດຊື່ນແຈ່ມໃສ.

ວຽງນະບີເຫັນຄວາມງາມຍາມແລງແບບນີ້  ເຮັດໃຫ້ ຫວນຄິດເຖິງແຄມຂອງຍາມແລງ ໃນມື້ນັ້ນ  ຢູ່ທ່ານ້ຳ ວັດ

ເມືອງວາ, ແລະ ນັ້ນເອງເປັນມື້ນາງຜະຫວາໄດບິນເຂົ້າ
ສູ່ຄວາມສີວິໄລອັນຈອມປອມ, ຫລອກລວງ, ນັ້ນເອງ
ເປັນມື້ທີ່ນາງເລີ່ມຕົ້ນມີຊີວິດທາງຊົ່ວບາບ ແລະ ລະທົມຂົມ
ຂົ້ນທີ່ສຸດໃນຊົ່ວຊີວິດຫນຸ່ມສາວຂອງນາງ, ແລ້ວກໍຈົມຕົວ
ຢູ່ໃນເງົາມືດຊົ່ວຕະຫລອດຄວາມເປັນສາວ.

– ເອື້ອຍວຽງມະນີ.

ສຽງຮ້ອງຢູ່ເບື້ອງຫລັງຂອງນາງ, ຂະນະທີ່ພວມປ່ອຍ ສາຍຕາ ຫລຽວຊົມພາບວິວທິວທັດແຄມຂອງຍາມແລງ ນາງງວາກຫນ້າຄືນຫລັງດ້ວຍເສຍດາຍ. ພາບທີ່ເຫັນຢູ່ ເບື້ອງຫນ້າ, ນ້ອງນ້ອຍຂອງນາງອາຍຸ ໗ ປີຢືນຍິ້ມລະມຸນ ລະໄມນາງນຸ່ງກະໂປງສີຟ້າ ເສື້ອຂາວ ເບິ່ງຊົງຄືຊິມາແຕ່ ໂຮງຮຽນໃຫມ່ຍັງບໍ່ໄດ້ປ່ຽນເຄື່ອງນຸ່ງ.

– ເອີ້ນເອື້ອຍເຮັດຫຍັງ ?.

– ມີຄົນມາຖາມຫາເອື້ອຍ ດຽວນີ້ເພິ່ນຖ້າຢູ່ເຮືອນ.

– ຜູ້ຊາຍ ຫລື ແມ່ຍິງ.

– ແມ່ຍິງ ແຕ່ງໂຕງ້ານງາມໄວແດ່.

ນ້ອງ ນ້ອຍ ຂອງ ນາງ ແລ່ນ ກັບ ຄືນ ເຮືອນ ຢ່າງ ບໍ່ ຖ້າ ເອື້ອຍ, ວຽງມະນີ ຮູ້ສຶກສົງໃສ ຕໍ່ການມາຂອງຍິງ ຄົນນັ້ນ. "ຫລືວ່າ ເພິ່ນມາຖາມເອົາຫນີ້ສິນນໍາພໍ່ ບໍ່ເຫັນພໍ່ຈຶ່ງຖາມ

ຫາບໍ!" ວຽງມະນີທັງຍ່າງທັງຄິດໄປນຳທາງບໍ່ເລີກບໍ່ແລ້ວ ຈົນເຖິງເຮືອນ, ພໍນາງຍ່າງເຂົ້າປະຕູບ້ານ ກໍຫລຽວເຫັນ ຍິງຄົນນັ້ນຢືນຢູ່ແປະຂັ້ນໄດ ຊຶ່ງພວມຫລຽວແນມເບິ່ງນາງ ແຕ່ຫົວເຖິງຕີນແລ້ວກໍມາຈັບທີ່ໃບຫນ້າ, ຈາກນັ້ນກໍປ່ອຍ ຮອຍຍິ້ມອັນມີສະເຫນ່ນິ້ມນວນໃສ່ນາງທັ້ງທີ່ນາງເອງບໍ່ເຄີຍ ລື້ງຫນ້າເຄີຍຕາມາກ່ອນ, ຍິງຄົນນັ້ນ ໃສ່ສາຍຄໍຄຳທໍ່ໂປ້ ມື, ປະລັກແຂນ, ແຫວນເພັດ, ນຸ່ງເສື້ອມິງ ຕະກູ ສີກຸ ຫລາຍ ສົ້ນໄຫມສີຂຽວ ເກີບຕີນປ່ອງ ດັດຜົມຊົງຊໍ່ວອນ ຕັ້ງບ່າ, ຫນ້າທາເຂົ້າແປ້ງນ້ຳແດງ ກິນຫອມອົບເອົ້າໄປ ທົ່ວບໍລິເວນບ້ານ.

- ສະບາຍດີເອື້ອຍ?.

- ສະບາຍດີ.

ວຽງມະນີ ທັງບໍ່ມີໄຫວ້ຖາມສະບາຍດີ, ຍິງອາຍຸປະມານ ໓໐ ປີຄົນນັ້ນ ຍ່າງເຂົ້າມາຫານາງແລ້ວເອົາມືລູບຫລັງທັງຍິ້ມອອກມາດ້ວຍຄວາມດີໃຈ.

- ນ້ອງບໍ່ຊື່ວຽງມະນີ?.

- ແມ່ນແລ້ວ ຍາເອື້ອຍມີວຽກຫຍັງບໍ?

- ອື... ອ່າ..

- ເຊີນຍາເອື້ອຍຂຶ້ນໄປເຮືອນກ່ອນດີ.

ບຶງຄຶນນັ້ນ  ພວມຈະເວົ້າຈຸດປະສົງ ຂອງຕົນອອກມາ, ແບບປາກຕັດສິນໃຈແດ່ບໍ່ປາກຕັດສິນໃຈແດ່ ພໍດີນາງວຽງມະນີຊັກຊວນຂຶ້ນເມືອເຮືອນກ່ອນ. ບຶງຄຶນນັ້ນຟ້າວເປີຍຂຶ້ນຂັ້ນໄດເພື່ອບໍ່ປ່ອຍໂອກາດໃຫ້ຊັກຊ້າ.

ບັນຍາກາດພາຍໃນຫ້ອງຮັບແຂກ ອັນຄັບແຄບອຶດອັດເກົ້າຫມອງນິດງຽບໄປ ຍ້ອນບຶງຄຶນທີ່ມາຫາພວມໃຊ້ສາຍຕາສຳຫລວດເບິ່ງຮອບບໍລິເວນຫ້ອງ, ທັງຢູ່ໃນລະຫວ່າງນາງພວມເທງນ້ຳໃສ່ຈອກຮັບຕ້ອນ.

– ຍາເອື້ອຍມານີ້ວຽກຫຍັງບໍ?.

– ຄືວ່າ... ນາງວິໄລວັນ ເຣັດວຽກຢູ່ຮ້ານເສີມສວຍບ້າແນະນຳໃຫ້ຮູ້ນ້ອງ. ນ້ອງຄືຊິຮູ້ດີນາງວິໄລວັນ?.

– ເປັນຫມູ່ເຂົ້າໂຮງຮຽນນຳກັນແຕ່ກີ້ ຮູ້ລາວລະບໍ.

– ຈັ້ງຊັ້ນກະດີຄືກັນ ຄືວ່າ...ໃນລະດູຫນາວປີນີ້, ທາງສະໂມສອນນິດຕຳຫລວດ ຮ່ວມກັບສະໂມສອນໄລອ້ອນວຽງຈັນຈະຈັດງານ ປະກວດນາງສາວງາມປະຈຳປີ ໑໙໗໖ ເພື່ອຮັບຕ້ອນເຫນັນສະຫວາດອັນໃດນີ້ແຫລະ ເອື້ອຍບໍ່ເຂົ້າໃຈຄວາມເວົ້າຂອງເພິ່ນ.

– ເປັນຫຍັງຊິມາກ່ຽວຂ້ອງກັບນ້ອງຍາເອື້ອຍ?.

– ເອື້ອຍວ່າມັນກ່ຽວຫັ້ນແລ້ວຈຶ່ງໄດ້ມາ ຄືວ່າປາກມາ

ເອົານ້ອງນີ້ໄປເປັນຕົວແທນຮ້ານເສີມສວຍເອື້ອຍ, ສິ່ງເຂົ້າປະກວດແຂ່ງຂັນກັບເຂົາ. ເອື້ອຍເຫັນນ້ອງທຳອິດກໍ່ກຸກຕາກັບບາດ ບໍ່ຜິດກັບຄວາມເວົ້າຂອງວິໄລວັນເລີຍ.

ວຽງມະນີ ເຮັດທ່າທາງອິ່ມອື່ມອິດ ໜ້າແດງປານໜາກເດັ່ນສຸກ ບໍ່ຮູ້ຈັກຊິຕອບຫຍັງ? ໄດ້ແຕ່ເຮັດສາຍຕາລອຍຫລຽວອອກໄປປ່ອງຢ້ຽມ.

– ວ່າແນວໃດນ້ອງຕົກລົງບໍ?

– ເລື່ອງນີ້ນ້ອງຂໍຕອບມື້ອື່ນເຊົ້າ ຊິໄປຫາເອື້ອຍເອງຢູ່ຮ້ານເສີມສວຍ.

– ກະດີແລ້ວເດ, ແຕ່ວ່າຈັ່ງໃດກໍຕ້ອງຕັດສິນໃຈ ເອື້ອຍຝາກຄວາມຫວັງທັງໝົດໄວ້ກັບນ້ອງ

ບົງຄົມນັ້ນໜ້າບານເມື່ອຮູ້ວ່ານາງວຽງມະນີມີທ່າທີຈະສົມຍອມໄປຕາມທາງທີ່ຕ້ອງການຂອງຕົນ. ນາງຈັບເອົາກະເປົາທີ່ຕັ້ງຢູ່ຂ້າງຂຶ້ນມາປົ່ງໄວ້ຕັກ ແລ້ວໄຂກະເປົາອອກຈົກເອົາເງິນຢູ່ໃນກະເປົາມີແຕ່ໃບຫ້າພັນກີບອອກມາບັບ.

– ເງິນຄ່າລົດ ເອື້ອຍມອບໃຫ້ສິບພັນກີບ.

– ໄດ້ແລ້ວບາເອື້ອຍຂອບໃຈ.

– ບໍ່ຂອບໃຈ ຂອບເຈີຫຍັງແຫລະ ເອົາເງິນນີ້ໄວ້ໃຊ້.

ບົງຄົມນັ້ນໂຢ້ຕົວລຸກຂຶ້ນ ກຸມເອົາເງິນຍັດໃສ່ມືວຽງມະນີ

ດ້ວຍຄວາມເອົາອົກເອົາໃຈ, ດ້ວຍຄວາມຊູຊີຂອງບີງຄົນນັ້ນ ວຽງມະນີຮັບເອົາເງິນສິບພັນກີບດ້ວຍຄວາມຈຳໃຈ.

– ເອີ... ນີນະນ້ອງ, ຄັນຊັ້ນພໍ່ແມ່ໄປໃສຫມົດ?.

ສາຍຕາຂອງນາງດົກວັບທັນທີ ເມື່ອຖືກບີງຄົນ ນັ້ນຖາມຫາພໍ່ແມ່, ນາງຮູ້ສຶກອຶດອັ້ນຕັນໃຈທີ່ສຸດ ບໍ່ຮູ້ວ່າຈະບອກແນວໃດ? ເວລານີ້ພໍ່ຂອງນາງພວມນອນຮັກສາຕົວ ຢູ່ໂຮງຫມໍ ດ້ວຍໂລກຂີ້ກະນີທັງເປັນໂລກກະເພາະອາຫານ, ສ່ວນແມ່ຕາຍຈາກໂລກນີ້ໄປສາມປີແລ້ວ, ແມ່ຕາຍຈຶ່ງເຮັດໃຫ້ສະພາບຂອງພໍ່ຊຸດໂຊມລົງເລື້ອຍໆ. ວຽກງານທຸກຢ່າງໃນເຮືອນນາງເປັນຜູ້ແບກຫາບລ້ຽງນ້ອງອີກຫນຶ່ງຄົນ ດ້ວຍການຂາຍເຄື່ອງເລັ້ກຂອງນ້ອຍຢູ່ຕະຫລາດ ພໍໄດ້ເງິນຊື້ກິນແຕ່ລະມື້, ເມື່ອສອງມື້ກ່ອນກໍໄດ້ຂາຍສວນຕອນຫນຶ່ງ ຢູ່ຫາດດອນເຊື່ອງຊູ້ເພື່ອໃຊ້ຈ່າຍໃນການ ປິ່ນ ປົວ ພໍ່. ຂະນະນີ້ທຸກສິ່ງທຸກຢ່າງກໍຂາຍອອກເລື້ອຍໆ ຍັງເຫລືອແຕ່ເຮືອນໄມ້ຫລັງດຽວແລະດິນບ້ານບໍ່ເຖິງຫ້າສິບແມັດມົນທົນ ອັນເປັນມໍລະດົກຊິ້ນສຸດທ້າຍທີ່ມີຢູ່.

– ເພິ່ນໄປໃສນ້ອງ?

– ແມ່ຂອງນ້ອງຕາຍໄດ້ສາມປີແລ້ວ, ສ່ວນພໍ່ນອນປິ່ນປົວຢູ່ໂຮງຫມໍ ຢູ່ເຮືອນດຽວນີ້ມີແຕ່ນ້ອງແລະນ້ອງນ້ອຍ

ອາຍຸ ໗ ປີຜູ້ເອື້ອຍໃຊ້ໄປເອີ້ນນ້ອງຫວ່າງຫນຶ່ງນັ້ນແຫລ້ວ.

ບິງຄົນນັ້ນງຶກຫົວສອງສາມບາດ ແລ້ວເຮັດຊຶງລຶງ ຕິເຮັດສີຫນ້າຄວາມເປັນຫ່ວງດ້ວຍເລ່ຫລ່ຽມນານຍາທີ່ຊຳນິຊຳນານ, ຄວາມມືດຄືບຄານເຂົ້າມາເລື້ອຍໆ ແສງຕາເວັນທີ່ສາດສ່ອງທົ່ວເດີ່ນບ້ານໄດ້ຈາງຫາຍອອກໄປຈົນບໍ່ມີ, ຂະນະນັ້ນລົດເບັ້ນສີຂາວງາຊ້າງແລ່ນມາຈອດກຶກຢູ່ປະຕູບ້ານແລ້ວບີບແກສອງສາມບາດ ບິງຄົນນັ້ນງວາກຫນ້າໄປເບິ່ງລົດຄັນນັ້ນ.

– ໂຊເຟີເອົາລົດມາຕ້ອນແລ້ວ ເອື້ອຍຊິໄດ້ລາໄດນ້ອງ, ມື້ອື່ນເຊົ້າໄປແຫ້ງໃດເອື້ອຍຊິບໍ່ໄປໃສ?.

– ໂດຍ.

ຕອນເຊົ້າມື້ໃຫມ່ ວຽງນະບີລຸກແຕ່ບໍ່ທັນມີແສງຕາເວັນສ່ອງໂລກ ນາງຈັດແຈງມ້ຽນເຮືອນຊານ   ຫນຶ້ງເຂົ້າ ເຮັດກິນໄວ້ໃຫ້ນ້ອງ ແລະ ເອົາໄປສົ່ງພໍ່ທີ່ໂຮງຫມໍ,   ຄືນນີ້ທັງຄືນ ນາງຄຶດທຸກສິ່ງທຸກຢ່າງເພື່ອຕັດສິນບັນຫາໃຫ້ມັນລຸລ່ວງ  ໃນທີ່ສຸດນາງຕ້ອງຈຳໃຈຕັດສິນໃຈ ໄປທີ່ຮ້ານເສີມສວຍຂອງຍາເອື້ອຍຜູ້ມາຫາ   ແຕ່ບໍ່ ທັນ ຮູ້ຊື່ ເພິ່ນ ເທື່ອ, ຫມາຍຄວາມວ່າ ນາງພວມຈະພືປີກອ່ອນບິນໄປສູ່ສັງຄົມທີ່ຊາວຕາເວັນຕົກຫລີ້  ພວກນາຍທຶນທັງຫລາຍພາກັນ

ສັນລະເສີນວ່າເປັນສັງຄົມສີວິໄລກ້າວໜ້າໃນຍຸກປັດຈຸບັນ. ຄວາມຫວັງຂອງນາງຊຶ່ງເປັນຄວາມຫວັງແບບບໍ່ຮູ້ຖຽງສາ ຕໍ່ຜູ້ມີກະເທ່ເລ່ຫລ່ຽມແຫລມຄົມ. ການບິນເຂົ້າສູ່ວົງສັງ ຄົມຊັ້ນສູງກໍເພື່ອຢາກໄດ້ເງິນກ້ອນໜຶ່ງ ມາປິ່ນປົວພໍ່ທີ່ ພວມນອນເຈັບຢູ່ໃນໂຮງໝໍ. ການໄປຂອງນາງເທື່ອນີ້ບໍ່ ໄດ້ຂໍຄວາມເຫັນຈາກພໍ່ແມ່ນແຕ່ຄຳດຽວ ເພາະຢ້ານກະ ທົບກະເທືອນຈິດໃຈອາດຈະພາໃຫ້ພໍ່ຕ້ອງເຈັບເປັນໜັກ ໜ້າລົງເລື້ອຍໆ.

ວຽງມະນີ ປ່ອນ ຂາ ຢຽບ ຢ່ອງ ເຂົ້າ ຮ້ານ ເສີມ ສວຍ ຊື່ "ດວງໃຈ" ນັບວ່າເປັນຄັ້ງໜຶ່ງໃນຊີວິດພັດແຕ່ນາງແຕກ ເນື້ອຈໍ່ສາວຂຶ້ນມາອາຍຸ ໑໗ ປີ, ນາງໄດ້ຮັບຄວາມອົບອຸ່ນ ຕ້ອນຮັບຈາກຍາເອື້ອຍຄົນນັ້ນຢ່າງເປັນກັນເອງ ແຕ່ນີ້ນັ້ນ ເປັນຕົ້ນມາ ວຽງມະນີ ຍິງສາວຜູ້ດີກລະກຳລຳບາກຫາກິນ ນຳຕະຫລາດໄປແຕ່ລະມື້, ໄດ້ນຳເອົາຮູບຊົງຮ່າງກາຍອັນມີ ສະເໜ່ພະຫວາບິນເຂົ້າສູ່ສັງຄົມ ທີ່ເຂົານິຍົມກັນວ່າສີວິໄລ, ຈາກການຂັດແປ້ງແຕ່ງຕົວອາບອົບດ້ວຍນ້ຳມົນສົດ.ຖະໜອມ ຜີວພັນ ໃຫ້ ຂາ ວນວນອວນອົບເປັ່ງປັ່ງດ້ວຍເຄື່ອງແຕ່ງ ຕົວວິທະຍາສາດທັນສະໄໝ ຄວາມງາມທຳມະຊາດທີ່ມີ ຕິດຕົວນາງຢູ່ແລ້ວ, ຊ້ຳພັດມາດັດແປງແຕ່ງຕົວໃນຮ້ານ

ເສີນສວຍເຮັດໃຫ້ນາງບົງງາມມີສະເໜ່ຂຶ້ນ ເປັນທີ່ຈັບເນື້ອຕ້ອງໃຈຂອງບັນດາເພດກົງກັນຂ້າມບໍ່ວ່າໜຸ່ມ. ແກ່ ແລະ ເຖົ້າ.

ທາງດ້ານຄອບຄົວຍາເອື້ອຍ.ດວງໃຈເຈົ້າຂອງຮ້ານເສີມສວຍ "ດວງໃຈ" ເປັນຜູ້ຮັບພາລະ, ນັບແຕ່ເອົາເຂົ້າໄປສົ່ງພໍ່ຂອງນາງ, ຊື້ປາປົວພະຍາດ ແລະ ອື່ນໆ ການປະຊັນໂສມຄວາມງາມເທິງເວທີ ໄດ້ເປີດຂຶ້ນທີ່ເດີ່ນຫຍ້າອັນລະອຽດຂຽວງາມຂອງບໍລິສັດ ៥៥៥ ຫລັກ ໆ, ເປັນເວລາສາມຄືນລຽບຕິດກັນ, ແຕ່ລະຄືນ ໄດ້ຮັບຄວາມນິຍົມຈາກຄະນະກຳມະການຜູ້ໃຫ້ຄະແນນ ແລະ ຄົນທີ່ອັ່ງອໍກັນເບິ່ງການປະກວດ ສຸດທ້າຍ ວຽງມະນີສາມາດຄວ້າເອົາລາງວັນທີ ໑ ໝາຍຄວາມວ່າ ເປັນໜຶ່ງໃນບັນດານາງສາວທີ່ເຂົ້າປະກວດຮ່ວມກັນເທື່ອນີ້ ຊຶ່ງມີທັງໝົດ ໒໐ ຄົນ, ລາງວັນທີ່ມອບໃຫ້ສະໂມສອນໄລອ້ອນ, ແລະ ສະໂມສອນມົດດຳຫລວດເປັນມຸງກຸດເພັດໜຶ່ງອັນ, ເງິນສົດໜຶ່ງລ້ານກີບ. ຈາກລາງວັນທີ່ໄດ້ຈາກຄວາມງາມຂອງນາງນີ້ເຮັດໃຫ້ວຽງມະນີລືມທຸກສິ່ງທຸກຢ່າງ

ແຕ່ນັ້ນມາ ນາງຮູ້ຈັກເຈົ້ານາຍ ນາຍພົນ, ນາຍພັນ. ລັດຖະມົນຕີ, ເສດຖີ ມີເງິນລ້ານ ແລະ ແສງສີຫລາຍ

ຫລາກຊຶ່ງປະດັບສັງຄົມພໍ ເປັນ ແສງ ຣົບ ຣີໃບ ເວ ລາບັ້ນ, ຖາບະຊີວິດການເປັນຢູ່ ກະ ເຕື້ອງ ຂຶ້ນ ປານ ບ້າ ເດືອນ ເກົ້າ ສະພາບບ້ານເຮືອນຈັບງາມຂຶ້ນ ເຄື່ອງເຮືອນຊານທຸກຢ່າງ ຖືກຊື້ມາເອ້ຍ້ອງປະດັບປະດາຢ່າງຈັບງາມດ້ວຍການແນະ ນຳຂອງນາເອື້ອຍດວງໃຈ ຜູ້ທີ່ດຶງນາງໄປສູ່ນະຣົກທັງເປັນ ຊຶ່ງຄົນສະໄຫມນັ້ນເຫັນເປັນຄວາມສີວິໄລ, ພໍ່ຂອງນາງໄດ້ ຮັບການເອົາໃຈໃສ່ປິ່ນປົວ ຈາກທ່ານຫມໍມີດີຈົນເຊົາເປັນ ປົກກະຕິ.

ຖະ ຫນົນ ຊີ ວິດ ຂອງ ວຽງນະບີໄດ້ຮຸ່ງເຮືອງຂຶ້ນມາບໍ່ໄດ້ ພໍ ປີ ເດືອນນາງກໍພົບກັບຊະຕາກຳຊີວິດ ທີ່ແສນລະທົມ ນົດມົນ ດ້ວຍການຊັກນ້າວດຶງຈ່ອງຂອງນາງກາລີໄພສັງ ຄົມ, ດ້ວຍຄວາມຫລົງລືມຄວາມຫລັງ ບໍ່ງົ້ງງ ບໍ່ຟັງ ຄຳເຕືອນຂອງພໍ່ຈຶ່ງເຮັດໃຫ້ສະພາບຊີວິດກົບບໍ່ເຂົ້າຄາຍບໍ່ ອອກ. ຜ່ານມາ ພາຍຫລັງການປະກວດສົ້ນສຸດລົງ ໄດ້ ມີຊາຍຄົນຫນຶ່ງມາສະຫນິດສະຫນົມ ເອົາອົກເອົາໃຈທຸກ ສິ່ງທຸກຢ່າງ ຊາຍຄົນນັ້ນອາຍຸທ່ພໍ່ເຂົາ ເປັນເຊື້ອເຈົ້າທັງ ເປັນຜູ້ແທນລາດສະດອນມີອິດທິພົນທາງການເມືອງແລະ ການຄ້າ ຊາຍທີ່ມາຕິດພັນກັບນາງນີ້, ເອື້ອຍດວງໃຈກໍ ເຫັນດີເຫັນພ້ອມບໍ່ຂັດຂືນ ທັງສະຫນັບສະຫນູນຢ່າງອອກ

ຫນ້າອອກຕາ, ວຽງນະບີມັກຮ້ອງຊື່ອ້າຍຜູ້ນັ້ນວ່າ "ທຸອ້າຍຜູ້ແທນ" ຫລື "ທຸອ້າຍ". ທຸອ້າຍຜູ້ນີ້ເນຍເປັນຄົນຊາດຝະລັ່ງ. ມື້ຫນຶ່ງ, ນາງຖືກເຊີນໄປກິນລ້ຽງເປັນກຽດໃນງານສະຫລອງອັນໃດອັນຫນຶ່ງທີ່ຮ້ານອາຫານຕົນດາວວຽນ, ວຽງນະບີ ແລະ ທຸອ້າຍຜູ້ແທນຂຶ້ນລົດຄັນດຽວກັນ ສ່ວນຍາເອື້ອຍດວງໃຈເອົາລົດຂອງເພິ່ນໄປຕ່າງຫາກ, ທຸອ້າຍຜູ້ແທນ ຂັບລົດອອກຈາກຮ້ານເສີນສວຍຄຸ້ມຕະຫລາດແລງອອກໄປຖະຫນົນແຄມຂອງ ທາງໂຮງຮຽນການຊ່າງປາກປາສັກ, ເລາະໄປຕາມຖະຫນົນຟ້າງຸ່ມທາງເບື້ອງໃຕ້ ອ້ຽວລົດເຂົ້າໂຮງແຮມລ້ານຊ້າງທັນທີ ເຮັດໃຫ້ວຽງນະບີຮູ້ສຶກແປກໃຈໃນການມາໃນເທື່ອນີ້.

– ທຸອ້າຍຊິພາຂະນ້ອຍມາຫຍັງພີ້ ດຽວວ່າໄປຕົນດາວວຽນ.

– ປູ່ພີ້ສະບາຍກ່ວາ.

ທຸອ້າຍຍິ້ມຈົນແກ້ມໃຄ່ ແລ້ວເຮັດຕາໄກ່ປ່າໄປໃສ່ນາງແບບມີຄວາມຫມາຍເລິກ.

– ມານຳອ້າຍບໍ່ພໍໃຈບໍ?

ທຸອ້າຍທັງເວົ້າທັງຄວາມືຈັບແຂນວຽງນະບີ, ນາງຮູ້ຕົວທັນ ໄຂປະຕູລົດອອກຍ່າງໄວວາມາຢືນປູ່ທາງນອກ,

ຈາກນັ້ນກໍກ້າວຕົວໄປປະຕູລົດທາງຫລັງ.

– ລົດຂອງອ້າຍໃສ່ອັນບັງແດດບໍ່ມີໃຜເຫັນດອກນ້ອງ. ຍາມນີ້ກໍເປັນຍາມຄ່ຳຄືນອີກຊ້ຳ.

– ກະດຽວຊິໄປກິນລ້ຽງ.

– ຣຶ... ໆ ຣະ... ໆ ວຽງນະນີ!

ສຽງຫົວຂອງທຸອ້າຍຜູ້ແທນດັງຢູ່ໃນລຳຄໍ ແຕ່ເຈືອປົນໄປດ້ວຍນ້ຳສຽງທີ່ມີຄວາມໝາຍສຳຫລັບເຂົາ ຢ່າງເລິກແລບ. ແສງໄຟດອກແລະນີອອນຫລາຍສີໄຕ້ປະດັບປະດາໜ້າໂຮງແຮມລ້ານຊ້າງຮຸ່ງພໍເປັນຮິບຮີທົ່ວເດີ່ນລົດຫລາຍຫລາກສີຈອດຮຽງກັນເປັນແຖວ ມີກວງນເຫລັ້ມໜຶ່ງຕັ້ງສະແດງຢູ່ກາງເດີ່ນຫຍ້າ ໃນບໍລິເວນຕຶກໂຮງແຮມບໍ່ມີສຽງດົນຕີ ແລະ ສຽງຄົນດັງລອດອອກມາໄດ້ເພາະປະຕູໜ້າອາຄານອັດດ້ວຍແກ້ວ ແນມເຫັນຄົນຍ່າງຢູ່ທາງໃນພໍເປັນເງົາ. ສາຍລົມລະດູໜາວພັດວູ່ໆ ຕົ້ນໄພຕໍ່ໜ້າໂຮງແຮມບົ່ງໃບດີກໜາປົ້ນຢູ່ກັບຄວາມມືດຂອງລາຕີ, ລົມຕ້ອງໃບໄກວແກ່ວງດັງອ່າ! ອ່າ! ອ່າເປັນບາດ ໃບພ້າວແຄມຂອງພວນຖອດຍອດງາມໄກວໂອນເອນບໍ່ຂາດສາຍ; ວຽງນະນີປົ້ນຊຶ່ງຢູ່ກັບເງົາມືດ ປ່ອຍສາຍຕາອອກໄປທາງເບື້ອງນ້ຳຂອງຢ່າງບໍ່ມີຈຸດໝາຍ, ທຸອ້າຍຜູ້ແທນຍັງນັ່ງຢູ່ໃນລົດບໍ່

ຍອມຂອກ.

– ໄປຫຸອ້າຍ ຈັກໜ້ອຍບໍ່ທັນເພິ່ນ.

– ຊິໄປແນວໃດ ນ້ອງອ່ານບັດເຊີນບໍ່ຫມົດດີ ມື້ອື່ນພຸ້ນ ນ່າກິນລ້ຽງ.

– ອຸ້ຍ ! ຕາຍຫ່າ.

ນາງອຸທານຢູ່ໃນໃຈ ແລ້ວປ່ອນຄຳຕາມແວ່ນແກ້ວປະຕູລົດສ່ອງເບິ່ງຫຸອ້າຍແລ້ວເວົ້າວ່າ:

– ຄັນຊັ້ນພາຂະນ້ອຍເມືອ.

– ເມືອເຮັດຫຍັງ ໄປກິນເຂົ້າກ່ອນຈິ່ງເມືອ.

– ໄປກິນຢູ່ເຮືອນກໍໄດ້ຕ່ວາ.

– ມັນບໍ່ແຊບ.

ຫຸອ້າຍຜູ້ແຫນບຫັນແກ້ວລົດອັດແຈບ ລັອກປະຕູ ຈາກນັ້ນກໍອອກມາຈາກລົດຈັບແຂນນາງໄວ້ແຫນ້ນໃຫ້ຍ່າງຄຽງຂ້າງໄປໃນອາຄານໂຮງແຮມ ວຽງມະນີພະ ຍາ ຍາມ ຝົດຫລາຍຄັ້ງຫລາຍຄາວຈົນເຖິງປະຕູແກ້ວຫຸ ອ້າຍ ຈິ່ງປ່ອຍມືນາງອອກ. ອາຍອຸ່ນພາຍໃນຕົວຕຶກທັງກິ່ນອາຍນ້ຳຫອມສົ່ງກົ້ວໄປທົ່ວບໍລິເວນໂຮງແຮມລ້ານຊ້າງ ຊຶ່ງເປັນໂຮງແຮມຊັ້ນຫນຶ່ງໃນເມືອງລາວ ຄົນຊັ້ນຜູ້ດີຮັ່ງມີເປັນເສດຖີຂັ້ນລັດຖະມົນຕີນາຍພົນ ອະທິບໍດີຈິ່ງມີໂອກາດເຂົ້າໄປໄດ້, ເປັນ

ຄັ້ງທຳອິດໃນຊີວິດຂອງນາງ ທີ່ມີໂອກາດໄດ້ເຂົ້າມາໂຮງແຮມແຫ່ງນີ້, ຈິດໃຈຮູ້ສຶກຕື່ນເຕັ້ນເປັນວາດໃດວາດຫນຶ່ງ. ສາຍຕາຫລາຍຄົນບໍ່ວ່າຄົນລາວ ແລະ ແຂກຕ່າງປະເທດຫລຽວສຸມມາໃສ່ຕົວນາງເປັນອັນດຽວກັນ, ທຸອ້າຍຜູ້ແທນພານາງຍ່າງຂຶ້ນຊັ້ນສອງຂອງໂຮງແຮມ ແລະ ຕໍ່ຂຶ້ນເມືອຊັ້ນສາມ ລ້ຽວໄປທີ່ຫ້ອງຫນຶ່ງຝາະຣັດດ້ວຍແກ້ວ, ມ່ານກັ້ງສີລວດລາຍຫ້ອຍອັດ ແສງໄຟພໍເປັນຣິບຣີ່ລອດອອກມາແຕ່ໃນພໍເຫັນເປັນມົວໆ ໄຟປະຕູຮຸ່ງພໍຄຸມມຸມມີປ້າຍຂຽນບອກຊື່ຮ້ານ ຫລຽວແຕ່ໄກອ່ານບໍ່ໄດ້, ເຂົ້າໄປໃກ້ປະຕູຈຶ່ງອ່ານອອກໂດຍຂຽນເປັນພາສາອັງກິດອ່ານວ່າ "ໂອລິມເປຍໄນຄລັບ". ວຽງມະນີຮູ້ສຶກຫວາບຫວາມຫົວໃຈຈົນບອກບໍ່ຖືກ, ນາງເຫມືອນລູກງົວນ້ອຍພວມຢູ່ໃນກົງເລັບເສືອ. ທຸອ້າຍຜູ້ແທນເອົາແຂນໂອບກອດນາງເປັນຄັ້ງທຳອິດກ່ອນຊີເຖິງປະຕູ. ແລ້ວຫອມແກ້ມບາດຫນຶ່ງ. ຝາມືອັນບອບບາງຂອງນາງຟາດເປັ້ງໃສ່ຫນ້າທອ້າຍທັນທີ.

– ເປັ້ງ...

– ອິຣິ... ນຶ້ນນວນ.

– ຮື! ຫລອກຫລວງ.

– ປ່າວຽງມະນີ ເຖິງປານນີ້ນ້ອງຍັງຫາກໍຮູ້ນີ້ຫວະ ..

ເຮັດກິລິຍາໃຫ້ດີ ອາຍແຂກແລະ ຊາວຕ່າງປະເທດເຂົາ.

– ພານ້ອງລົງໄປຈາກນີ້.

– ຢ່າໃຊ້ສຽງດັງດີ ເຊື່ອອ້າຍເທາະນ່າ...

ທອ້າຍຜູ້ແທນເວົ້າສ ງລາກໆ ແລ້ວໃຊ້ມືແງ້ມໄຂປະຕູອອກອີກມືຫນຶ່ງຊູກຕົວນາງໃຫ້ເຂົ້າໄປກ່ອນ, ແສງໄຟບໍ່ພໍມີ ດອກສ່ອງແສງມົວພໍເປັນຣິບຣີ ຈົນຊິບໍ່ເຫັນໂຕະຕັ່ງນັ່ງ, ນາງກ້າວບາດຂາໄປສອງບາດ ກໍຕ້ອງຢືນສະງັກຢູ່ໃນເງົາມືດແຫ່ງນັ້ນທັນທີ ສິ່ງທີ່ນາງບໍ່ນຶກບໍ່ຝັນກໍເຫັນກັບຕາ, ນາງກົ້ງຕາເບິ່ງຍິງຄົນນັ້ນນັ່ງຢູ່ໃນທ່າມກາງແສງໄຟພໍມົວງຍິ້ມໃສ່ນາງ ດ້ວຍຮອຍຍິ້ມອີ່ມເອີບພໍຫນັກພໍໃຈ "ບາເອື້ອຍດວງໃຈ" ນາງຄຶດພຶມພໍາຢູ່ໃນຮູຄໍ.

– ນາງນັ່ງໄວຕີນ້ອງວຽງນະບໍ.

– ເອື້ອຍດວງໃຈ.

– ແມ່ນແລ້ວ.

ບາເອື້ອຍດວງໃຈ ລຸກອອກຈາກຊາລົງ ບ່າງມາຫານາງ ແລະ ຄ່ອຍປະຄອງນາງໄປນັ່ງຢູ່ຄຽງຂ້າງ, ສຽງດົນຕີອັນແຜ່ວເບົາດັງບໍ່ຂາດໄລຍະ, ສ່ວນທອ້າຍຜູ້ແທນໄປນັ່ງເວົ້າກັບເຈົ້າຂອງຮ້ານ ຊຶ່ງເປັນຄົນຝະລັ່ງ ກັງສອງທັງເວົ້າທັງຫົວດ້ວຍຄວາມຊື່ນຊົມ ເຫມືອນກັບພວກເຂົາທັງສອງ

ມີຫມາກຜົນທາງດ້ານການຄ້າໄດ້ກຳໄລຫລາຍ  ຈາກນັ້ນ ທັງສອງກໍເວົ້າຕົກລົງກັນເປັນພາສາອັງກິດ

- ໂອເຄ.

ທຸອ້າຍຜູ້ແທນເຂົ້າມານັ່ງຊາລົງ ເອົາຂາໄຂ່ວແຫນງຢູ່ໃກ້ໆວຽງມະນີ.  ເຂົາບໍ່ປາກບໍ່ເວົ້າຫຍັງ ໄດ້ແຕ່ນັ່ງອີງຜົວປາກດັງຄ່ອຍໆອອກມາ  ເຫມືອນ ວ່າ ຈະ ເປັ້ຍ ຫົວ ໃຈໃກ້ນາງ.

- ວຽງມະນີຕົກໃຈບໍ່?.

- ແມ່ນແລ້ວຢາເອື້ອຍ

- ບໍ່ຕ້ອງຢ້ານມີເອື້ອຍທັງຄົນ  ເປັນຫຍັງເອື້ອຍຊິຄຸ້ມຄອງດອກ.

ຫົວໃຈຂອງນາງຄ່ອຍຫວາງລົງແດ່ເລັກນ້ອຍ  ແຕ່ວ່າສະພາບແບບນີ້ບໍ່ຫນ້າໄວ້ໃຈເລີຍ  ນາງນັ່ງຊຶງທວນຄຶດໄປຄຶດມາຫລາຍອັນ ຫລາຍແບວ ທັງຄຶດເຖິງເຫດການເບື້ອງຫນ້າຢ້ານມັນຊິເປັນໄປໃນທຳນອງບໍ່ດີ.  ວຽງມະນີຫາຍໃຈໃຫຍ່ອຶດໃຈຫນຶ່ງ  ອັນສະແດງເຖິງຄວາມອຸກຫນັກອຸກໃຈຫາກ ພໍ ມີ ປີກ ບິນ ມຸດ ດິນໄດ້ ພໍຢາກບິນຫນີໃຫ້ມັນພົ້ນໄປຈາກບ່ອນບ້າບໍແບວ ນີ້.

ອາຫານແບບຊາວຕາເວັນຕົກ ຖືກຍົກມາດ້ວຍຄົນເສີບ

ທີເປັນຄົນລາວທີເຂົາເອີ້ນວ່າ "ບອຍ" ເຫລົ້າເບຍຖອກໃສ່ຈອກແກ້ວທັນສະໄຫມ ທຸອ້າຍຜູ້ແທນຈັບຍື່ນໃຫ້ວຽງມະນີພ້ອມກັບເວົ້າວ່າ:

- ເຊີນດື່ມ...
- ໂດຍ..

ນາງຈັບເອົາຈອກເຫລົ້າເບຍ ແບບຄົນວ່າ ບອນ ສອນງ່າຍ, ທັງດື່ມທັງກິນອາຫານໄປພ້ອມວຽງມະນີບໍ່ເຄີຍກິນອາຫານຊາວຕາເວັນຕົກ ເລື່ອງທັງຫມົດຈຶ່ງເປັນພາລະຂອງບາເອື້ອຍດວງໃຈ ເປັນຜູ້ຈັດແຈງສິດສອນໃຫ້ ທຸກຢ່າງ. ການກິນ ດື່ມຜ່ານໄປແບບເຊື່ອງຊ້າ ຄ່ອຍເປັນຄ່ອຍໄປ. ຂະນະດຽວກັນທັງຈິດໃຈ ແລະ ຕົນຕົວຂອງວຽງມະນີໄດ້ປ່ຽນຈາກວຽງມະນີຄົນເກົ່າໄປຢ່າງໄວວາ,ສ່ວນເລິກຂອງຫົວໃຈແຂງກະດ້າງ ຄວາມຮູ້ສຶກຕໍ່ເພດກົງກັນຂ້າມ ແລະຄວາມມືນໃນລະຫນອງບັງເກີດຂຶ້ນ, ສຽງດົນຕີທີ່ດັງແຜ່ວເບົາໄດ້ຍິນຕະຫລອດປາກົດວ່າຈາງຫາຍໄປ!. ນາງຫລຽວເບິ່ງຫນ້າທຸອ້າຍຜູ້ແທນເປັນຫລາຍສີຫລາຍຫນ້າ ດອກໄຟບໍ່ພໍ ມີ-໔ ດອກຮຸ່ງພໍມົວໆ ປາກົດວ່າເກີດມີຂຶ້ນຫລາຍພັນດອກ. ສຽງເວົ້າຂອງທຸອ້າຍ ແລະ ບາເອື້ອຍດວງໃຈໄດ້ບິນພໍເປັນຊິບໆ:ເຊບໆ, ແລ້ວພາບທຸກຢ່າງທີ່ຫລຽວເຫັນ

ກໍມະຫັບມະຫາຍໄປ

ຕັ້ງແຕ່ນີ້ນັ້ນມາ ວຽງມະນີສູນເສຍຄວາມບໍລິສຸດອັນມີຄ່າໃນຊີວິດຄວາມເປັນສາວດ້ວຍກະເທົ່ເລ່ຫລ່ຽມຂອງນາງສັງຄົມ, ບາງກາຍເປັນເມຍເກັບ ເມຍລັບຫລືເມຍນ້ອຍທຸອ້າຍຜູ້ແທນດ້ວຍຄວາມບອບຊ້ຳລະກຳໃຈ, ບາງພາຊີວິດບິນເດີນເຫີນຟ້າໄປທົ່ວທ້ອງລາຕີຂອງແສງສີ, ຈາກນັ້ນເຂົາກໍປະຖິ້ມຊີວິດຂອງນາງໃຫ້ອ້າງວ້າງເປົ່າປ່ຽວ, ຈາກທຸອ້າຍຜູ້ແທນຫລາຍຕໍ່ຫລາຍຄົນ ສັບປ່ຽນກັນ ເຮັດໃຫ້ຊີວິດຂອງນາງຈົມຢູ່ໃນເຫວເລິກ ທີ່ແສນໝາຕຶບ ໄປ ດ້ວຍຂວາກໜາມ. ເຮັດໃຫ້ບັ້ນທ້າຍຂອງຊີວິດຕ້ອງລະເຣ່ລະຣ່ອນໄປຢ່າງແສນຂົມຂື່ນ..

ດວງຕາເວັນສ່ອງແສງພໍເປັນລັບແລ ໃກ້ຈະລັບສັນພູຊື່ງຂວາງຄັ້ງນັ້ງຢູ່ຕໍ່ຫນ້າສາຍຕາ, ຄວາມມືດພວມຄືບຄານມາປົກຄຸມໄປທົ່ວດອນທ້າວກໍຄືດອນອື່ນໆ ທົ່ວອ່າງນ້ຳງື່ມ, ນາງຫາຍໃຈໃຫຍ່ເອົາລົມເຂົ້າສູ່ປອດດ້ວຍຄວາມອຶດອັ້ນຕັນໃຈ ເມື່ອຫວນຄຶດຄືນເຖິງພາບຊີວິດເບື້ອງຫລັງທີ່ແສນລະທົມຂົມຂື່ນ, ບໍ່ມີສິ່ງໃດທີ່ຈະໃຫ້ອະໄພໃຫ້ແກ່ພວກນາງສັງຄົມທີ່ຂ້າຄົນຢ່າງເລືອດເປັນນັ້ນໄດ້.

ສາຍລົມພັດວີ ແຮງເຫມືອນວ່າມັນຈິງໃຈຈະປັດເປົ່າ

ເອົາສິ່ງບໍ່ດີອອກຈາກຮ່າງກາຍຂອງນາງໃຫ້ຫມົດສິ້ນ ໄປ, ໃຫ້ຮ່າງກາຍຂອງນາງຂາວສະອາດ ເຫມືອນດວງເດືອນພວມເດັ່ນຢູ່ບົນນະພາ, ແຫງນດວງຕາເວັນທີ່ພວມຫອບເອົາທຸກສິ່ງທຸກຢ່າງໄປເຜົາຜານໃຫ້ຫມົດກ້ຽງ; ບັດນາອ້າຍເອື້ອຍນ້ອງສຳມະນາກອນສ່ວນຫລາຍພາກັນຂຶ້ນຈາກທ່າແລ້ວ ເຖິງຍັງເຫລືອນີເພື່ອນບາງຄົນຫນຶ່ງພວມກວັກມືເອົານາງລົງໄປອາບນ້ຳ ສະສາງລ້າງສ່ວາຍນຳກັນດ້ວຍຄວາມສະຫວາດຫົວໃຈ.

ຫມົດ

# ອ້າຍເຍັນ

* ທ່າທາງຂອງເຂົາເໝືອນນັກຮົບກູ້ຊາດ ຜູ້ອົງອາດກ້າຫານ, ສົມເປັນລູກຫລານຂອງປະຊາຊົນ ທີ່ຂະເຈົ້າລ້ຽງເກືອ, ເຂົ້າເໜັດຫັກ ຜັກເສັ້ນໜຶ່ງກໍແບ່ງປັນກັນກິນ, ສະຫາຍເປັນປືນຄືງຕົວຢູ່ແຄມນ້ຳ ງື່ມ, ສາຍ ຕາ ຫລຽວໄປທາງຟາກກ້ຳເບື້ອງບ້ານຫລິງຊັນ, ອາຍນ້ຳສີຂາວກົ້ວໄປຕາມແລວນ້ຳ, ແມງປໍບິນສວ່ານແສ່ວແລ້ວຕົກລົງໜ້ານ້ຳກາຍເປັນເຫຍື່ອປາ, ເຂົາຢືນງຽບສະຫງົບ ບ່າພາຍປືນກາລະບິນ ລູກຮອບແອວ, ນາໂລ ແລະ ໄຫ່ເຂົ້າ. ມັດຫຸບກົ້ນໃສ່ກັນ, ແລ້ວພາຍບ່ຽງບ້າຍ, ເຂົາ ຢືນ ຊື່ງ ເໝືອນເສົາຫລັກກິໂລແມັດຄືກັບວ່າຈະທົດສອບຄວາມແຂງແຮງໄປໃນຕົວ. ຈາກນັ້ນເຂົາກໍອ່ວາຍໜ້າຄືນມາຫາພວກຂ້ອຍທີ່ຢືນສົນທະນາກັນ ເລື້ອງກອງທະຫານກຳລັງຮັກຊາດ,

ຫລິ້ນລະຄອນກ້ອນຕອນກາງຄືນ ໃຫ້ພໍ່ແມ່ພີ່ນ້ອງຊົມ, ບາງຄົນຫົວຈົນນ້ຳຕາແຕກຕາໄຫລ.

– ອ້າຍເປັນຫລິ້ນໃຫ້ພວກນ້ອງເບິ່ງອີກແດ່ເນີ້ແລງ.

– ພວກອ້າຍຊິໄດ້ເຄື່ອນຍ້າຍກຳລັງໄປສູ່ທີ່ຫນັ້ນ, ຄັນຖ້າພວກອ້າຍບໍ່ໄດ້ໄປພວກອ້າຍຊິຫລິ້ນໃຫ້ເບິ່ງດອກ.

ຂ້ອຍ ແລະ ຫມູ່ພວກທຸກຄົນສະແດງສີຫນ້າຜິດຫວັງຕໍ່ກັນອ້າຍເປັນຍ່າງເຂົ້າມາເອົາມືຕົບບ່າພວກຂ້ອຍທຸກຄົນທັງເວົ້າທັງປອບໂຍນວ່າ :

– ຖ້າໄວ້ໂອກາດຫນ້າ ປະ ເທດ ຂອງ ເຮົາ ມີຄວາມສະຫງົບແລ້ວອ້າຍຊິມາຫລິ້ນຕໍ່.

– ປານໃດລະ?.

– ຈັກສອງສາມປີນີ້ແຫລະ.

– ໂຫ!.

ພວກຂ້ອຍພາກັນຮ້ອງຂຶ້ນພ້ອມກັນ ແລ້ວກໍແລ່ນໄປກອດອ້າຍເປັນດ້ວຍຄວາມດີໃຈ, ທະຫານສອງກອງຮ້ອຍລວມທັງຄອບຄົວລູກນ້ອຍ ພາກັນຕຽມເຄື່ອງຂອງລຳລຽງລົງເຮືອຢ່າງວ່ອງໄວ, ພວກ ຂ້ອຍ ກໍ ມີ ໂອ ກາດໄດ້ຂົນເອົາເຄື່ອງ ລົງ ເຮືອ ນຳ ກັນ, ຈຳນວນທະຫານສອງກອງຮ້ອຍນັ້ນພຽງຄືນດຽວ ພວກຂ້ອຍຮູ້ຈັກມັກຄຸ້ນເພິ່ນຫລາຍຄົນ,

ທີ່ຄຸ້ນເຄີຍກ່ວາຫມູ່ມີສອງຄົນຄືອ້າຍເປັ້ງ ແລະ ອ້າຍໄມ, ສຳລັບອ້າຍໄມເປັນຜູ້ຮັບຜິດຊອບກອງ. ລາວເປັນຄົນຈ່ອຍສູງຂາວ, ບໍ່ດຳຕ່ຳຄືອ້າຍເປັ້ງ, ໃນຂະນະທີ່ພວກຂ້ອຍສະແດງຄວາມດີໃຈກັບອ້າຍເປັ້ງຢູ່ນັ້ນ, ອ້າຍໄມໄດ້ຍ່າງມາຫາພວກຂ້ອຍແລ້ວເວົ້າວ່າ:

– ພວກອ້າຍຊິໄດ້ຈາກພວກນ້ອງໄປແລ້ວເດີ

– ຊິໄປໃສ ?

– ພຸ້ນແຫລະບ່ອນ...

ອ້າຍໄມເວົ້າບໍ່ສຸດຄວາມ ລາວເຫລືອດໄປເຫັນຂະບວນເຮືອ ៥ ລຳແຫກຫນ້ານ້ຳໄຫລຜ່າຄວັນອາຍນ້ຳສີຂາວມຸ່ງຫນ້າສູ່ຟາກບ້ານຫລີງຊັບ, ຂະບວນເຮືອລຳລຽງເຄື່ອງຂອງ ແລະ ເຄື່ອງຂອງທະຫານຜູ້ຮັກຊາດ.

– ສະຫາຍເປັ້ງ ນ້ອງປ່າຟ້າວຂ້າມ ຖ້າຂ້າມນຳຂະບວນສຸດທ້າຍພ້ອມອ້າຍ, ຕອນນີ້ເອົາເຄື່ອງ ແລະ ຜູ້ມີຄອບຄົວຂ້າມໄປກ່ອນ.

– ຈ້າວ!

– ອ້າຍນ້ອງປູ່ວັດເຫນືອ ລົງສູ່ທ່ານ້ຳຫມົດແລ້ວບໍ່?.

– ຫມົດແລ້ວ ! ທີ່ພວມຂ້າມໄປແມ່ນຖ້ຽວທີສອງແລ້ວໄດ.

ຂ້ອຍປືນແບນເບິ່ງຂະບວນເຮືອລຳລຽງຈາກ ໔–໕ ລຳ ກາຍມາເປັນ ໑໐ ລຳ, ຕາເວັນສວາຍມາເທົ່າໃດກໍ່ຍິ່ງຂຸ້ນຂ້ຽວຂຶ້ນເລື້ອຍໆ. ນ້ຳຕາຄວາມຄຶດຮອດຄິດເຖິງໄຫລອອກຈາກເບົ້າຕາຂອງຂ້ອຍ, ດ້ວຍຄວາມຮູ້ສຶກຕື້ນຕັນໃຈທີ່ສຸດ ອ້າຍເປັນແລະອ້າຍໄນເຄີຍໄປປານເຮືອນ, ພໍ່ກັບແມ່ດີໃຈເອົາໄມ້ຂໍເກາະໝາກພ້າວໃຫ້ກິນຕັ້ງຫລາຍໜ່ວຍ, ຂ້ອຍເຄີຍຂໍໄປຢູ່ນຳລາວຫລາຍເທື່ອ ລາວບອກຂ້ອຍວ່າ:

– ໃຫ້ນ້ອງຮຽນໜັງສືເສັງແຊກໄດ້ປີນີ້, ອ້າຍຊິມາຕ້ອນເອົາໄປຮຽນມັດທະຍົມຕໍ່ຢູ່ຊຳເໜືອ.

– ໄປນຳອ້າຍດຽວນີ້ບໍ່ໄດ້ຫວາ?

– ບໍ່ໄດ້ລະຫວ່າງເດີນທາງມັນຍາກ.

ຂ້ອຍເຮັດສີໜ້າຄືຊິໄຫ້ຊິຫົວ, ອ້າຍໄນກໍປະໂຫລາວຫົວຂວັນຂ້ອຍເຮັດຕານ້ອຍແບບຕາໄກ່ປ່າໃສ່. ອ້າຍເປັນດຶງແຂນຂ້ອຍຍ່າງລົງໄປທ່ານ້ຳວັດໃຕ້, ໃນລະຫວ່າງທາງລາວໄດ້ສັ່ງສອນຫລາຍອັນຫລາຍແນວ, ຊຶ່ງຄຳເວົ້າຂອງລາວພໍຈື່ໄດ້ວ່າ:

– ໃຫ້ນ້ອງຟັງຄວາມພໍ່ແມ່, ມີນ້ຳໃຈຮັກຊາດຮັກຜູ້ນຳ ຊັງພວກຮຸກຮານ.

ຂ້ອຍຈື່ເອົາຄວາມສັ່ງສອນຂອງລາວໄດ້ພຽງແຕ່ທໍ່ນັ້ນ

ເຫລືອຈາກນີ້ຈື່ບໍ່ໄດ້ ຂ້ອຍນັ່ງຢູ່ຮາກມ່ວງໃຫຍ່ ສ່ວນອ້າຍເປັນກັບອ້າຍໄນ ຢືນເບິງຂະບວນເຮືອລຳລຽງອ້າຍ ນ້ອງພວມຂ້າມໄປຟາກເບື້ອງນັ້ນ, ທີ່ເຫລືອຢູ່ຝັ່ງນີ້ບໍ່ເຖິງ ໒໐ ຄົນ, ຂະນະນີ້ກໍຕຽມລົງເຮືອຫມົດທຸກຄົນແລ້ວ, ທະຫານອ້າຍນ້ອງຂ້າມໄປລຳເຮືອໃດ ເຮັດໃຫ້ຫົວໃຈຂອງຂ້ອຍຄິດຮອດຄິດເຖິງເພິ່ນທັງສຽງຮ້ອງສັ່ງລາ ແລະ ໂບກມືດັງຂຶ້ນພ້ອມກັນ. ອ້າຍເປັນແລະອ້າຍໄນຍ່າງໄປຫາຜູ້ນັ້ນຜູ້ນີ້ບຶດຫນຶ່ງ,ບາດສຸດທ້າຍທັງສອງໄດ້ເຂົ້າມາຫາຂ້ອຍພ້ອມກັນ, ຂ້ອຍຢືນຂຶ້ນທັງສອງອ້າຍຈັບແຂນຂ້ອຍຄົນລະຂ້າງ ແລ້ວຜັດປ່ຽນກັນເວົ້າວ່າ:

– ນ້ອງເອີຍ ! ພວກອ້າຍຂໍລາ ຝາກຄວາມຄິດຮອດຄິດເຖິງໄປຫາພໍ່ແມ່ແດ່.

– ຈ້າວ... ຣື້...ໆ

– ຢ່າໄຫ້ແນ້ ນ້ອງ ! ອີກບໍ່ດົນພວກອ້າຍຊິກັບມາ.

ອ້າຍເປັນແລະອ້າຍໄນຍ່າງລົງຂັ້ນໄດສູ່ເຮືອເປັນຄົນສຸດທ້າຍໃນຈຳນວນທະຫານອ້າຍນ້ອງທັງຫມົດ ເຫລືອ ນັ້ນພາກັນນັ່ງຢູ່ເຮືອ ລຳທີ່ເຕັມກໍອ່ວາຍຫນ້າ ຂ້າມ ໄປ ຟາກເບື້ອງນັ້ນຊ້າໆ. ອ້າຍເປັນ ແລະ ອ້າຍໄນ ເຂົ້າເຮືອແລ້ວອ່ວາຍຫນ້າຍົກມືອຳລາຂ້ອຍ ແລະ ທຸກໆຄົນທີ່ພາກັນມາ

ປືນສົ່ງ, ເຫດການທີ່ບໍ່ຄາດຝັນໄດ້ເກີດຂຶ້ນ, ໃນຂະນະທີ່ຂະບວນເຮືອສຸດທ້າຍພວມເວຫົວອອກວັງສຽງປືນດັງຂຶ້ນ:

– ປັ້ງ, ປັ້ງ, ປັ້ງ.

ສຽງດັງຄັ້ງກ່າວດັງລຽນຕິດປູ່ທາງບ້ານເໜືອພຸ້ນທົ່ວແລວນ້ຳງື່ມເປັນໝອກຂີວບົວ ຟ້າບົດຄຶ້ມຄືຝົນຊິຕົກ,ຂ້ອຍປືນແຂງບໍ່ຮູ້ຊິເຄື່ອນຍ້າຍໄປໃສ, ເຮືອ ນີ-໔ ລຳປູ່ກາງວັງຂວ້ຳ... ລູກປືນຕົກລົງນ້ຳຟົ້ງເປັນໝອກຂາວສູງສິບຊາວແມັດ, ຂະບວນເຮືອຂອງອ້າຍເປັນ ແລະ ອ້າຍໄນ ໒–ນີ ລຳ, ທີ່ພວມຕ່າວຫົວອອກຈາກຝັ່ງ ກັບຕ່າວຫົວຄືນປ່າງວ່ອງໄວ, ຂ້ອຍໄດ້ຍິນສຽງອ້າຍໄນຮ້ອງໃສ່ທຸກຄົນຫລັງຈາກເຮືອເຖິງຝັ່ງແລ້ວ.

– ອ້າຍນ້ອງທຸກຄົນ ! ຂຶ້ນເມືອດງວນີ້ບໍ່ຕ້ອງປູ່ທ່ານ້ຳ!

ສຽງປືນດັງລະຫນັ້ນ ໄປທົ່ວສອງຟາກຝັ່ງແມ່ນ້ຳງື່ມ, ທີ່ພວມໄຫລຽງບສະຫງັດປູ່ນັ້ນ ໄດ້ພົດເດືອດເປັນແປວຜາດໆ ອ້າຍນ້ອງທຸກຄົນ ແລ່ນຂຶ້ນທ່ານ້ຳນົ້ມເປັນສ່ວນຫລາຍແລ້ວຂ້ອຍຍັງນັ້ງຫມູບເບິ່ງອ້າຍໄນ ແລະ ອ້າຍເປັນບອກໃຫ້ອ້າຍນ້ອງທຸກຄົນຂຶ້ນໄວໆ. ໃນຂະນະທີ່ຂ້ອຍຫມູບປູ່ກັບຮາກມ່ວງໃຫຍ່ປູ່ນັ້ນມີມືອຸ່ນໆດຶງແຂນຂ້ອຍລຸກຂຶ້ນພ້ອມທັງເວົ້າວ່າ:

– ນ້ອງ... ລຸກໄວອັນຕະລາຍເຂົ້າໄປກຸຕິນຳຄູບາພຸ້ນ!

ອ້າຍ ນ້ອງ ຄົນ ນັ້ນ ຊຸກ ຫລັງ ໃຫ້ ຂ້ອຍແລ່ນໄປຫາສິມ ບ່ອນພະພຸດທະຮູບໃຫຍ່ຢູ່, ພໍແລ່ນເຂົ້າໄປຄູບາຢູ່ໃນສິມ ກໍໄຂປະຕູດຶງແຂນເຂົ້າໄປໃນທັນທີ, ສຽງປືນດັງລອດເຂົ້າ ໄປໃນຊຶ່ງອັດປະຕູແຈບມິດ, ເຮັດໃຫ້ທາງໃນມືດປານກາງ ຄືນ, ຂ້ອຍຫລຽວບໍ່ເຫັນທາງໃດ, ມີປ່ອງອັດປະຕູປ່ອງ ຢ້ຽມເປັນຮູນ້ອຍໆ ພ້ອມທັງມີແສງສະຫວ່າງລອດເຂົ້າໃນ ສິມເປັນເລົາອູດຫລູດ, ຂ້ອຍປ່ອງໄປໄຂປ່ອງຢ້ຽມເປີດແງ້ມ ອອກນ້ອຍໆ, ທັນໃດນັ້ນເອງສາຍຕາຂອງຂ້ອຍພັດໄປເຫັນ ອ້າຍໄມພວມຈັບປືນສັ້ນ, ຍິງກັບທະຫານສັດຕູຢູ່ອ້ອມກົກ ມ່ວງໃຫຍ່ແຄມທ່າ, ບ່ອນ ຂ້ອຍ ຫມູບ ຢູ່ ຫວ່າງ ຫນຶ່ງ ນີ້. ທະຫານສັດຕູນຸ່ງຊຸດຂຽວໃສ່ຫມວກເບເລສີຂຽວ, ດືກອ້າຍ ໄມໄລ່ຍິງອ້ອມກົກມ່ວງ ຂ້ອຍ ຫລຽວໄປ ທາງ ເບື້ອງ ທົງ ເຫັນທະຫານສັດຕູ ພວມແລ່ນເປັນຫມູ່ຄືບໆເຂົ້າມາວັດ. ພວກມັນຍິງປືນກວາດໄປທົ່ວທີບທົ່ວແດນ, ອ້າຍໄມຢູ່ໃນ ທ່າເສັຍປຽບ ໃນ ເວ ລາ ນີ້, ແຕ່ໃນທັນໃດນັ້ນທະຫານອ້າຍ ນ້ອງຄົນຫນຶ່ງ ແລ່ນພວດພາດຂຶ້ນມາແຕ່ທ່ານ້ຳ, ພ້ອມ ກັບເປົ່ງສຽງຮ້ອງຂຶ້ນວ່າ:

– ຫລີກໄປອ້າຍໄມ ! ນ້ອງສູ້ !

ນາຍທະຫານສັດຕູບັກນັ້ນໄດ້ຫງິນສຽງ, ຕົກສະເງີ້ກັບບາດ ປືນຂອງທະຫານອ້າຍນ້ອງຢູ່ໃນນີ້ ລົວໃສ່ນາຍທະຫານບັກນັ້ນທັນທີ, ມັນຫມູບລົງກັບຮາກມ່ວງ; ໃນໂອກາດດຽວກັນນັ້ນ ອ້າຍໄມ ກໍ ຫມູບ ຕົວ ກັບ ແລ່ນໄປບັງຕົ້ນຝາງແຄມວັດເບື້ອງປ່າກ້າໃຕ້, ທະຫານສັດຕູຫມໍ່ນັ້ນ, ຄານແນບກອນບ່າເຂົ້າມາວັດ ຢ່າງ ບໍ່ ຫລຽວ ຫລັງ ແລ້ວກໍ່ມາຫມູບບັງຢູ່ເສົາກຸຕິ.

– ອ້າຍເປັນ!

ຂ້ອຍຫລົງຮ້ອງຫມົດແຮງ. ທະຫານອ້າຍນ້ອງຄົນນັ້ນໄດ້ສັ່ງສອນນາຍທະຫານຂອງສັດຕູ, ໄດ້ຮັບບາດເຈັບມານອນຫມູບຢູ່ເສົາກຸຕິ. ທີ່ແທ້ກໍ່ແມ່ນອ້າຍເປັນ, ລາວພວມ ແລ່ນ ກາຍ ກົກ ມ່ວງເຂົ້າສູ່ປ່າແຄມວັດຢ່າງວ່ອງໄວ. ສຽງປືນ ແລະ ສຽງລູກແຕກດັງສະຫນັ່ນຫວັ່ນໄຫວ, ສົມສັ່ນສະເທືອນບຶດໆ.

ສຽງປືນງຽບສະຫງົບລົງ ບໍ່ຮູ້ວ່າເປັນເວລາຈັກຊົ່ວໂມງທີ່ພວກທະຫານສັດຕູມັນຍິງ, ຕາມຂ້ອຍຄາດຄະເນເວລາພວກມັນຍິງຄືຊິນັ້ງ ໑໐ ໂມງນັ້ນແຫລະ ກ່ວາຊິແລ້ວກໍ່ກາຍເພນໄປແລ້ວ. ຄູບາ ແລະ ອ້າຍຈົວຕັ້ງ ໑໐ ກ່ວາອົງບໍ່ມີອົງໃດໄດ້ສັນເຂົ້າເພນ. ສຽງປືນງຽບສະຫງົບລົງ ສຽງຮ້ອງ

ໃຫ້ເຂົ້າມາແທນທີ່, ຂ້ອຍສະອື້ນໃຫ້ປູ່ຄົນດຽວໃນສິນຊຶ່ງ ມືດຕຶບຄືກັນກັບກາງຄືນ, ໃນຂະນະນັ້ນສຽງທຸບຕີສົມ ແລະ ສຽງເຕະປະຕູດັງຂຶ້ນ, ປະຕູໂຍກເຍກໄປມາ.

– ຕັ່ງ, ຕັ່ງ, ຕັ່ງ.

– ໄຂປະຕູໄວບັກຫົວໂລ້ນ!

ຖ້າຫລຽວເຫັນກັນໃນຄາວນັ້ນ, ໃບຫນ້າຂອງທຸກຄົນບໍ່ວ່າ ຂ້ອຍແລະຄູບາຊີດຂາວໄປຫມົດ, ຈາກສຽງເຕະສຽງເຄາະ ແລ້ວພວກທະຫານສັດຕູ ສາກປືນຂູ່ພ້ອມກັບເວົ້າວ່າ:

– ໄດ້ຫງຶບບໍ່? ບັກຫົວໂລ້ນໄຂປະຕູ!

– ຈົວນ້ອຍອົງຫນຶ່ງ ຍ່າງເຂົ້າໄປຫາປະຕູດ້ວຍຄວາມ ຈຳໃຈ, ລາວຖອດໄລ ປືນເຮັດຕົວແຂງກັບປະຕູນັ້ນແບບບໍ່ ເຄື່ອນຍ້າຍ, ທະຫານສັດຕູພູດເຂົ້າມາ ໕ ຄົນປ່າຍປືນຕິດ ດາບປາຍແຫລມເຫລື້ອມມາບໆ.

– ໄຂປ່ອງຢ້ຽມອອກໃຫ້ຫມົດ.

– ສູເອົາອິກສະຫລະມາເຊື່ອງໄວ້ນີ້ບໍ?

ບໍ່ມີສຽງຕອບຈາກຄູບາ ແລະ ອ້າຍ ຈົວ ອົງໃດເລີຍ. ພວກມັນພາກັນຍ່າງລົ້ວເລັ້ຍໄປມາສອງສາມຮອບ ກໍຍ່າງ ລົງສິມວັດໄປດ້ວຍຄວາມຜິດຫວັງ, ພ້ອມດຽວກັນ ພວກ ມັນໄດ້ຖີ້ມໂທດໃສ່ຄູບາ ແລະ ຊາວບ້ານທຸກຄົນວ່າ:

– ໄທບ້ານແຈ້ງ ບໍ່ວ່າບັກຫົວໂລ້ນ ແລະ ຊາວບ້ານ, ເປັນໃຈອິດສະຫລະຫມົດ.

ທຸກຄົນບໍ່ຫົວຊາຕໍ່ຄຳເວົ້າຂອງພວກມັນ, ຂຶ້ນເວົ້າຕອບມີຫວັງເປັນເຫຍື່ອລູກປືນຂອງມັນແນ່ນອນ. ທະຫານສັດຕູຂ້າຫມູ ຂ້າໄກ່ຊາວບ້ານກິນລ້າງ ເງິນອັດຫນຶ່ງແດງຫນຶ່ງກໍບໍ່ໂຍນໃຫ້, ຕອນບ່າຍມື້ນັ້ນ, ພວກມັນອອກຈາກບ້ານແຈ້ງໄປບ້ານຕານປຽວ, ບາຍຂອງມັນບາດເຈັບຜ້າຂາວພັນໂອບທີ່ແຂນເບື້ອງຊ້າຍ. ຂ້ອຍຍັງບໍ່ທັນລົງຈາກສົມເຫືອ, ມີແຕ່ປ່ອນຫົວອອກປ່ອງຢ້ຽມເບິ່ງລະພາບການຢ່າງບໍ່ລົດລະ, ກ່ອນມັນຊິໄປພວກມັນໄດ້ບອກວ່າ:

– ໄປນັ້ງນສົບອິດສະຫລະຢູ່ແຄມວັດແດ່ເດີ ເອົາມັນໂຍນຖິ້ມໄຫລນ້ຳງຶມໄປກໍໄດ້.

ຂ້ອຍໄດ້ຫງຶນບາຍທະຫານຫມໍນັ້ນສັ່ງ, ຫົວໃຈຂອງຂ້ອຍຕົກວາບ, ຂົນຄີງລຸກເບືອບຍາບ, ຂ້ອຍຟ້າວແລ່ນລົງສົມໄປຊອກຫາສົບຢູ່ແຄມວັດທັນທີ.

– ອ້າຍເປັນ !

ຂ້ອຍຮ້ອງຂຶ້ນຫມົດແຮງ ຫົວເຂົ່າທັງສອງເບື້ອງອ່ອນພັບແພບລົງກັບບາດ, ອ້າຍເປັນຫລັບຕາສະຫງົບຢຽດໄປຕາມຂອນໄມ້ໃຫຍ່, ເລືອດອາບໄປທົ່ວຕົນຕົວ, ທັງຂ້າງ

ບ່ອນຂ້ອຍນັ່ງຫມູບຢູ່ນັ້ນ ແມ່ນຂຸມລູກປືນໃຫຍ່ທີ່ປາກຄົກຕຳເຂົ້າ, ຂ້ອຍສະອື້ນໄຫ້ບໍ່ພໍຄາວຊາວບ້ານກໍພາກັນຫລັ່ງມາຈົນເຕັມບໍລິເວນ. ແມ່ຕູ້ຄົນຫນຶ່ງລາວໂບບນັ່ງລົງເອົາມືຫມູບຫນ້າເວົ້າອອກມາດ້ວຍສຽງສັ່ນເຄືອປົນສະອື້ນວ່າ:

– ເປັນ... ຣື... ຫລານຮັກຂອງແມ່ຕູ້ຂໍໃຫ້ດວງວິນຍານຂອງຫລານໄປສູ່ສຸກຂະຕິທ້ອນ...!

ຊາວບ້ານທຸກຄົນທີ່ມາເບິ່ງເກືອບຫມົດບ້ານ ຕ່າງກໍພາກັນເຊັດນ້ຳຕາລະອື້ນໄຫ້ນຳກັນ, ບ່າວສາວຊາວຫນຸ່ມ, ພາກັນຄຶດທວນຄືນຕອນຫລິ້ນລະຄອນຄືນນີ້, ອ້າຍເປັນລາວຕະຫລົກດີທຸກຄົນຕິດອົກຕິດໃຈ.

ພິທີປົງສົບຈັດຂຶ້ນຢ່າງກະທັດຮັດໄວວາ ຊາວບ້ານເສຍສະຫລະຊັບສິນຕະຫລອດຜ້າຫົ່ມສົບ, ນິມົນພະສູດໃຫ້ພອນ, ພິເສດກ່ອນຫມູ່ໃນພິທີປົງສົບ, ທຸງແດງຜືນຫນຶ່ງປົວລະບັດໄປກ່ອນໂລງສົບ ຂອງສະຫາຍເປັນ, ຢ່າງມີຄວາມຫມາຍສຸດຊຶ້ງ.

ຜືນທຸງແດງໄດ້ພັດໂບກໄປມາ ເຕືອນໃຫ້ຄົນລາວທຸກຄົນລຸກຂຶ້ນຕໍ່ສູ້ຕ້ານກັບສັດຕູ ເພື່ອຄວາມເປັນເອກະລາດຂອງຊາດໃນຕໍ່ຫນ້າ, ຊາວບ້ານທຸກຄົນເກັບຄວາມແຄ້ນໄວ້, ເອົາແບບຢ່າງຂອງອ້າຍເປັນເສຍສະຫລະເພື່ອຊາດ.

# ປາບ

* ກຳມະກອນທ່າເຮືອສອງຄົນ ນັ່ງຊິດລາບຊື້ນບ່ວຍ ບ່າຍໆຢ່າງແຊບນົວ ໃນຕະຫລາດທ່າເດື່ອ, ແກ້ວເຫລົ້າພ້ອມດ້ວຍຈອກຕັ້ງຮຽງຖ້ວຍລາບ ແລະ ຖ້ວຍແກງ, ແຕ່ລະຄົນຄືວ່າຫິວເຂົ້າເອົາແທ້. ລົດເຫລົ້າຍາມທ່ຽງວັນເຮັດໃຫ້ພວກເຂົາຫນ້າແດງຫູແດງ ໂດຍສະເພາະແມ່ນຄົນທີ່ນັ່ງປິນຫລັງໄປເບື້ອງນ້ຳຂອງ ອ່ວາຍຫນ້ານາກ້ຳຝາກທາງຖະຫນົນ ເຂົານັກເທງັ້ບເຫລົ້າໃສ່ຈອກແລ້ວຮ່າຍໃສ່ປາກເລື້ອຍໆ. ພວກເຂົາກິນຢ່າງມີຄວາມສຸກສົນກັບເຫື່ອແຮງຖອກເທໃສ່ວຽກຕັ້ງແຕ່ເຊົ້າຈົນເຖິງທ່ຽງ, ສົ້ງເສື້ອມອມແມມບໍ່ຮູ້ວ່າເປັນສີຫຍັງ.

ກຳມະກອນ ຄົນທີ່ນັ່ງອ່ວາຍຫນ້າໄປທາງນ້ຳຂອງ ຂ້ອນຂ້າງດຳຄຶກນຶກ ເນື່ອຫລຽວແຕ່ໄກໄປເຫັນຄືວັດຖຸທີ່ເຄື່ອນຍ້າຍໄຫວຕິງບໍ່ເປັນ, ຊ່ຳກັບກະຕໍເຜົາລົນປູ່ກາງໄຮ່,

ເຂົາຊື່ນາຍພອນ ຫລື ທ້າວພອນ ເຂົາວາງບ່ວງຊິດແກງລົງແລ້ວ ເງີຍຫນ້າເບິ່ງເພື່ອນຂອງເຂົາ ຊຶ່ງທຳທ່າປາກຖອຍຫັບເລື່ອງການກິນ, ເຂົາເວົ້າວ່າ:

– ບັກ ຫ່າ ນີ ! ສັ່ງລາບຕັ້ງສອງພັນເບິ່ງຄືວ່າຊິກິນຫມົດ.

– ໂຫ່! ເຮົາທັງເອົາຄຳເຂົ້າຄຸ້ຍ ທັງບ່ວງຊິດ ມັນກໍບໍ່ຫມົດຫັ້ນເດ, ທັງຫມົດນີ້ເຮົາມອບໃຫ້ໂຕສ່ຽວ!

ນາຍພອນບໍ່ຍອມເວົ້າຕອບເພື່ອນ, ເຂົາຕັ້ງໃຈກົ້ມຫນ້າກິນອາຫານ ໃຫ້ຫມົດ ທັງເອົາບ່ວງຊິດຕັກກິນຄຳເຂົ້າຄຸ້ຍສ່ວນເພື່ອນຂອງເຂົາດີນໆ ເອົາ ບ່ວງ ຊິດ ລາບເທື່ອຫນຶ່ງ, ສາຍ ຕາ ຫລຽວ ເຫລືອດ ມາ ຫາເຈົ້າຫນ້າທີ່ທຸກພະແນກພວມປະຕິບັດວຽກງານຢ່າງເຂັ້ມຂົ້ນຢູ່ທ່າດ່ານ ຢູ່ໃນສາຍຕາຂອງເຂົາມີຕຳຫລວດເພດຍິງຄົນຫນຶ່ງ ຫນ້າ ຕາ ຮູບຮ່າງ ງາມ ພໍໃຊ້ໄດ້, ສາຍຕາເຫລືອດໄປຕາມການເຄື່ອນໄຫວຂອງຕຳຫລວດຍິງຄົນນັ້ນ ຄ້າຍຄືກັບວ່າຫມ່ຈະຊອກຄົ້ນຫາອັນໃດຈັກຢ່າງຈາກນາງອອກມາໃຫ້ ໄດ້, ບຶດຫນຶ່ງເຂົາ ຍິ້ມ ພໍ ຮູ້ ຈັກ ປະກົດຢູ່ໃນຫນ້າອັນແດງເປັ່ງດ້ວຍລິດເຫລົ້າ ພ້ອມ ທັງ ເວົ້າ ອອກ ມາ ດ້ວຍທ່າທາງດູຫມິ່ນປະຫມາດວ່າ:

– ສ່ຽວພອນ ເຮົາວ່າແຕ່ກ່ອນນີ້ແຕ່ຕໍາຫລວດຜູ້ຊາຍ ນາຍພາສີຜູ້ຊາຍກໍຍັງບໍ່ໄຫວ ພວກພໍ່ຄ້າແມ່ຄ້າແມ່ນບໍ່ ສ່ຽວ.

– ໂຕເວົ້າແນວນັ້ນກໍຖືກ.

– ຣະງ...ຣະງ... ບັກສ່ຽວມັນບໍ່ຖືກແນວໃດຫວາຂອງ ກູເວົ້າແນວມັນຖືກ ພວກພໍ່ຄ້າແມ່ຄ້າມັນມີປີ້ນວິເສດໂວ້ຍ! ຍິ່ງໃສ່ຕໍາຫລວດ, ພາສີ, ກໍາມະກອນ ຕາຍອາດຫລາດ.

– ສ່ຽວມຶງຢ່າເວົ້າແຮງຫລາຍແມ້ດຽວນີ້, ລະບອບ ໃຫມ່ໄດເວີຍ!

– ກູຮູ້ບ່າສ່ຽວ ບ້ອນກູຮູ້ວ່າລະບອບໃຫມ່ນັ້ນແຫລ້ວ ຈັ່ງເວົ້າແຮງ, ກູເວົ້າມາກໍແມ່ນຕໍາຫລວດ, ພາສີລະບອບ ເກົ່າເວີຍ.

ນາຍພອນກິນເຂົ້າອີ່ມຫນໍາສໍາລານ ແລ້ວປ່ອຍພາລະ ຫນ້າ ທີ່ ໃຫ້ເຈົ້າຂອງຮ້ານ ມາເກັບມ້ຽນເຄື່ອງ ຖ້ວຍຊາມ ສ່ວນຕົວເຂົາຍ້າຍບ່ອນໄປນັ່ງຢູ່ໃກ້ກັບເພື່ອນຂອງເຂົາ ຊຶ່ງ ອີງພະນັກຮ້ານປ່ອຍອາລົມທີ່ພວມອອກມາ, ແຕ່ລະຄົນ ເມົາສິນຄວນຂະຫນາດຫລຽວເບິ່ງຄົນຜູ້ຫນຶ່ງເປັນສອງຄົນ.

– ສ່ຽວມຶງເຊື່ອກູບໍ່?

ໂຕບໍ່ທັນເວົ້າຫຍັງຊິມາຖາມເຮົາເຮັດຫຍັງ?

– ບໍ່ ! ຈັ່ງຊີ້.

ເຂົາຂຽງຕົວມາໃກ້ໆ ນາຍພອນໄດ້ລະດັບ ສິນ ຄວນ ແລ້ວ ເວົ້າຊືມໃສ່ຫູຄ່ອຍໆ, ສ່ວນນາຍພອນທັງ ງຶກ ຫົວ ຕອດງ້ອກໆຢູ່ບໍ່ເຊົາຈົນໜຸ່ມເວົ້າສຸດລົງ, ທ່າທີຂອງເຂົາ ເຖິງຈະເນົາປານໃດ ກໍສະແດງເຖິງຄວາມສົນໃຈ ຕໍ່ບັນຫາ ທີ່ໜຸ່ມຊືມໃຫ້ຟັງຫວ່າງຫນຶ່ງນີ້.

– ແຫ້ຫວາສ່ຽວ.

– ກະແຫ້ລະບໍ່ ດຽວນີ້ເຖົ້າແກ່ຄົນນັ້ນຍັງລໍຟັງຄຳ ຕອບພວກເຮົາໃນຕອນແລງນີ້,

– ມີຫຍັງແດ່ ?

– ລ້ວນແຕ່ຂອງຕ້ອງຫ້າມທັງນັ້ນ ເນື່ອຈັດການ ເອົາຂ້າມໄດ້ກໍກັບມຶງຕ້ອງສະບາຍໄປຫລາຍເດືອນ, ເງິນ ກີບລາບນີ້ນີ້ ກໍແມ່ນມັນຈ້າງເຮົາ ໃຫ້ຕັດສິນໃຈ ວ່າຈັ່ງໃດ ສ່ຽວຕົກລົງເຮັດນຳເຮົາບໍ?.

ນາຍພອນບໍ່ປາກພຽງແຕ່ໃຊ້ສາຍຕາສັງເກດ ເບິ່ງ ທ່າ ທີຂອງໜຸ່ມຄົນນັ້ນຢ່າງພິຈາລະນາ, ເພື່ອພິສູດຄວາມຈິງ ໃຫ້ຄັກໃຈ. ລົມພັດວາບແຮງສິນຄວນເຮັດໃຫ້ເຈ້ຍປະດັບ ປະດາແຕ່ຄາວບຸນປີໃຫມ່ ໒ ເດືອນຜ່ານມາເຈົ້າຂອງຮ້ານ ເອົາມາເອ້ແກ່ວງໄກວປົດບັດ ເຮັດໃຫ້ຄວາມຮ້ອນຜ່ອນ

ເບົາລົງໄປອີກ, ຄວາມຈິງແລ້ວຖ້າເວົ້າເລື່ອງເງິນຄຳກ້ອນໃຫຍ່ບໍ່ມີໃຜຊິບໍ່ປາກໄດ້, ແຕ່ເຂົາມາຕັດສິນໃຈຍາກເອົາແທ້ ຍ້ອນວ່ານາຍພອນ ຜັດແຕ່ເຮັດວຽກ ເປັນກຳມະກອນແບກຫາມຢູ່ທ່າດ່ານບັນແຕ່ມີການປົດປ່ອຍມາເຂົາບໍ່ເຄີຍຄິດຄົດທໍລະຍົດ ຕໍ່ອາຊີບຂອງຕົນ, ຕັ້ງໃຈຫາກິນດ້ວຍຄວາມສັດຊື່ບໍລິສຸດ ຕາມທີ່ພະນັກງານໄດ້ອົບຮົມສັ່ງສອນທຸກຢ່າງ. ແຕ່ສະເພາະໜ້ານີ້ ແນວທາງບໍ່ດີນັບມາລົບເລົ້າໃຫ້ເຂົາ ຕ້ອງຄຶດຊັ່ງຢູ່ລົບແສນດົນ; ຄັນຖ້າແມ່ນລະບອບເກົ່າ ເຂົາບໍ່ຈຳເປັນຕ້ອງນັ່ງກ່າຂະນັບ ຄຶດຢູ່ແນວນີ້, "ເງິນ ຫລືວ່າຄວາມຊື່ສັດ" ນາຍພອນຖາມຕົວເອງຢູ່ຄົນດຽວ.

– ວ່າຈັ່ງໃດສ່ຽວ ຕົກລົງເອົາກັບເຮົາບໍ?

– ທອງໃຈມ ເຮົາຕົກລົງຍັງບໍ່ທັນໄດ້ເທື່ອ.

– ພອນ! ໂຕຢ້ານຕຳຫລວດຜູ້ຍິງນີ້ຫວະ!

– ບໍ່ຢ້ານ, ແຕ່ວ່າເຮົາຕົກລົງບໍ່ທັນໄດ້ເທື່ອ ເອົາໄວ້ມື້ອື່ນດີກວ່າ.

– ຈັ່ງຊັ້ນກໍໄດ້ສ່ຽວ ມື້ເຊົ້າຕອບ ແລ້ວເຮົາຊິໄປບອກເຂົາຂົນເຄື່ອງມາໄວ້ເຮືອນເຮົາ.

ທັງສອງແຍກທາງກັນທັນທີ, ທອງໃຈມຂີ່ນລົດຕັກ

ຊິເຂົ້າມາໃນວຽງຈັນສ່ວນນາຍພອນກຳມະກອນແບກຫາມ ນາຍ່າງວົນວຽນ ຢູ່ໃນຕຶກທ່າດ່ານ ເພື່ອຄອຍຮັບຈ້າງຂົນ ເຄື່ອງລົງເຮືອ, ເຂົາຢືນຊືງໃຊ້ສະໝອງບໍ່ຍອມໄປ ເວົ້າ ລົມ ນຳເພື່ອນຝູງຮັກແພງອາຊີບດຽວກັນ. ສາຍຕາຫລຽວສັງ ເກດການເບິ່ງການປະຕິບັດງານຂອງເຈົ້າໜ້າທີ່ ຊຶ່ງ ເປັນ ແພດບິງ ພວກຂະເຈົ້າ ພວມຂຸ້ນຂ້ຽວເຮັດວຽກງານ ຕາມ ໜ້າທີ່ຄຳສັ່ງ ດ້ວຍຄວາມບໍລິສຸດໃຈ. ລາງເທື່ອ ຍິ້ມ ແຍ້ມ ລາງເທື່ອບູດບຶ້ງ ລາງເທື່ອເຮັດໜ້າສີຕື່ນຕົກໃຈ; ທັງ ໝົດທີ່ປະຕິບັດງານຢູ່ດ່ານນີ້ຮູ້ຈັກຊື່ນາຍພອນ ແລະ ນາຍ ທອງໃຈນົດ ຫລັງຈາກກວດເບິ່ງເຄື່ອງຂອງຮຽບຮ້ອຍແລ້ວ ຕຳຫລວດນາງນັ້ນ ໄດ້ງວກໜ້າສີ້ນໆມາໃສ່ນາຍພອນ ພ້ອມທັງຍ່າງມາຫາເຂົາ, ຂະນະນັ້ນ ຈິດໃຈຂອງນາຍ ພອນປະກົດວ່າ ຕົກວາບເປັນຈັ່ງໃດບໍ່ຮູ້ ນາງຍ່າງເຂົ້າມາ ຢືນຫ່າງເຂົາ ລະຍະພໍເວົ້າໃຫ້ຮູ້ຄວາມ:

– ລຸງພອນນີ້ຄືມາເຫງົາແທ້ເຈົ້າບໍ່ສະບາຍບໍ ?

– ເອີ... ອ່າ... ບໍ່ເປັນຫຍັງ.

– ຄັນຊັ້ນຕອນແລງນີ້ບໍ່ເຫັນເຮັດວຽກນຳໝູ່.

– ລຸງຕາລາຍໄປຫລາຍເຕີບເລີຍບໍ່ກ້າເຮັດ.

– ເປັນຫຍັງລຸງຕາລາຍກິນເຫລົ້າມາບໍ?

– ແມ່ນແລ້ວ!

– ໄປນອນພັກຜ່ອນສາລຸງ ຈັກໜ້ອຍເຮັດວຽກຊິເປັນອັນຕະລາຍ.

ນາງຕຳຫລວດແນະນຳນາຍພອນ ດ້ວຍຄວາມເປັນຫ່ວງເປັນໃຍ, ແລ້ວກໍກັບໄປເຮັດວຽກຕາມໜ້າທີ່ຄືເກົ່າ ພາຍຫລັງພັກຜ່ອນຊົ່ວຄາວເປັນເວລາສັ້ນ. ນາຍພອນພະຍາຍາມຊົງຕົວຢ່າງໃຫ້ໝັ້ນທ່ຽງ ແຕ່ກໍບໍ່ພົ້ນສາຍຕາຂອງບັນດາກຳມະກອນດ້ວຍກັນ. ພວກເຂົາທັງຫົວຂວັນທັງຮ້ອງມາໃສ່ "ພອນເອີຍພອນມຶງຄືຊິບໍ່ມົ້ນເດືອນ ໆ ນັ້ແທ້" ເຂົາຍ່າງໂຊເຊອອກມາຈາກດ່ານມຸ່ງໜ້າໄປທີ່ເຮືອນຝາກທາງເບື້ອງທີ່ງ.

ເຂົາຕື່ນຂຶ້ນມາ ອາການອ່ອນເພຍຜິດປົກກະຕິ ຄໍແຫ້ງ ຫິວນ້ຳຄືຊິກິນໝົດເປັນໄຫ ໜ້າຕາປະກົດວ່າໃຄ່ພອງຜິດປົກກະຕິ, ເຂົາຟ້າວລ້າງໜ້າແລ້ວລົງມາກ້ອງຕະລ່າງເຮືອນ ພໍລົງຂັ້ນໄດຫົວເຂົ້າຫວິດພົ້ນເຮືອນສາຍຕາຫລຽວເຫັນນາງຕຳຫລວດຄົນນັ້ນ ພວມນັ່ງພັບເພບແບບແມ່ບົງລາວເວົ້າລົມກັບເມັຍຂອງເຂົາ ດ້ວຍໃບໜ້າຍິ້ມແຍ້ມສົດໃສ. ນາງບໍ່ທັນເຫັນເຂົາ, ນາຍພອນຖົກບາດຕົນຄິດວ່າຊິຖອຍຄືນຂຶ້ນເຮືອນພໍດີໄດ້ຍິນສຽງຮ້ອງມາຫາວ່າ:

– ລຸງພອນເປັນແນວໃດສ່ວາງແລ້ວບໍ?

– ເອີ້... ສ່ວາງແລ້ວ ເລີກການແລ້ວບໍ?

– ເລີກດົນແລ້ວເລີຍມາແວ່ຫລິ້ນນໍາປ້າຊຸ້ນດອກ.

ຄວາມເວົ້າຂອງນາງ ເຮັດໃຫ້ນາຍພອນອຸ່ນອົກອຸ່ນໃຈຂຶ້ນມາຫລາຍເຕີບແຕ່ກໍຍັງບໍ່ແນ່ນອນໃຈຕົວເອງຕໍ່ການມາເຮືອນຂອງນາງດ່າຫລວດຄົນນັ້ນ. ນາງອາດຈະມາສືບເສາະເລື່ອງໃດເລື່ອງໜຶ່ງກໍອາດເປັນໄປໄດ້ ເພາະເວລານີ້ພາຍຫລັງການສ້າງຕັ້ງລະບອບໃຫມ່ຂຶ້ນມາ. ທ່າດ່ານປະຕູຫຽວເຂົ້າຫຽວອອກລະຫວ່າງ ປະເທດສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ກັບ ພຣະຣາຊອານາຈັກໄທ, ຖືກເປີດຂຶ້ນ, ຊຶ່ງທີ່ຜ່ານມາປິດໄປຊົ່ວຂະນະແມ່ນໄທເປັນຜູ້ປິດປະຕູບ້ານ ເຂົາເອງຫ້າມການໄປມາຫາສູ່ກັນລະຫວ່າງພີ່ນ້ອງສອງຝັ່ງຂອງ; ໂດຍຝ່າຍລາວບໍ່ໄດ້ປະກາດປິດປະຕູບ້ານແຕ່ຢ່າງໃດ. ຍ້ອນເຫດການທີ່ໄທສ້າງຂຶ້ນຈຶ່ງເກີດມີພວກນັກສາຊີບຫາກິນແບບຜິດກົດຫມາຍ. ຝ່າຝືນກົດລະບຽບບ້ານເມືອງຄື ເອົາເຄື່ອງຂອງມີຄ່າລັກຂ້າມ ແລະ ອື່ນໆຫລາຍບັນຫາ ນາຍພອນຄິດໄປຫລາຍອັນຫລາຍແນວແລ້ວໂງມາຄິດເຖິງເລື່ອງຕົວເອງພວມຕັດສິນໃຈເຮັດວຽກແນວນີ້ກັບຫມູ່, ນາງຈະຮູ້ໄດ້ແນວໃດກ່ຽວກັບ

ແຜນການເລື່ອງນີ້ ນອກຈາກສອງຄົນທີ່ຮູ້ກັນ"? ນາຍພອນຖາມຕົວເອງໃນຂະນະທີ່ເຂົາຍ່າງລົງຂັ້ນໄດເພື່ອກ້າວໄປນັ່ງຮ່ວມວົງສົນທະນາກັນກັບນາງຕຳຫລວດພ້ອມດ້ວຍເມັຍຂອງຕົນເອງ.

ຕາເວັນຍາມແລງຄ້ອຍຄ່ຳພາດປາຍໄມ້, ລົມເປັນພັດມາແຕ່ທາງເບື້ອງທ່ານ້ຳຂອງ ເຮັດໃຫ້ອາລົມຂຸ້ນມົວຂອງນາຍພອນຄ່ອຍສະຫວ່າງຂຶ້ນ. ຜູ້ເປັນເມັຍໄດ້ໂອກາດກໍລຸກໜີໄປເຮັດວຽກເຮືອນຄົວປ່ອຍໃຫ້ຜົວ ແລະ ນາງຕຳຫລວດລົມກັນຖ້າ.

– ລຸງພອນວຽກງານດຽວນີ້ເປັນແນວໃດ?

– ສະບາຍໄປແນວໜຶ່ງ ແຕ່ວ່າ...

– ເວົ້ານາໂລດແມ້! ລຸງມີເລື່ອງຫຍັງ?

ນາຍພອນຕົກຂະໜ່າທັນທີ ເມື່ອໄດ້ຍິນນາງຕຳຫຼວດຄົນນັ້ນຖາມຈີ້ຂຶ້ນໃນຂະນະທີ່ຕົນເອງພວມຈະຄິດເວົ້າຫຍັງອອກມາ, ແຕ່ຄວາມເວົ້າທີ່ຈະເວົ້າອອກມາລືມໄປຊົ່ວຂະນະ, ໃນໜ້າຂອງເຂົາມ້ານຂາວລົງທັນທີ ພາບທີ່ເຂົານັ່ງດື່ມເຫລົ້າກິນເຂົ້າກັບລາບເລືອດຮ້ານແຄມຂອງຍັງປາກົດເດັ່ນຢູ່ໃນຄວາມຈຳຂອງເຂົາ ຄວາມເວົ້າບາງຄຳຍັງຈື່ໄດ້ລະຫວ່າງໜໍໃຈມກັບເຂົາສົນທະນາກັນ.

- ວ່າຈັ່ງໃດສ່ງວ ຕົກລົງເອົາກັບເຮົາບໍ່?

- ທອງໃຈເ; ເຮົາຕົກລົງບໍ່ທັນໄດ້ເທື່ອ.

- ພອນ ! ໂດຍ້ານຕໍາຫລວດຜູ້ຍິງບໍ່ຫວະ !

ຕໍາຫລວດແມ່ຍິງດຽວນີ້ ດົນຫນຶ່ງກໍາເທົ່າກັບຕໍາຫລວດຜູ້ຊາຍສະໄຫມອໍານາດເກົ່າປົກຄອງຕັ້ງ ៥ ຄົນເນື້ອຫຽບແລ້ວ "ຈະຕັ້ງໃຈບອກຄວາມຈິງອອກມາໃຫ້ນາງຮູ້ດີບໍ່ຫລືວ່າແນວໃດ"? ນາຍພອນຖາມຕົນເອງເຮັດສະເງິ້ສະງະບໍ່ຮູ້ຈັກຊິວ່າອັນໃດອອກມາ.

- ລຸງມີຫຍັງຂັດຂ້ອງ ?

- ເລື່ອງ... ອ່າ... ວຽກງານນີ້ແລ້ວ.

ນາຍພອນເວົ້າມາຮອດນີ້ ກໍປຸດກົ້ນ ນ້ຳ ລາຍ ຕົນ ເອງເອືອກໃຫຍ່, ສາຍຕາຂອງນາງຕໍາຫລວດທີ່ ນັ່ງປູ່ຂ້າງເພ່ງເລງໃສ່ໃບຫນ້າອັນຊີດຂາວຂອງເຂົາ, ໃບຫນ້າຂອງນາງເຕັມໄປດ້ວຍຄວາມສົນໃຈຕໍ່ຄວາມເວົ້າອອກໄປເນື້ອ ກໍ
ນີ້.

- ພວກກໍາມະກອນບໍ່ຖືກກັນບໍ ?

- ເອີ... ເລື່ອງນີ້ກໍແມ່ນ.

- ລຸງມີເລື່ອງຫຍັງອີກຊັ້ນບ່າ ?

- ຄັນລຸງເວົ້າໄປມັນຊິບໍ່ເປັນໂທດບໍ່ ?

- ຂັດຂ້ອງຫຍັງເວົ້າມາໂລດລຸງ ເຈົ້າຫນ້າທີ່ດຽວນີ້ເພິ່ນບໍ່ເອົາໂທດແກ່ບຸກຄົນທີ່ຮ່ວມມືດອກມີແຕ່ຊົມເຊີຍອຸ້ມຊູ, ໃຫ້ຄວາມຍຸຕິທຳທີ່ສຸດ.

ນາງຕຳຫລວດທັງເວົ້າທັງເຊື່ອນໂຕຫຍັບເຂົ້າຫາເລັກນ້ອຍດ້ວຍຄວາມສົນໃຈຕໍ່ບັນຫາລຸງພອນທີ່ຈະເວົ້າອອກມາໃຫ້ຟັງ, ຄວາມຈິງແລ້ວນາງເອງບໍ່ຕັ້ງໃຈຈະມາເສາະຊ່ວຖາມສືບເອົາເລື່ອງນີ້ນຳລຸງພອນ, ນາງພຽງແຕ່ມາປ້ຽມປາມຖາມຂ່າວເມຍຂອງລາວ ທີ່ບໍ່ສະບາຍມາຫລາຍນີ້ແລ້ວເຮັດໃຫ້ນາງເປັນຫ່ວງ, ເພາະຕອນນາງຖືກສົ່ງມາເຮັດວຽກງານທຳອິດນັ້ນ ເມຍລຸງພອນໄດ້ໃຫ້ຄວາມອຸປະກາລະບາງອັນບາງແນວໃນເວລາທີ່ນາງບໍ່ທ່ວງທັນ, ທັງໄດ້ເວົ້າສະພາບທົ່ວໄປພາຍໃນບ້ານທ່າເດື່ອໃຫ້ຟັງຈຶ່ງເຮັດໃຫ້ເອື້ອຍອ້າຍນ້ອງຕຳຫລວດທຸກຄົນ ມີຄວາມຮັກແພງລາວຄືກັບແມ່ຂອງຕົນ, ລຸງພອນໄດ້ເລົ່າເລື່ອງແຕ່ຕົ້ນໃຫ້ນາງຟັງດ້ວຍນ້ຳສຽງແຫບເຄືອກະຕຸກກະຕັກວ່າ:

- ຄືວ່າ... ມື້ເຊົ້ານີ້ນາຍທອງໂຈມກັບລຸງຫລັງຈາກເລີກຂົນຂອງຂຶ້ນລົງຢູ່ທ່າດ່ານແລ້ວ ກໍຊວນກັນກິນເຂົ້າຢູ່ຮ້ານເບື້ອງເຫນືອດ່ານ, ເມື່ອກິນເຂົ້າເສັດສິ້ນລົງແລ້ວນາຍທອງໂຈມໄດ້ຊັກຊວນໃຫ້ລຸງນີ້ຮ່ວມມືກັບມັນ, ການຮ່ວມມື

ກັບມັນແມ່ນຂົນຂອງຫນີພາສີ, ເພາະມີເຖົ້າແກ່ຢູ່ວຽງຈັນມາຕິດຕໍ່ກັບຫມໍທອງໂຈມໄວ້ແລ້ວ, ມື້ອື່ນເຊົ້າເຂົາຊິຂົນຂອງດັ່ງກ່າວມາທີ່ເຮືອນທອງໂຈມຕອນຄ່ຳມື້ອື່ນ ຖືກກັບເດືອນມືດພໍດີຈະຂົນຂອງລົງເຮືອຂ້າມໄປຝັ່ງໄທ, ເລື່ອງມັນກໍຫມົດເທົ່ານີ້ດອກ.

ລຸງພອນເລົ່າເລື່ອງໃຫ້ນາງຟັງຈົບລົງ ສາຍຕາອັນເລື່ອນລອຍ ຫລຽວໄປຟາກທາງເບື້ອງນັ້ນດ້ວຍຈິດໃຈບໍ່ຄ່ອຍຈະເປັນປົກກະຕິ, ນາງຄຳຫລວດຫົວຍິ້ມສົດໃສຕໍ່ການເລົ່າເລື່ອງຂອງລຸງພອນທີ່ຈະແຈ້ງລະອຽດດີ.

– ລຸງຕົກລົງໃຈເຮັດນຳລຸງທອງໂຈມແລ້ວບໍ ?

– ຍັງບໍ່ໄດ, ຫລານສາວ.

– ເປັນຫຍັງລຸງບໍ່ຕົກລົງ.

ນາຍພອນງວາກຫນ້າມາຫານາງ ດ້ວຍໃບຫນ້າຕື່ນເຕັ້ນ ທັງຄືດປາກເວົ້າຄວາມໃດຄວາມຫນຶ່ງທີ່ຍັງຄ້າງຄາຢູ່.

– ເປັນຫຍັງຫລານຈຶ່ງວ່າແນວນັ້ນ?

– ລຸງບອກໃຫ້ເຮົາຮູ້ກໍດີແລ້ວ, ມື້ອື່ນເຊົ້ານີ້ໃຫ້ລຸງໄປໃຫ້ຄຳຕອບລຸງທອງໂຈມໂລດວ່າ "ຕົກລົງເຮັດນຳ" ເລື່ອງຄວາມປອດໄພ ຫລານ ຮັບ ປະ ກັນ ສຳ ຫລັບ ລຸງ, ແຕ່ວ່າ

ເລື່ອງທັງຫມົດລຸງປ່າເວົ້າຫຍັງອອກມາເດັດຂາດ ໃຫ້ເຮັດກັບເຂົາດ້ວຍຄວາມເຕັມໃຈ ເມື່ອຮອດເວລາເອົາຂອງຂ້າມໃຫ້ລຸງພະຍາຍາມກົດຫນ່ວງເວລາໃຫ້ຊ້າລົງທີ່ສຸດ.

– ລຸງຊິບໍ່ເປັນອັນຕະລາຍບໍ?

– ບໍ່ເປັນຫຍັງລຸງ ເລື່ອງຕ່າງໆມັນຂຶ້ນກັບພວກຫລານປະຕິບັດງານ ພວກຫລານຕ້ອງການຫົວໂປ່ໃຫຍ່ຂອງມັນ.

– ຈ້າວ...ບໍ່ເປັນຫຍັງ.

ນາຍພອນສະຫວ່າງອົກສະຫວ່າງໃຈຂຶ້ນມາ ເຫມືອນດັ່ງມີຄົນຍົກກ້ອນຫີນໃຫຍ່ທັບປູ່ຫນ້າອົກອອກ, ນັບວ່າໂຊກດີທີ່ສຸດໃນການລະງັບແນວຄິດສະໄຫມປູ່ລະບອບເກົ່າ, ຖ້າຫາກບໍ່ຕັດສິນໃຈລົງໄປ ເຫດການໃນຕໍ່ຫນ້ານີ້ອາດຈະເຖິງແກ່ຊີວິດກໍ່ເປັນໄດ້, ເລື່ອງທັງຫມົດທີ່ຈະເອົາຂອງຂ້າມຟາກບໍ່ຫລາຍກໍຫນ້ອຍເຈົ້າຫນ້າທີ່ຕ້ອງຮູ້ຈັກ, "ໂອ່ຍຈັ່ງແມ່ນບຸນຫລາຍ" ລຸງພອນເວົ້າໃນໃຈ.

ຮຸ່ງເຊົ້າມື້ຕໍ່ມາ ຝົນຕົກລິນແຊະໆ ພ້ອມທັງມີລົມພັດຄ່ອຍໆ, ໃບພ້າວໃບຫມາກໄກວແກ່ວງນວຍນາຍ, ຕົ້ນໄມ້ທຸກຕົ້ນປູ່ບໍລິເວນນັ້ນກໍເຊັ່ນດຽວກັນ, ນາຍພອນນັ່ງເອື່ອຍພະນັກເຮືອນຫລຽວເບິ່ງສາຍຝົນ ແລະ ນ້ຳສາຍຄາເຮືອນ

ຕົກລົງລົງດິນເປັນສາຍບໍ່ຂາດ. ລາວຄຶດວ່າ ຖ້າຝົນເອື້ອນເລັກນ້ອຍ ຈະໄປຫານາຍທອງໃຈມ ຕາມທີ່ໄດ້ນັດຫມາຍເອົາໄວ້ແຕ່ວານນີ້, ແຕ່ແລ້ວກໍໄດ້ຍິນສຽງເອີ້ນຂອງນາຍທອງໃຈມຢູ່ກ້ອງລ່າງເຮືອນ ລາວເອົາຫົວສ່ອງເບິ່ງກ້ອງຕະລ່າງເຮືອນເຫັນນາຍທອງໃຈມນຸ່ງເສື້ອກັນຝົນ, ສອງມືກອດເອິກປືນສັ່ນທົດໆ, ຢູ່ບ່ອນສາຍຕາເນົ້າຕົກ.

– ພອນໂຕເຮັດຫຍັງຢູ່ຫວະ! ລົງມາຫາກູທະແມ້!

– ຊິລົງໄປດຽວນີ້ດອກ.

ນາຍພອນປັບແປ້ນລຸກຂຶ້ນ ແລະ ລົງຈາກເຮືອນໄປພົບກັບນາຍທອງໃຈມ ດ້ວຍທ່າທາງຍິ້ມແຍ້ມແຈ່ມໃສເຮັດສີຫນ້າເປັນປົກກະຕິທຳມະດາ, ນາຍທອງໃຈມແກ້ເສື້ອກັນຝົນອອກແລ້ວ ຈັບພົກອັນຫນຶ່ງອອກມາ ໂຍນຕົວລົງນັ່ງກັບພື້ນເຮືອນສອງມືແກ້ຂອດມັດຢ່າງຟ້າວຟັ່ງ

– ນີ້ແຫລະລາງວັນສ່ຽວ! ເບິ່ງເອົາອັນນີ້ແມ່ນເຮັດວຽກຂັ້ນຕົ້ນໄດ, ຖ້າສຳເລັດຮຽບຮ້ອຍຜູ້ລະແສນອີກຊັ້ນນ່າ.

ນາຍທອງໃຈມ ເວົ້າແລ້ວຫົວອອກມາດ້ວຍຄວາມຊົມຊື່ນຕໍ່ເງິນລາງວັນຂອງຕົນ ທີ່ໄດ້ມາແບບສ່ຽງໂຊກ ແລະສ່ຽງຕໍ່ຊີວິດໃນເບື້ອງຫນ້າ ສຳຫລັບນາຍພອນກໍກືນນ້ຳລາຍອຶກບັກໃຫຍ່ລົງຄໍ ຕາຫລຽວແນມເບິ່ງເງິນປອງຢູ່ແຜ

ນົບສີຟ້າ, ມີແຕ່ແຫລບໃບ ៥໐໐ ກີບຫລື ເອີ້ນກັນຕາມພາສາຊາວບ້ານວ່າ "ໃບບົ່ງບົນຈັກກະພັດ".

– ສອງແສນໃດ ສ່ງວພອນເຫື່ອນີ້ເຮົາໃຫ້ໂຕແສນກີບກ່ອນ ແຕ່ເຫື່ອຫນ້າຫລັງຈາກວຽກງານສຳເລັດເຮົາໃຫ້ຕື່ມຫ້າສິບພັນໃບຈຳນວນເງິນທັງຫມົດ ສີ່ແສນ ກີບ ທີ່ເຂົາຈ້າງເຮົາສອງຄົນ, ໂຕຕົກລົງເອົາບໍ?

– ຕົກລົງ ! ແລ້ວແຕ່ໂຕຊິໃຫ້ເຮົາ.

– ວ່າຊັ້ນແຕ່ແມ້ໂວ້ງ !

– ເລື່ອງວຽກງານເດໂຈນຊິເຮັດແນວໃດ ?

– ເຄື່ອງຂອງປູ່ເຮືອນເຮົາຫມົດແລ້ວ, ຕອນ ໑ ໂມງກາງຄືນເອົາຂອງລົງເຮືອທ່າຫນ້າເຮືອນເຮົາໂລດ.

– ເຄື່ອງຂອງຫລາຍປານໃດ ?

– ສອງລຳເຮືອ.

– ນາຍໃຫຍ່ສົ່ງເຄື່ອງຂອງມັນກໍມາບໍ ?

– ຕອນແລງນີ້ ບໍ່ມັນຊິມານອນປູ່ເຮືອນເຮົາຫັ້ນແຫລະ, ໂຕບໍ່ຕ້ອງຢ້ານບ່າແຜນເຮົາມັນເລີກພີເສດ, ຕອນແລງນີ້ບໍ່ຊິຊີຫນູໂຕຫນຶ່ງມາຂ້າແລ້ວເຊີບຕຳຫລວດມາກິນລ້ຽງເບືອເຫລົ້າໃຫ້ເມົາແລ້ວກໍຫມົດລົດ.

– ວິເສດດີໂວ້ງສ່ຽວ !

– ມັນບໍ່ແມ່ນຂອງຫລົ້ນໄດ.

ນາຍທອງໂຈມຖຸຍໂວຂຶ້ນກັບບາດ ພ້ອມທັງຈັບເງິນຍັດເຂົ້າຖົງສົ້ງສອງຖົງຈົນເປັນເອົາເປົ້າ, ທັງນາຍພອນແລະ ນາຍທອງໂຈມບໍ່ຈຳເປັນໄປເຣັດວຽກຢູ່ທ່າດ່ານໃນມື້ນີ້, ພວກເຂົາທັງສອງແຕ່ງຕົວໂກ້ຍ່າງເລາະນຳຕະຫລາດເຂົ້າຮ້ານນີ້ອອກໄປຖຸຍໂວຢູ່ຮ້ານນັ້ນຢູ່ບໍ່ເຊົາ, ຫມູ່ເພື່ອນເກີດສົງໄສຂຶ້ນມາ ແຕ່ທຸກຄົນທີ່ເປັນຫມູ່ກຳມະກອນທ່າເຮືອທຸກຄົນ, ຕ່າງກໍ່ຮູ້ແກ່ໃຈແລ້ວວ່າ, ທາງດຽວທີ່ສອງຄົນມີເງິນກໍ່ຄື ຂົນເຄື່ອງຫນີພາສີຫລືບໍ່ກໍ່ແບບອື່ນ. ເຈົ້າຫນ້າທີ່ຕຳຫລວດທຸກຄົນບໍ່ມີຜູ້ໃດສົນໃຈເລື່ອງໃດໝົດຕັ້ງຫນ້າເຮັດວຽກເປັນປົກກະຕິ, ຄືວ່າບໍ່ຮູ້ເລື່ອງການເຄື່ອນໄຫວຂອງພວກຄົນທັງສອງແຕ່ປະການໃດ; ແຕ່ຄວາມຄືບຫນ້າທີ່ນາຍພອນປະຕິບັດງານທຸກລົມຫາຍໃຈ, ໄດ້ລາຍງານໃຫ້ຕຳຫລວດຊາບທຸກລະຍະ.

ຄືນມື້ນັ້ນ, ທີ່ເຮືອນຂອງນາຍທອງໂຈມຊຶ່ງຕັ້ງຢູ່ແຄມນ້ຳຂອງ, ບໍລິເວນບ້ານມີຕົ້ນພ້າວ, ຕົ້ນຂາມ, ຕົ້ນຫມາກນ້ຳນົມ, ປູກຢາຍຢັງຢູ່ເຕັມເດີ່ນບ້ານ, ມື້ປົກກະຕິຕອນກາງຄືນຫລຽວເຂົ້າໄປບໍ່ເຫັນຮອດຫລັງເຮືອນ, ນາຍທອງໂຈມກັບຄອບຄົວຂອງເຂົາຈົມຢູ່ກັບຄວາມມືດຕະຫລອດມາ, ບໍ່

ລິເວນ ບ້ານ ອ້ອມດ້ວຍ ໜາມ ໝາກ ຈັບ, ປະຕູບ້ານມີປ້າຍຂຽນ "ລະວັງໝາຮ້າຍ!" ນີ້ນໍ, ບໍລິເວນບ້ານຂອງນາຍທອງໃຈມຮຸ່ງສະຫວ່າງໄປທົ່ວທຸກບ່ອນ, ດອກໄຟມີອອນຫລາຍດອກຕິດປາຍກ່ານຕົ້ນໄມ້, ຕັ້ງໂຕະເປັນສອງແຖວລຽນກັນຍາວໄປຕາມລຳນ້ຳ, ແຂກທີ່ຖືກເຊີນນັ້ງລຽນແຖວກັນເປັນລະບຽບຮຽບຮ້ອຍ; ບຸກຄົນທີ່ຖືກເຊີນມານອກຈາກເຈົ້າໜ້າທີ່ຕຳຫລວດແລ້ວ ກໍມີຄື: ປະທານບ້ານພ້ອມຄະນະ, ຫົວໜ້າກອງຫລອນ ແລະ ໝູ່ຮັກແພງຈຳນວນໜຶ່ງ, ນາຍທອງໃຈມໄດ້ສະເໜີບຸກຄົນຕ່າງໆໃຫ້ທຸກຄົນໄດ້ຮູ້ວ່າ:

– ທີ່ຢືນຢູ່ໃກ້ຂ້າພະເຈົ້ານຸ່ງເສື້ອກຸຍເຮັງ ສີ ຂາວ ນີ້, ແມ່ນເຖົ້າແກ່ນາປາມເພີ່ນປູ່ວຽງຈັນ ແຕ່ກ່ອນຂ້າພະເຈົ້າເຄີຍໄປຂັບລົດຮັບໃຊ້ເພີ່ນ; ນັ້ງຢູ່ຖັດໄປນັ້ນແມ່ນຫົວໜ້າດ່ານຂອງເຮົາພ້ອມດ້ວຍເອື້ອຍນ້ອງຕຳຫລວດ, ເບື້ອງທາງແມ່ນຄະນະປະທານບ້ານແລະຫົວໜ້າກອງຫລອນ.

ສຽງຕົບມືຂອງແຂກຜູ້ຖືກເຊີນໄປຮ່ວມດັງຟົດສະໜັ່ນທົ່ວບໍລິເວນບ້ານຂອງນາຍທອງໃຈມ, ເຖົ້າແກ່ນາແຕ່ວຽງໂຄ້ງຫົວຄຳນັບຜູ້ນັ້ນຜູ້ນີ້ ຈາກນັ້ນກໍຈັບເອົາປາຄອນຊູເລັດປາສາມຫ້າງດອອກມາປາຍ, ແຖມດ້ວຍເຫລົ້າຕ່າງປະ

ເຫດຊັ້ນດີປ່ຽມ. ນາຍພອນນັ່ງຢູ່ເບື້ອງຫລັງນາງຕຳຫຼວດ ຄືນນັ້ນເຂົາຊຶມໃສ່ຫູຄ່ອຍໆວ່າ:

- ນີ້ແຫລະນາງ, ຕົວການໃຫຍ່ຂົນເຄື່ອງຂອງມີຄ່າ ຈາກລາວໄປຝັ່ງໄທ, ເຂົາຮັບເອົາຂອງທຸກໆຄືນມາຂ້າມ ເຂົາຢຶດອາຊີບນີ້ມາ, ພາຍຫລັງປະເທດຂອງເຮົາປົດປ່ອຍ ທົ່ວປະເທດ.
- ລຸງແນ່ນອນໃຈບໍ? ຜູ້ກ່ຽວເປັນຕົວການໃຫຍ່ສຳຄັນ.
- ແນ່ນອນນາງ.
- ເຄື່ອງຂອງ...?
- ເຄື່ອງຂົນຍ້າຍອອກຈາກເຮືອນໄປໄວ້ອຸ່ມໄມ້ທ່ານ້ຳ.

ງານກິນລ້ຽງເລີ້ມຂຶ້ນ, ດ້ວຍການເຊີນຂອງນາຍທອງໃຈມ. ອາຫານທຸກອັນເກືອບວ່າຈະເປັນອາຫານຈີນຫມົດ ໃນຈຳນວນ ໕ ຢ່າງນັ້ນມີອາຫານລາວພຽງເບື້ອງດຽວຄື ປີ້ງປາ. ສຽງເພງຈາກເທັບອັດສຽງ ດັງຄ່ອຍໆ ເປັນສຽງ ເພງຂອງບົວເງິນຊາພູວົງ ເຮັດໃຫ້ບັນຍາກາດງານກິນ ລ້ຽງມີຄວາມເບືອກເບັນ, ທ່າມ ກາງ ສາຍ ລົມ ແຄມຂອງ ພັດວູ່ໆມາເປັນບາດ, ຄືນນັ້ນເດືອນດັບ, ຄວາມມືດປົກຄຸມ ໄປ ທົ່ວ ລຳ ນ້ຳ ຂອງ ຊຶ່ງເປັນໂອກາດໃຫ້ພວກມິດສາຊີບ ເຄື່ອນໄຫວໄດ້ສະບາຍ, ງານກິນລ້ຽງດຳເນີນໄປດ້ວຍບັນຍາ

ກາດຶກດັກສົມຄວນ. ນາຍໂຈນ ແລະ ເຖົ້າແກ່ຄົນນັ້ນ, ຖອກເຫເຫລົ້າໃສ່ຈອກ ປາຍ ຢ່າງ ລຽນຕິດ ສະເພາະ ຕຳຫລວດ ແລະ ຫົວຫນ້າກອງຫລອນ, ນາຍທອງໂຈນເຮັດຕາມແຜນ ການ ທຸກ ຢ່າງ. ຕຳ ຫລວດ ທຸກຄົນດື່ມເຫລົ້າຈອກແລ້ວຈອກຕໍ່ເຮັດຕີເມົາແປ້ໄປທຸກຄົນ ຈາກນັ້ນກໍເລີກລາພາຈາກກັນ.

ບໍລິເວນບ້ານນາຍທອງໂຈນ ປ່ຽນຈາກແຈ້ງສະຫວ່າງມາເປັນຄວາມມືດມິດ. ພາຍໃນຄວາມມືດນັ້ນກໍຍັງມີສານຊີວິດເຄື່ອນໄຫວຕຽມວຽກງານ ເພື່ອ ລໍ ຖ້າ ເວລາ ເກີດ ສະຫງັດມາເຖິງ, ພວກເຂົາໃຊ້ໄຟສາຍນ້ອຍທີ່ນົວມື, ເປັນເຄື່ອງຊີ້ບອກທາງແຈ້ງສະຫວ່າງ ເຮືອສອງລຳນັດລອຍຢູ່ທ່ານ້ຳງຽບສະຫງັດນ້ຳຂອງເປັນຄື້ນເລັກນ້ອຍ ບາງເທື່ອເຮັດໃຫ້ແຄມເຮືອສອງລຳກະທົບກັນດັງຕຶກຕັກໆ.

ໃນທ່າມກາງຄ່ຳຄືນ ອັນແສນງຽບສະຫງັດ ເປົ່າປ່ຽວຂອງລາຕີເດືອນມືດນີ້, ສາຍຕາຂອງເຈົ້າຫນ້າທີ່ທຸກຄົນຈ້ອງມອງແຫກຜ່າຄວາມມືດສຸມໃສ່ເຮືອນ ແລະ ທ່ານ້ຳບ່ອນພວກມິດສາຊີບພວມລົງມືຂົນເຄື່ອງລົງເຮືອ. ນາຍທອງໂຈນ ແລະ ເຖົ້າແກ່ເຈັກຄົນນັ້ນເຊື່ອໝັ້ນຢ່າງຕາຍໃຈວ່າ ວຽກງານຂອງເຂົາຕ້ອງສຳເລັດ ບໍ່ມີໃຜຈະສາມາດ

ຮູ້ຄວາມເລິກລັບຂອງເຂົາໄດ້ເພາະເຈົ້າຫນ້າທີ່ທຸກຄົນເມົາແປ້ເກືອບຊິຄານໄປ, ບາງຕຳຫລວດບາງຄົນນັ້ນກໍເມົາສົມຄວນ, ຍ້ອນການເຊື່ອຫມັ້ນຕົນເອງຢ່າງຕາຍໃຈແນວນັ້ນທັງນາຍທອງໃຈນແລະເຖົ້າແກ່ເຈັກຈຶ່ງປະຕິບັດງານໄດ້ຕາມສະບາຍໃຈ.ໄຟສາຍນ້ອຍຖືກບີບອອກເປັນແສງເບືອງທາງມັນແນງ. ຖ້າຫລຽວໄປແຕ່ໄກຈະເຫັນຄືແສງແມງແມງຫິ່ງຫ້ອຍ; ນາຍພອນທັງເຮັດວຽກ ແລະ ທັງຮູ້ແກ່ໃຈແລ້ວວ່າໃນອ້ອມຂ້າງເຮືອນ ແລະ ທ່ານ້ຳ, ຂອງນາຍທອງໃຈນ ຊຶ່ງຈົມຢູ່ໃນຄວາມືດມິດນັ້ນ. ເຈົ້າ ຫນ້າ ທີ່ ຕຳຫລວດພວມຄົບຄານ, ຜົກຈອບ, ລາງເທື່ອເຂົາຮູ້ສຶກຂົນຫນາວລຸກເບືອບຍານ, ເຖົ້າແກ່ຄົນນັ້ນມາຕໍ່ວ່າເຂົາຫລາຍເທື່ອ ໃຫ້ຟ້າວຂົນເຄື່ອງລົງເຮືອໄວ.

- ບັກຫ່ານີ້ ມຶງບໍ່ຢ້ານບໍ? ຟ້າວຂົນເຄື່ອງລົງເຮືອດີ.
- ພະລາວມື້ນບ່າ...ເຖົ້າແກ່.
- ຕາມຶງບໍ່ເບິ່ງບໍ?
- ມັນບໍ່ເຫັນຮຸ່ງເວີຍ!
- ຢ່າໃຊ້ສຽງດັງເກີນໄປ.

ນາຍພອນຢືນໂຕ້ຖຽງກັບເຖົ້າແກ່ຄົນນັ້ນ ທັງມືທຳທ່າລູບຫົວເຂົາ ຊິຣູຊິຣ່າ ສະແດງຄວາມເຈັບປວດ, ເຂົາ

ນັ່ງຢູ່ໃນທ່າມກາງຄວາມມືດ ໂດຍເຖົ້າແກ່ບໍ່ຮູ້ເລື່ອງຮູ້ລາວ ຫຍັງ, ນາຍທອງໂຈມເອົາເຄື່ອງມາປົງໄວ້ເຮືອແລ້ວ ຟ້າວ ແລ່ນມາຫາເຂົາພ້ອມທັງເວົ້າແດກໃສ່ວ່າ :

– ພອນໂດກໍເຮັດວຽກໃຫ້ສົມເງິນຈ້າງແດ່ດີ.

– ຈີໃຫ້ເຮົາເຮັດຫຍັງອີກ ?

– ໂປ້ວ ! ຕາແດກກໍເບິ່ງເອົາດີ.

– ເລື່ອງນັ້ນມັນເລື່ອງຫນຶ່ງ ແຕ່ເລື່ອງນີ້ມັນອັນຕະ ລາຍ.

ໃນຂະນະທີ່ສອງສະຫາຍພວມຖົກຖຽງກັນຢູ່ນັ້ນ, ເຈົ້າ ຫນ້າທີ່ໄດ້ຄືບເຂົ້າມາເທື່ອກ້າວທ່າມກາງຄວາມມືດ, ລົມ ພັດວື້ງຢູ່ບໍ່ເຊົາ, ເຈົ້າຫນ້າທີ່ປາຍກໍາລັງລ້ອມແຕ່ບ້ານຈົນ ເຖິງຕີນທ່ານ້ຳ, ເຖົ້າແກ່ດົນນັ້ນປີນຖຸມເຊີງເບິ່ງສອງສະ ຫາຍ ນາຍທອງໂຈມ ແລະ ນາຍພອນຂົນເຄື່ອງລົງເຮືອ ແລ້ວຈັດແຈງໃຫ້ມັນຮຽບຮ້ອຍ. ຈາກນັ້ນເຖົ້າແກ່ທີ່ປີນຄ້າ ແອວ, ຈິກເອົາໄຟສາຍຂະຫນາດໃຫຍ່ຍາວເກືອບສອກນຶ່ງ ເປັນແສງສີຂຽວເລັງໄປຝັ່ງໄທທັນທີ, ເຂົາບີບສັນຍານເຖິງ ມື ເທື່ອ, ນາຍພອນເຫັນແນວນັ້ນເຂົາດີກສະເງີ້ທັນທີ, ທັງ ຫລຽວຕາມແສງໄຟສາຍໄປຝັ່ງໄທ.

– ມັນເຮັດຫຍັງຫວະ ທອງໂຈມ ?

– ມຶງບໍ່ຮູ້ຫວະ, ນີ້ແຫລະນັກເລງສອງຝັ່ງຂອງສັນຍານໃຫ້ພວກນັ້ນຕຽມຮັບເອົາເຄື່ອງ, ຖ້ານັກເລງພວກນັ້ນຕຽມພ້ອມແລ້ວມັນກໍສັນຍານເປັນໄຟສີຂຽວຕອບມາ, ບໍ່ເຊື່ອໃຫ້ຊອມເບິງ.

ນາຍທອງໂຈມເວົ້າບໍ່ພໍບຶດ ນາຍພອນຫລຽວແນມໄປຝັ່ງເບື້ອງນັ້ນກໍມີແສງສີຂຽວສັນຍານມາບໆ. ສາມບາດ, ຕໍ່ມາທີ່ທ່ານ້ຳບ່ອນເຂົາຢູ່, ມີຊາຍສະກັນສອງຄົນທ່າທາງນັກເລງຮ່າງກາຍລ້ຳສັນກຳຍຳຍ່າງກຶກໆ ລົງມາທີ່ເຮືອ, ເຂົາຕົກສະເງີ້ທັນທີ, ເຂົາພະຍາມເບິ່ງຫນ້າຊາຍທັງສອງໃຫ້ຄັກແນ່ແຕ່ກໍບໍ່ສາມາດເຫັນໄດ້.

– ບັກພອນ ກູນຶກວ່າມຶງນັກເລງຊັ້ນປຽມທີ່ແທ້ມຶງກໍຄົນຂີ້ຂ້າຕາຂາວ.

– ຢ່າເວົ້າຊັ້ນຕິສ່ຽວ!

– ມຶງຫາກິນນຳພວກກູບໍ່ໄດ້ດອກ.

ນາຍພອນບໍ່ຕອບ, ເຂົາຄຶດເຖິງເຈົ້າຫນ້າທີ່ຕຳຫລວດກັບກອງຫລອນ, "ເປັນຫຍັງຈຶ່ງມາຊ້າແທ້?" ເຂົາຖາມຕົວເອງທຳທ່າແກ້ເຊືອກເຮືອຊ້າໆ. ບັກສອງຄົນນັ້ນໃຊ້ຕີນທີບເຮືອຕຶກໆເພື່ອເປັນການເຕືອນໃຫ້ເຂົາເຮັດໄວ, ໃນຂະນະດຽວກັນນັ້ນເອງທີ່ບໍລິເວນທ່ານ້ຳ ແລະ ບ່ອນເຖົ້າແກ່

ປືນຄຸມເຊີງຢູ່ນັ້ນ, ປະກົດມີເຈົ້າໜ້າທີ່ຕຳຫລວດ, ຫລາຍຄົນຢືນເຈືອກເພືອກຢູ່ເດັ່ນ ເຂົາໂດດເຂົ້າພຸ່ມໄມ້ ຢູ່ ເບື້ອງເຫນືອທັນທີແລ້ວຫມູບເບິ່ງເຫດການບໍ່ເຫນັງບໍ່ຕີງ.

– ບັກໃດຫັກຫລັງກູເວີ້ຍ!

– ປຸດໂດ ?

– ຕົວໃຜຕົວມັນ.

ສຽງນາຍໂຈມຮ້ອງຂຶ້ນຢ່າງແຮງພຽງແຕ່ພວກເຂົາຈະເຄື່ອນໄຫວຕົວອອກໄປຈາກທີ່ນັ້ນ,ກໍຖືກເຈົ້າໜ້າທີ່ຄຸມຕົວໄວ້ທັນທີ, ເຂົາເຫັນຕຳຫລວດເອົາກັບມືໃສ່ເຖົ້າແກ່, ທັງນາຍທອງໂຈມ ແລະ ຊາຍເລີກລັບສອງຄົນໄດ້ຢ່າງໄວວາ.

– ຮື້... ຫມົດກັນພຽງເທົ່ານີ້.

– ນາຍພອນຫາຍໃຈໂຫຍ່ອັດລົມເຂົ້າ ປອດ ນັ່ງ ເບິ່ງຕຳຫລວດເອົາຕົວມະນຸດປີ້ອນແຜ່ນດິນຍ່າງຂຶ້ນທ່ານ້ຳໄປ.

# ປ້າຍສີແດງ

* ລົດເຊແອນເຊ, ແລ່ນມາແຕ່ເຫນືອບ້ານໄວສົມຄວນ ຂີ້ຝຸ່ນກຸ້ມເປັນສາຍຕາມທາງ, ນ້ຳຫມອກເດືອນຍີ່ກົ້ວໄປທົ່ວທົ່ງນາ ຫລຽວເບິ່ງກົກໄມ້ກໍເປັນພຸ່ມພູ່ ເຮົາຫລຽວແນມເບິ່ງລົດດ້ວຍຄວາມສົງໄສ ພໍຮອດໂຮງຮຽນທາງແຍກເຂົ້າບ້ານກ້ຳແຄມງື່ມ ລົດຜ່ອນຄວາມໄວລ້ຽວເຂົ້າໄປຕາມເສັ້ນທາງດ້ວຍຄວາມໄວສະຫມ່ຳສະເຫມີເຮົາທັງສາວບາດຕີນໄວ ທັງຄຶດແປກໃຈ ເປັນຫຍັງລົດເຊແອນເຊທະຫານບ້ານເກີບຈຶ່ງມາບ້ານແຕ່ເຊົ້າແທ້?.

ງົວເປັນຫມູ່ ເປັນຝູງເລີ່ມທະຍອຍກັນອອກສູ່ທົ່ງນາ ບາງຕົວກະໂດດໂລດເຕັ້ນ ສະແດງຄວາມດີໃຈທີ່ເຈົ້າຂອງແກ້ເຊືອກຜູກຄໍ ປ່ອຍອອກມາຫາກິນ ຢ່າງມີອິດສະຫລະ,

ນ້ຳໜອກຄ້າງຕາມໃບຫຍ້າຂ່ວນ ເຮົາຍ່າງໄປ ຈົນເປັນ ຄອງ ເຮົາປົດຂ້ອງຈາກບ່າເບື້ອງຂວາ ປ່ຽນມາຫາຍເບື້ອງ ຊ້າຍ ຈິດໃຈເປັນວີ້ງວອນໆ ທັງໜາວຈົນຕົວສັ່ນ ພໍຍ່າງ ເຂົ້າປະຕູຮົ້ວບ້ານຂົນໜາວລຸກເບືອບຍາບຂຶ້ນກັບບາດ,ທະ ຫານບຸ່ງຊຸດສີຂຽວປືນຈັ່ງຈະຂວາງໜ້າ ພ້ອມທັງສາກ ລູກປືນເຂົ້າລຳກ້ອງ. ເຮົາເງີຍໜ້າເບິງທະຫານ ພໍດີໄປ ປະສານກັບສາຍຕາຂອງມັນ ປານເສືອພວມຈອບກິນງົວ ນ້ອຍຢູ່ປ່າແຄມທົ່ງນາ, ສຽງແອ່ວດັງລົງມາແຕ່ເທິງເຮືອນ ໄດ້ຍິນຢ່າງແຈ່ມແຈ້ງ.

– ຢາກໄດ້ຫຍັງໄປພ້ອມທ້ອນເອົາໃຫ້ໝົດ!

ບໍ່ມີສຽງຕອບຈາກອີກຝ່າຍໜຶ່ງ ເຮົາບໍ່ສົນໃຈກັບທະ ຫານຍາມປະຕູຟ້າວຍ່າງຂຶ້ນໄປເທິງເຮືອນ ແຕ່ກໍຕ້ອງຕົກ ສະເງີ້ກັບບາດ ພາບທີ່ເຫັນຢູ່ຕໍ່ໜ້າມັນເປັນພາບຊຶ່ງ ເຮົາບໍ່ເຄີຍເຫັນມາກ່ອນ, ທະຫານ ບຸ່ງເຄື່ອງລາຍຖືປືນຈໍ້ ຫລັງຂອງພໍ່ເຮົາ ຈົນເໜັງຕີງໄປໃສບໍ່ໄດ້, ສ່ວນແມ່ພວມ ຈັດແຈງເຄື່ອງຂອງມາວາງໄວ້ຕໍ່ໜ້າພໍ່ ໃບໜ້າຊີດຂາວ ທັງສັ່ນເຊັນ ເຮົາຍ່າງຂຶ້ນຂັ້ນໄດເຮືອນຊຶ່ງເຫລືອພຽງສອງ ຂັ້ນຊ້າໆ ທົ່ວຕົນຕົວມັນຮ້ອນວູບວາບໄປໝົດ. ເຮົາຕັດ ສິນໃຈເດັດດ່ຽວປົດຂ້ອງປາອອກຈາກບ່າປົງໄວ້ ຍ່າງກ້າວ

ເຂົ້າໄປຫາທະຫານຫມໍນັ້ນຊຶ່ງຍັງບໍ່ທັນເຫັນເຮົາເທື່ອ.

– ແມ່ນເລື່ອງຫຍັງເກາະ ຄືນາໂພດແທ້!

ທະຫານຫມໍນັ້ນຫັນຫລັງ ຫລຽວເບິ່ງເຮົາຢ່າງວ່ອງໄວ. ພ້ອມກັບສາກປືນເຂົ້າລຳກ້ອງຖຽມບິງທັນທີ.

– ຢ່າ...ຢ່າບິງ ລູກຂອງຂະນ້ອຍ.

ສຽງເວົ້າເຕັ້ນໄປດ້ວຍຄວາມຢ້ານກົວສັ່ນເຊັນໄປທົ່ວຕົນຕົວ ທະຫານຫມໍນັ້ນຫລຽວແນມເບິ່ງຫນ້າເຮົາບໍ່ພັບ ເຮົາກໍທະນົງຕົວບໍ່ປອກບໍ່ຍອມຫລົບສາຍຕາຫນີຈາກມັນເດັດຂາດ ທົ່ວບໍລິເວນເຮືອນມືດງຽບໄປຫມົດ ອາກາດຫນາວຕໍ່ຫນາວເຫື່ອຂອງເຮົາໄຫລຊຶມອອກທົ່ວຕົນຕົວ.

– ລູກອຸ່ນເຮືອນມາທັນເຫັນພໍ່ ພໍດີ.

– ເພິ່ນມາຈັບພໍ່ເລື່ອງຫຍັງ?

– ຖາມໄປກໍບໍ່ມີປະໂຫຍດດອກລູກ.

ພໍ່ທັງແກ່ວງຫົວທັງເວົ້າອອກມາ ດ້ວຍອາການສັ່ນເຄືອສາຍຕາຫລຽວອອກໄປທີ່ເດີ່ນບ້ານ ເຮົາຫລຽວແນມຕາມຈຸດພໍ່ຫລຽວໄປເຫັນທະຫານຄຸມຕົວຊາວບ້ານ ສອງຕໍ່ຫນຶ່ງຢ່າງມາປຸດປືນຢູ່ເດີ່ນ ແຕ່ລະຄົນຫລຽວແນມຂຶ້ນມາເທິງເຮືອນເປັນຈຸດດຽວກັນ. ເຮົານັບຜູ້ທີ່ຖືກຈັບຢູ່ໃນໃຈມີທັງຫມົດ ໙ ຄົນ ໑໐ ກັບພໍ່ຂອງເຮົາຫລັງຈາກນັ້ນທະ

ຫານຜູ້ຄຸມພໍ່ກໍບອກໃຫ້ລົງເຮືອນໄປສົມທົບກັບຫມູ່...

ສຽງລົດເຊແອນເຊ ດັງຂຶ້ນປຸ່ກ້ຳ ທ່ານ້ຳ ກ້ອງ ໄປ ທົ່ວບ້ານ, ຫົວໃຈຂອງເຮົາແທບຈະຂາດລອຍໄປຕາມສຽງລົດ ພໍ່ຂອງເຮົາໄດ້ຈາກໄປຈາກໄປ ໂດຍບໍ່ຮູ້ວ່າແມ່ນຫຍັງດ້ວຍເຫດຜົນອັນໃດ?ແລະມື້ໃດຈະໄດ້ກັບຄືນບ້ານ,ສຽງສົນທະນາກັນຂອງຊາວບ້ານເລີ້ມດັງຂຶ້ນຊົວແຊວ, ສ່ວນລູກເມຍຂອງພວກທີ່ຖືກຈັບຕົວໄປນັ້ນ ບໍ່ປາກບໍ່ເວົ້າທຸກຄົນຫນ້າຂາວຊີດໄປຫມົດ, ແມ່ຂອງເຮົາໄດ້ແຕ່ຈັບເອົາປາກາພະນາດົມປູ່ບໍ່ເຊົາ. ນ້ຳຕາຂອງເພິ່ນຫລ່ເປົ້າອອກມາ...

– ຄືຊິບໍ່ເປັນຫຍັງດໍ້ ບໍ່ແມ່ນຈັບແຕ່ລະເພາະບ້ານແຈ້ງບ້ານອື່ນກໍຈັບຄືກັນຕົກມາປີ ໑໙໖໔ ນີ້ອັນໃດກໍຍາກເສິກເສືອກໍຊິຮ້າຍແຮງຂຶ້ນເລື້ອຍໆ.

– ລຸງກວນບ້ານຮູ້ບໍວ່າເພິ່ນຈັບໄປເລື້ອງໃດ ?

– ລຸງກໍບໍ່ຮູ້ໃດ ອຸ່ນເຮືອນ. ແຕ່ສົງໄສເລື້ອງການເມືອງນີ້ແຫລະ.

ເຮົາຫວນຄຶດເຖິງເມື່ອສອງເດືອນກ່ອນນັ້ນ ຫມົດທຸກຄົນທີ່ຖືກຈັບໄປລ້ວນແລ້ວແຕ່ເຮັດໄຮ່ບ່ອນດຽວກັນ, ທັງໄດ້ເຂົ້າຫລາຍກວ່າຊາວບ້ານ ຟ້າຝົນກໍດີການເຮັດວຽກຫມົດທຸກຄົນສາມັກຄີກັນເຮັດ. ຜົນຮັບຈຶ່ງໄດ້ປາງເຕັມສ່ວນ.

– ປ່າພາກັນຊຸມແຊວກັນຫລາຍນັບບໍ່ງາມ.

ກອບບ້ານເວົ້າແລ້ວ ກໍຍ່າງອອກໄປກ້າວເບື້ອງ ທ່າ ນ້ຳ ຢ່າງບໍ່ຫລຽວຫລັງ. ປ່ອຍໃຫ້ທຸກຄົນແນມນຳຫລັງບໍ່ປາກບໍ່ຕິງ.

– ພວກແມ່ປ້າແມ່ນາຍບໍ່ຮູ້ວ່າຊິໄປເພິ່ງຜູ້ໃດ? ກອບບ້ານກໍເອົາຕົວລອດໄປອຸ່ນເຮືອນເຮັ້ຍ! ມີແຕ່ຫລານບໍ່ແຫຼະ ພວກປ້າຂໍມອບໃຫ້ຫລານຕິດຕາມ.

– ບໍ່ເປັນຫຍັງ ເຮົາຊິຕິດຕາມໄປບ້ານເກີນຈົນສຸດຄວາມສາມາດ.

ແຕ່ມື້ນັ້ນເປັນຕົ້ນມາ, ຊາວບ້ານທຸກຄົນຕົກຢູ່ໃນຄວາມຢ້ານກົວຂົນຫົວພອງ. ບັນດາຫນຸ່ມສາວເຄີຍມ່ວນຊື່ນເບີກບານລົງຂ່ວງເຂັນຝ້າຍ ປັ່ນຫລອດກໍປຸດສະງັດລົງບໍ່ມີໃຜກ້າລົງເຮືອນຊານໄດ້ ຕົກກາງຄືນມາໝາກໍປະກົດຫອນເຫົ່າບໍ່ຂາດລະຍະ ການໄປມາຫາສູ່ຫາກິນຖືກຈຳກັດໃຫ້ສັ້ນລົງ ປະຊາຊົນພາຍແອບເຂົ້າບັ້ງນ້ຳໄປຫາປູຫາປາກໍບໍ່ໄດ້ໂດຍສະເພາະຄອບຄົວທີ່ຖືກຈັບໄປຂັງຄຸກຢູ່ບ້ານເກີນແລະຄອບຄົວຜູ້ມີລູກໄປເປັນອິດສະຫລະຮ່ວມຂະບວນຕໍ່ສູ້ກູ້ຊາດຍິ່ງຖືກຈຳກັດຮັດແຄບ ເຫນັງຕິງບໍ່ໄດ້ ເລີຍ. ມັນເຫມືອນກອງໄຟໃຫຍ່ສຸມໄຫມ້ເຜົາຜານໄປທົ່ວທຸກແຫ່ງໃນ

ເຂດບ້ານ ແລະ ບ່ອນອື່ນໆ...

ມື້ຫນຶ່ງເຮົາໄປເຖິງຄ້າຍກອງບັນຊາການທະຫານເຂດ ຍ່ອຍບ້ານເກີນແຕ່ເຊົ້າ ຕາເວັນຍັງບໍ່ພົ້ນສັນພູເຂົາຄວາຍ. ເຮົານັ່ງກິນກາເຟຢູ່ຮ້ານຕໍ່ຫນ້າປະຕູເຂົ້າ ຄ້າຍ ສາຍຕາ ຫລຽວແນມໄປທາງໃນ ຕາງຄອຍເວລາໃຫ້ເຖິງໂມງເຂົ້າ ການ ພວກຜູ້ເຖົ້າຜູ້ແກ່ໄປຈັງຫັນກັບມາແຕ່ວັດກໍພາກັນ ແວະກິນກາເຟແລ້ວຈຶ່ງພາກັນກັບ. ພວກຜູ້ເຖົ້າຜູ້ແກ່ໄດ້ ນໍາເອົາບັນຫາ ທີ່ທະຫານ ໄປຈັບເອົາປະຊາຊົນຕາມ ບ້ານ ຕ່າງໆມາຂັງ. ພໍ່ຕູ້ຜູ້ຫນຶ່ງໄດ້ອອກຄວາມເຫັນກົງໄປກົງ ມາວ່າ: "ພວກທະຫານນີ້ກະຈັ່ງແມ່ນເຮັດໂພດເຮັດເຫລືອ ຄົນໝົດເມືອງໄປຈັບເອົາມາຂັງໄວ້ບ່ອນດຽວກັນ ບໍ່ຮູ້ວ່າຈັບ ມາເຮັດຫຍັງເຮັດບາບເຮັດເວນເອົາແທ້ໆ" ອີກພໍ່ຕູ້ຫນຶ່ງ ຕອບຂຶ້ນໄດ້ຫງຶບຫລານຊາຍທີ່ເປັນຕໍາຫລວດວ່າ, ພວກ ທີ່ຈັບມານີ້ທັງໝົດມີ ໑໐໐ ກວ່າຄົນ. ລ້ວນແຕ່ຜູ້ໄດ້ເຂົ້າ ຫລາຍຫາວ່າອິດສະຫລະມາເຮັດຊ່ວຍ. ຫາວ່າຫລົບການ ເມືອງເລີຍຈັບເຂົາເຈົ້າມາສອບສວນ".

ເຮົາຫລຽວແນມເບິ່ງຫນ້າພໍ່ຕູ້ສອງຄົນ ສົນທະນາກັນ ຫນ້ອຍຫນຶ່ງ, ທັງສອງກໍສົນທະນາກັນຕໍ່ທັງຍົກຈອກກາ ເຟຂຶ້ນດື່ມ "ເຮັດແນວນັ້ນບໍ່ຖືກແລ້ວເນາະ ຫລື ເຖົ້າວ່າ

ແນວໃດ?" "ນັ້ນກໍຖືກລະດີ ສະໄຫມຄົນຕົນໃຫຍ່ ສະໄຫມ ຕົນຊ້າງຢຽບປາກນົກ. ຖ້າເອົາຄວາມຍຸຕິທຳມາເວົ້ານັ້ນ ກໍບໍ່ຖືກແທ້ ຂົມເຫັງປະຊາຊົນ ພວກນີ້ເຮົາວ່າໄປຕີເສິກບໍ່ ລອດຄືນມາຈັກຄົນດອກ".

ສອງພໍ່ຕູ້ສົນທະນາກັນໄປດົນເຕີບ ຕາເວັນພົ້ນສັນພູ ເຂົາຄວາຍສ່ອງແສງລົງມາ ອາບທົ່ວບໍລິເວນຄ້າຍເຫລືອງ ໄປຫມົດ, ປະຊາຊົນເລີ່ມເຂົ້າມາກິນກາເຟໃນຮ້ານຫນາ ແຫນ້ນເລື້ອຍໆ ລົດໂດຍສານແລ່ນອອກຈາກບ້ານເກີນ ມຸ່ງຫນ້າສູ່ວຽງຈັນຫລາຍຄັນແລ້ວ ປະຊາຊົນເລີ່ມທະຍອຍ ກັນເຂົ້າມາອໍຢູ່ປະຕູຄ້າຍຢ່າງຫລວງຫລາຍ ໃບຫນ້າທຸກ ຄົນເຕັມໄປດ້ວຍຄວາມຫມົ່ນຫມອງ ສະແດງເຖິງຄວາມ ເປັນຫ່ວງລູກຜົວ ບາງຄົນຫອບລູກນ້ອຍມາບຳ ສຽງສົນ ທະນາກັນຂອງພໍ່ຕູ້ທັງສອງກໍຫມົດໄປ ທຸກຄົນໃຊ້ສາຍ ຕາຫລຽວແນມໄປປາກປະຕູເຂົ້າຄ້າຍ ທະຫານສາມຄົນ ຈັບປືນຈ້ຕຽມທຸກລົມຫາຍໃຈ ເຮົາລຸກອອກຈາກຕັ່ງຢ່າງ ຜ່າອ້າຍເອື້ອຍນ້ອງທຸກຄົນເຂົ້າໄປຫາທະຫານຍາມຜູ້ຢືນຢູ່ ກາງຫມູ່ ເພື່ອຂໍອະນຸຍາດເຂົ້າໄປຢ້ຽມຢາມພໍ່ ແລະ ເພື່ອ ເປັນການເປີດທາງໃຫ້ປະຊາຊົນເຂົ້າໄປນຳອີກ.

ເຮົາຖືກປະຕິເສດຢ່າງແຂງຂັນຈາກທະຫານຍາມທັງ

ສາມຄົນ. ເຮົາກັບຄືນມາປຶກສາກັບອ້າຍເອື້ອຍນ້ອງທີ່ຢູ່ໃນຊະຕາກຳດຽວກັນ ທຸກຄົນເຫັນດີໄປຫາທ່ານເຈົ້າເມືອງອັນເປັນທີ່ເພິ່ງດ່ານສຸດທ້າຍ ມັນເຫມືອນຟ້າຜ່າລົງຫົວໃຈຂອງທຸກໆຄົນ ຄວາມຂໍຮ້ອງຂອງປະຊາຊົນຖືກເຈົ້າເມືອງປະຕິເສດຈົນຫມົດກ້ຽງ "ເລື່ອງຂອງທະຫານບໍ່ແມ່ນເລື່ອງຂອງເຈົ້າເມືອງ" ໃນຫນ້າຂອງທຸກຄົນຈືດຊີດລົງທັນທີ ບໍ່ມີທາງໃດເລືອກອີກ ນອກຈາກກັບຄືນບ້ານຂອງໃຜມັນເພື່ອລໍຖ້າເອົາຄວາມຍຸຕິທຳຈາກປາຍປືນເທົ່ານັ້ນ...

ເດືອນຫນຶ່ງຜ່ານໄປ ວີແວວໃນການກັບມາຫລືຖືກປ່ອຍຕົວຍັງບໍ່ມີຫົນທາງໃດ ພໍຈະເປັນໄປໄດ້ ຄວາມຫວັງທຸກຢ່າງໄດ້ເລື່ອນລອຍໄປໄກເລື້ອຍໆ. ກວນບ້ານຕາແສງກໍຫມົດຫົນທາງຊ່ວຍເຫລືອ ຕອນເຊົ້າມື້ນັ້ນອາກາດຫນາວສົມຄວນ ເຮົານອນຫົ່ມຜ້າຢູ່ນອກເຊຍເຮືອນ ຄິດເຖິງພາບເຫດການຕັ້ງແຕ່ຄືນ ທີ່ພໍ່ຖືກຈັບໄປມັນແລ່ນເຂົ້າສູ່ສາຍຕາແລະ ມັນສະຫມອງຄືກັນກັບຮູບເງົາ ເຫັນປະຊາຊົນເປັນຮ້ອຍໆຢືນຈຸ້ມກັນຢູ່ປະຕູເຂົ້າຄ້າຍ ຄິດເຖິງຄວາມເວົ້າຂອງພໍ່ຕູ້ສອງຄົນຢູ່ຮ້ານກາເຟ ເຫັນທະຫານພວມຄຸມປະຊາຊົນອອກຈາກຫ້ອງຂັງຂຸມໃຕ້ດິນ ບັງຄັບໃຫ້ໄປຖາງຫຍ້າເຮັດອານາໄມຕາມບໍລິເວນຄ້າຍ ບາງຄົນຍ່າງໄປໄດ້ສອງ

ສາມກ້າວຂາພັບລົງກັບບາດ ທະຫານ ຈັບ ດຶງແຂນຂື້ນ ຫນິດແຮງ. ສຽງປືນດັງຂື້ນ ມີ ນັດຊ້ອນ ສັນຍານໃຫ້ທຸກ ຄົນ ລົງ ມືເຮັດວຽກ ເຮົາ ຫລົງ ພົກ ຄິງຄ້າຍຄືກັນກັບຕື່ນ ສຽງປືນ.

– ອຸ່ນເຮືອນລຸກແມ້ລູກ!

ສຽງຂອງແມ່ປຸກດັງຂື້ນຢູ່ຂ້າງ ເຮົາ ມືນ ຕາ ເຫັນ ແມ່ ພວມນັ່ງຄ້ຽວຫມາກ ສາຍຕາຫລຽວແນມອອກນອກເຮືອນ ບໍ່ມີຈຸດຫມາຍແດດສ່ອງໄປທົ່ວພື້ນເຮືອນ ນ້ຳຫມອກຍັງ ຕົກລົງສາຍຄາບໍ່ເຊົາ.

– ມື້ນີ້ແມ່ບໍ່ໄປສວນບໍ?

– ແມ່ວ່າຊິໄປເສຍແຫນງປາຫາດຈັບ ນັບແຕ່ພໍ່ເຈົ້າ ຖືກຈັບບໍ່ໄດ້ໄປຈອບເບິງຈັກເທື່ອ.

– ເຮົາຊິເອົາແຫໄປຫວ່ານເອົາປານຳ.

ສຽງລົດເຊແອມເຊດັງວືງມາແຕ່ເຫນືອບ້ານແລ້ວຜ່ອນ ສຽງລົດປຸດຢູ່ບ່ອນທີ່ມັນປຸດໄດ້ ໑ ເດືອນຜ່ານມາ ເຮົາລຸກ ຢືນແນມອອກໄປທາງເບື້ອງທ່າ. ແມ່ກໍຢືນຫລຽວແນມໄປ ຄືກັນ ໃບຫນ້າຂອງເພິ່ນຊີດຂາວຜິດປົກກະຕິທັງແມ່ ແລະ ເຮົາຢືນແນມຊອມເບິ່ງເຫດການ ດ້ວຍຄວາມຮ້ອນຮົນຫົວ ໃຈ ແຕ່ແລ້ວພາບທີ່ສະທ້ອນໃຈໄດ້ປາກົດອອກມາໃຫ້ເຫັນ

ປ່າງແຈ້ງຂາວ ແມ່ຫລິງເວົ້າອອກມາວ່າ:

– ພໍ່ເຈົ້າມາແລ້ວເດ້ອຸ່ນເຮືອນ!

ພວກທີ່ຖືກຈັບໄປນຳກັນ ໔ ຄົນພວມໃຊມສອງແຂນ ພໍ່ຄ່ອຍໆຍ່າງເຂົ້າເດີນບ້າ ຊຶ່ງມີລຸງກວນບ້ານ ແລະ ທະຫານຜູ້ຫນຶ່ງຍ່າງລົມກັບຕາມຫລັງ, ສາຍຕາຂອງທຸກຄົນຫລຽວແນມເບິ່ງເຮົາ ແລະ ແມ່ປີ້ນຊີ້ຢູ່ເທິງເຮືອນປານຫລັກກິໃລ. ໃບຫນ້າຂອງແມ່ມ້ານເຫລືອງສາຍຕາບົ່ງບອກເຖິງຄວາມຜິດຫວັງທີ່ສຸດໃນຊີວິດ, ແມ່ ແລະ ເຮົາຍ່າງລົງເຮືອນໄປຮັບຕ້ອນເອົາພໍ່ທັງກົນນ້ຳລາຍລົງຄໍ ດ້ວຍຄວາມຂົມຂື່ນຫົວໃຈ ນ້ຳຕາໄຫລຫລັ່ງເບົ້າອາບລົງສູ່ແກ້ມເຮົານັ່ງປີ້ນຫລັງໃສ່ພໍ່ຈັບມືຂອງເພິ່ນທັງສອງເບື້ອງ ພາດໃສ່ບ່າເຈັບຂຶ້ນເທິງເຮືອນບໍ່ມີໃຜຖາມໃຜໃນເວລານັ້ນ ທຸກຢ່າງເຕັມໄປດ້ວຍຄວາມຄຽດແຄ້ນຂົມຂື່ນ. ປະຊາຊົນຜູ້ຮັກແພງພາກັນທະຍອຍມາຖາມຂ່າວຄາວ ທຸກຄົນເຫັນແລ້ວຕ່າງກໍສະຫລົດໃຈປາກບໍ່ອອກ ໃບຫນ້າເກີສະແດງອອກເຖິງຄວາມຜິດຫວັງໃນຊີວິດຂອງພໍ່ ມັນເຮັດໃຫ້ເຮົາ...

– ອຸ່ນເຮືອນ ສະພາບຂອງພໍ່ລູກກໍເຫັນແລ້ວ ມື້ອື່ນນີ້ຂໍໃຫ້ລູກຂາຍເຂົ້ານຳເອົາເງິນໄປມອບໃຫ້ເຂົາຢູ່ບ້ານເກີນຈຳນວນ ໕໐.໐໐໐ ກີບ.

– ເງິນອີຫຍັງພໍ່?

– ທຸກຄົນທີ່ຈັບໄປຂັງ ຕ້ອງ ເສຍ ເງິນ ຫມົດ ທຸກ ຄົນ ເປັນການປັບໄຫມ.

– ໄຫມເລື່ອງໃດ?

– ເລື່ອງເຮົາໄດ້ເຂົ້າຫລາຍ  ເຂົາຫາວ່າເຮົາເອົາອິດສະຫລະມາເຮັດຊ່ວຍ.

ຄວາມເວົ້າຂອງພໍ່ແຜ່ວເບົາ  ສາຍຕາແນມເບິງເລົ້າເຂົ້າຕັ້ງຢູ່ຂ້າງເຮືອນເບື້ອງທ່ານ້ຳຢ່າງບໍ່ມີອາໄລໄຍດີ. ສ່ວນແມ່ພວມດັງໄຟຕົ້ມປາຮາກໄມ້ຢູ່ເຮືອນໄຟ. ພໍ່ກາຍເປັນຄົນເປ້ຍລ່ອຍໄປພາຍຫລັງທີ່ຖືກຄຸມຂັງຢູ່ຫ້ອງໃຕ້ດິນເປັນ ເວລາ ໑ ເດືອນກ່ວາ. ເຮົາປະຕິບັດຕາມຄຳສັ່ງຂອງພໍ່ ຂາຍເຂົ້າ ແລະ ຫມູອີກ ໓ ໂຕໄດ້ເງິນ ໗໐.໐໐໐ ກີບ.  ນຳເອົາ ໕໐.໐໐໐ ມອບໃຫ້ເຈົ້ານາຍຢູ່ບ້ານເກີນ  ສ່ວນເຫລືອມອບໃຫ້ແມ່ໃຊ້ຈ່າຍໃນການຂົນຂວາຍເອົາຢາ ມາປົວພໍ່ໃຫ້ດີຢູ່ໃນລະພາບເດີມ.

ສະຖານະການໃນປີດັ່ງກ່າວ  ເລີ່ມຮຸນແຮງຂື້ນເລື້ອຍໆ ປະຊາຊົນບໍ່ເປັນອັນຢູ່ອັນນອນ ຜູ້ຮ້າຍອ້າຍຂະໂມຍຫລາຍທີ່ສຸດ. ປະຊາຊົນຖືກຈັບໄປຂັງທໍລະມານບໍ່ຂາດແຕ່ລະມື້ ສ້າງຄວາມຫວາດຫວັ່ນຢ້ານກົວແກ່ປະຊາຊົນທີ່ສຸດ. ຕາມ

ແມ່ນ້ຳງື່ມແຕ່ລະມື້ມີຄົນຕາຍເນົ່າໄຫລຟູລົງມາແຕ່ເຫນືອ, ແຕ່ຊາກສົບເຕັມໄປດ້ວຍຮອຍມີດ ແລະລູກປືນ ພໍ່ຂອງເຮົາອາການດີຂຶ້ນຕຸ້ຍພີກ່ວາແຕ່ກ່ອນພໍຍ່າງຫາວໄປມາໄດ້ສົມຄວນບຳເຮືອນຊານ, ຄືນເດືອນ ໔ ເພັງແສງເດືອນຂາວນວນສ່ອງລົງມາອາບທົ່ວພື້ນດິນ ໃບຕອງກ້ວຍຕ້ອງກັບແສງເດືອນລົມພັດໂກວໄປມາອອກແສງມາບມິບບໍ່ຂາດ ບັນຍາກາດພາຍໃນບ້ານຍັງເຄັ່ງຕຶງ, ບ່າວສາວບໍ່ກ້າອອກໄປຫລິ້ນໄປທ່ຽວສຽງແຄນເຄີຍດັງເລາະບ້ານຍາມກາງຄືນຈືດຈາງຫາຍໄປບໍ່ຜິດຫຍັງກັບບ່ອນຝັງຊາກສົບຄົນຕາຍ.

– ອຸ່ນເຮືອນມານັ່ງໃກ້ພໍ່ກັບແມ່ພີ້ດ.

ເຮົາວາງກະຕ່າ ຊຶ່ງແມ່ມອບໃຫ້ເປັນຜູ້ສານຕາງພໍ່ໄວ້ກັບພື້ນເຮືອນຫຍັບເຂົ້າໄປໃກ້ໆພໍ່ແມ່ດ້ວຍຄວາມປະຫວາດໃຈເລັກນ້ອຍ. ສາຍຕາຂອງເພິ່ນທັງສອງຫລຽວແນມເບິ່ງເຮົາບໍ່ລົດລະ.

– ອຸ່ນເຮືອນ ດຽວນີ້ລູກຄຶດວ່າຫາກຢູ່ຕໍ່ໄປຊິເປັນແນວໃດ ? ເບິ່ງບ້ານເບິ່ງເມືອງດູມີອັນໃດເປັນທີ່ເພິ່ງພາອາໄສ?

ເຮົານັ່ງຊຶ່ງຄຶດຢູ່ດົນເຕີບ ຍັງບໍ່ຕອບຄຳຖາມຂອງພໍ່ຈັກຄວາມ ແຕ່ເພິ່ນເວົ້າຕໍ່ອີກວ່າ :

– ເສັ້ນທາງທີ່ຊິນຳໃຫ້ລູກ ມີອານາຄົດສົດໃສນັ້ນມີຢູ່

ແຕ່ຫາກຍາກແດ່.

– ແນວໃດລະພໍ່ ?

– ລູກຄົງຊິເຂົ້າໃຈຕ່ວາ, ເມື່ອຕອນເຮົາພວມຟາດເຂົ້າ ៤ ເດືອນກ່ອນປູ່ໄຮ່ໄດ້ມີຫຍັງໃຫ້ລູກເຫັນ?

– ໂອ້...! ເຮົາເຂົ້າໃຈແລ້ວ.

ເຮົາເງີຍຫນ້າເບິ່ງພໍ່ແມ່ ໃບຫນ້າຂອງເພິ່ນຍິ້ມແຍ້ມແຈ່ມໃສອອກມາ ເປັນເທື່ອທຳອິດ ນັບແຕ່ອອກຄຸກມາ ທັງຄຶດເຖິງເຫດການເມື່ອຄືນ ៤ ເດືອນຫລັງປູ່ໄຮ່ໃບຫນ້າຂອງພະນັກງານຄົນຫນຶ່ງໃນຈຳນວນ ៦໐ ກ່ວາຄົນໄດ້ລອຍວົນວຽນຢູ່ກັບສາຍຕາ...

– ນ້ອງຊາຍໄປຫລິ້ນລະຄອນນຳພວກອ້າຍຕິ.

– ລະອາຍ.

– ນັກປະຕິວັດບໍ່ຕ້ອງລະອາຍຈັກເທື່ອ.

ແສງໄຟຮຸ່ງອອກຈາກກອງທີ່ດັງດ້ວຍໄມ້ມີແຕ່ດ້ວນໃຫຍ່ແຈ້ງໄປທົ່ວບໍລິເວນເດີ່ນລານເຂົ້າ ບັນດາອ້າຍເອື້ອຍນ້ອງ ๑໐ ຄອບຄົວພື້ນໄຮ່ຕິດກັບກໍມາຊຸມແຊວມ່ວນຊື່ນເບິ່ງລະຄອນຫົວຈົນນ້ຳຕາໄຫລພະນັກງານຄົນນັ້ນດຶງແຂນເຮົາອອກໄປສູ່ເວທີ ແລ້ວປະກາດຕໍ່ບັນດາອ້າຍນ້ອງຫມົດທຸກຄົນຮູ້ວ່າ: ເປັນຜູ້ຮ້ອງເພງລຳວົງສາມັກຄີ ຊົນຊາດລາວ, ຕໍ່

ສູ້ມີໄຊ. ທີ່ຈິງແລ້ວເຮົາບໍ່ໄດ້ຮ້ອງ ສະຫາຍອ້າຍນ້ອງຜູ້ນັ້ນ
ເປັນຜູ້ຮ້ອງເອງ ຈຸດປະສົງຂອງລາວກໍເພື່ອປາກຝຶກຫັດໃຫ້
ມີໃຈກ້າແຂງ, ນັບແຕ່ມື້ນັ້ນມາອ້າຍນ້ອງຜູ້ນັ້ນກໍທ່ຽວໄປຫາ
ເຮົາປູ່ຖຽງໄຮ່ ຈົນແກ່ເຂົ້າຂຶ້ນເລົ້າບໍ່ມີໂອກາດພົບກັນ...

ເຮົາຕັດສິນໃຈເດີນໄປຕາມເສັ້ນທາງ ພໍ່ແມ່ຊີ້ນຳ ທັງ
ເປັນເສັ້ນທາງທີ່ເຮົາມັກ ເພື່ອຕໍ່ສູ້ຍາດແຍ່ງເອົາເອກະລາດ
ແລະ ຄວາມຍຸດຕິທຳມາສູ່ປະເທດລາວຂອງເຮົາ ເຖິງວ່າ
ເສັ້ນທາງທີ່ເຮົາກ້າວເດີນໄປ ເຕັມໄປດ້ວຍຄວາມຍາກ ລຳ
ບາກທຸກປະການກໍຕາມ, ແຕ່ມັນກໍ່ມີແສງສະຫວ່າງເບື້ອງ
ທາງໃຫ້ເຫັນໄດ້ເຖິງບັນຫາ. ໃຜເປັນຜູ້ຕໍ່ສູ້ເອົາເອກະລາດ
ເອົາຄວາມຍຸດຕິທຳມາສູ່ປະເທດຊາດ ແລະ ປະຊາຊົນຢ່າງ
ແທ້ຈິງ? ແລະ ໃຜເປັນຜູ້ທໍລະຍົດຕໍ່ປະຊາຊົນ ຂາຍຊາດ
ຂູດເນື້ອເຖືອຫນັງປະຊາຊົນ ເຂົາຕໍ່ສູ້ເພື່ອຫຍັງ?

ດ້ວຍເຫດນີ້, ນັບແຕ່ມື້ນັ້ນເປັນຕົ້ນມາເຮົາອອກຈາກ
ບ້ານ ເຂົ້າສົມທົບກັບກຳລັງຮັກຊາດ ດ້ວຍຄວາມຈົງຮັກ
ພັກດີຊື່ສັດຕໍ່ຜູ້ນຳພາ ເຊື່ອແນ່ວ່າຈະໄດ້ຮັບໄຊຊະນະໃນບັ້ນ
ທ້າຍຢ່າງແນ່ນອນ. ມື້ທຳອິດທີ່ເຮົາຍ່າງໄປຫາເສັ້ນທາງ
ດັ່ງກ່າວ ຄວາມ ອົບອຸ່ນ ທີ່ໄດ້ ຮັບບໍ່ຜິດຫຍັງກັບພໍ່ແມ່ໃຫ້
ຄວາມອົບອຸ່ນແກ່ລູກ.

ພິມທີ່ໂຮງພິມແຫ່ງຊາດ
ພິມຈໍານວນ 10.000 ຫົວ ຂະໜາດ 13×18,4
ພິມແລ້ວວັນທີ 10.11.78

ລາຄາ 200 ກີບ